








# ຄໍາແນະນໍາ ສໍາລັບ ການພັດທະນາ ກະສິກໍາປ່າໄມ້ ໃນພາກພື້ນອາຊຽນ

ຂຽນໂດຍ: ພະນັກງານປ່າໄມ້ ປະຈໍາພາກພື້ນອາຊຽນ

2019

asean

one vision
one identity
one community

# ຄໍາແນະນໍາ ສໍາລັບ
# ການພັດທະນາ ກະສິກໍາປ່າໄມ້
# ໃນພາກພື້ນອາຊຽນ

ຂຽນໂດຍ: ພະນັກງານປ່າໄມ້ ປະຈໍາພາກພື້ນອາຊຽນ

2019

ກອງເລຂາອາຊຽນ

ນະຄອນຫຼວງຈາກາຕາ

The Association of Southeast Asian Nations (ASEAN) was established on 8 August 1967. The Member States are Brunei Darussalam, Cambodia, Indonesia, Lao PDR, Malaysia, Myanmar, Philippines, Singapore, Thailand and Viet Nam.

The ASEAN Secretariat is based in Jakarta, Indonesia.

**For inquiries, contact:**
The ASEAN Secretariat
Community Relations Division (CRD)
70A Jalan Sisingamangaraja
Jakarta 12110, Indonesia
Phone: (62 21) 724-3372, 726-2991
Fax: (62 21) 739-8234, 724-3504
E-mail: public@asean.org

Catalogue-in-Publication Data

ASEAN Guidelines for Agroforestry Development
Jakarta, ASEAN Secretariat, May 2019

630.059
1. ASEAN – Agriculture – Forestry
2. Sustainable Development – SDG

ISBN 978-602-5798-35-1

ISBN 978-602-5798-35-1
9 786025 798351

[ASEAN] Association of Southeast Asian Nations. 2019. ASEAN Guidelines for Agroforestry Development [in Lao]. Authors: Catacutan DC, Finlayson RF, Gassner A, Perdana A, Lusiana B, Leimona B, Simelton E, Öborn I, Galudra G, Roshetko JM, Vaast P, Mulia R, Lasco RL, Dewi S, Borelli S, Yasmi Y. Jakarta, Indonesia: ASEAN Secretariat.

**ASEAN: A Community of Opportunities for All**

Translated into  Lao by Vongsavanh V (Revolution Translation Asia Ltd)
The original English version of this publication is kept by ASEAN Secretariat, Jakarta

The text of this publication may be freely quoted or reprinted, provided proper acknowledgement is given and a copy containing the reprinted material is sent to the Community Relations Division (CRD) of the ASEAN Secretariat, Jakarta.

General information on ASEAN appears online at the ASEAN Website: www.asean.org

Copyright Association of Southeast Asian Nations (ASEAN) 2019.
All rights reserved.

# ບົດນຳ

ຄຳແນະນຳ ສຳລັບ ການພັດທະນາ ກະສິກຳປ່າໄມ້ ໃນພາກພື້ນອາຊຽນ ສະບັບນີ້ ແມ່ນເປັນຂີດໝາຍສຳຄັນ ສູ່ການເພີ້ມ ຄວາມຈະເລີນຮຸ່ງເຮືອງ, ການເຊື່ອມຕໍ່, ການປັບຕົວ ແລະ ຄວາມໝັ້ນຄົງຂອງ ປະຊາຊົນໃນ ບັນດາປະເທດສະມາຊິກອາຊຽນ. ໂດຍລວມແລ້ວ, ຄຳແນະນຳສະບັບນີ້ ປະກອບເປັນ ຂອບວຽກໜຶ່ງ ສຳລັບ ການພັດທະນາ.

ຄຳແນະນຳ ສະບັບນີ້ ແມ່ນຜົນໄດ້ຮັບຈາກ ວິໄສທັດ ແລະ ແຜນຍຸດທະສາດ ສຳລັບ ການຮ່ວມມື ອາຊຽນ ໃນທາງດ້ານ ອາຫານ, ກະສິກຳ ແລະ ປ່າໄມ້ ປີ 2016–2025 ເຊິ່ງໄດ້ຖືກຮັບຮອງໂດຍ ບັນດາລັດຖະມົນຕີ ກະສິກຳ ແລະ ປ່າໄມ້ ອາຊຽນ ໃນປີ 2016. ການຮັບຮອງດັ່ງກ່າວນັ້ນ ໄດ້ນຳໄປສູ່ ການຕັດສິນໃຈ ສ້າງ ຄຳແນະນຳ ສຳລັບ ການພັດທະນາ ກະສິກຳປ່າໄມ້ ໃນບັນດາປະເທດສະມາຊິກອາຊຽນ. ຂັ້ນຕອນການປຶກສາຫາລື ກັບພາກສ່ວນກ່ຽວຂ້ອງ ໃນພາກພື້ນນີ້ ກວມເອົາພາກສ່ວນກ່ຽວຂ້ອງ ບໍ່ພຽງແຕ່ ຈາກຂະແໜງການ ກະສິກຳ ແລະ ປ່າໄມ້ ເທົ່ານັ້ນ ແຕ່ຍັງກວມເອົາ ຂະແໜງການອື່ນໆ ເຊັ່ນວ່າ ການປ່ຽນແປງສະພາບອາກາດ, ພະລັງງານ ແລະ ແຫຼ່ງນ້ຳ.

ພວກເຮົາຄາດຄະເນວ່າ ຄຳແນະນຳສະບັບນີ້ ຈະສົ່ງເສີມ ການຮ່ວມມື ຫຼາຍຂະແໜງການ ແລະ ການປະສານງານ ລະຫວ່າງ ຂະແໜງການຕ່າງໆ (ດິນ, ເສດຖະກິດ, ນ້ຳ, ພະລັງງານ, ກະສິກຳ, ປ່າໄມ້, ອາຫານ, ລ້ຽງສັດ, ປະມົງ) ພາຍໃນ ບັນດາປະເທດສະມາຊິກອາຊຽນ. ພວກເຮົາຍັງຄາດຫວັງວ່າ ຄຳແນະນຳ ສະບັບນີ້ ຈະກະຕຸ້ນ ການພັດທະນາ ນະໂຍບາຍ ແລະ ແຜນງານຕ່າງໆ ຢ່າງມີຈຸດສຸມ ສຳລັບ ວຽກງານ ກະສິກຳປ່າໄມ້ ໃນບັນດາປະເທດສະມາຊິກ ເຊິ່ງຈະປະກອບສ່ວນໃຫ້ ການປັບປຸງ ຊີວິດການເປັນຢູ່ ແລະ ເພີ້ມພູນ ຖານຊັບສິນຂອງ ກະສິກອນຫຼາຍລ້ານຄົນ ໃນພາກພື້ນນີ້, ພ້ອມທັງ ເພີ້ມການສະໜອງອາຫານ ທີ່ພວກເຂົາຜະລິດ ແລະ ປັບປຸງສິ່ງແວດລ້ອມ ແລະ ເພີ້ມ ຄວາມສາມາດໃນການປັບຕົວ ຂອງຂະແໜງການນີ້ ເຂົ້າກັບ ຄວາມບໍ່ແນ່ນອນຂອງ ເຫດການຮຸນແຮງ ທີ່ເປັນຜົນມາຈາກ ສະພາບດິນຟ້າອາກາດ ທີ່ປ່ຽນແປງໄປ. ນອກຈາກນັ້ນແລ້ວ, ພວກເຮົາຍັງຄາດຫວັງວ່າ ຄຳແນະນຳສະບັບນີ້ ຈະສົ່ງເສີມ ການຮ່ວມມືໃຫ້ດີຂຶ້ນກວ່າເກົ່າ ລະຫວ່າງ ບັນດາປະເທດສະມາຊິກ ໃນການແລກປ່ຽນຄວາມຮູ້ ດ້ານວິຊາການ ແລະ ການພັດທະນານະໂຍບາຍ, ສົ່ງເສີມການຄ້າຂ້າມຊາຍແດນ ໃຫ້ເພີ້ມຫຼາຍຂຶ້ນ ໃນທາງດ້ານ ຜະລິດຕະພັນກະສິກຳປ່າໄມ້ ແລະ ສົ່ງເສີມ ຜົນປະໂຫຍດຈາກລະບົບນິເວດ. ທັງໝົດເລົ່ານັ້ນ ຈະສະໜັບສະໜູນ ການເຊື່ອມສານ ໃຫ້ໃກ້ເຂົ້າ ແລະ ໄວຂຶ້ນກວ່າເກົ່າ ໃນການຮັກສາ ວິໄສທັດຂອງ ປະຊາຄົມເສດຖະກິດອາຊຽນ.

ອາຊຽນ ຊົມເຊີຍ ການຊ່ວຍເຫຼືອດ້ານວິຊາການ ຂອງ ສູນກະສິກຳປ່າໄມ້ໂລກ (ICRAF) ແລະ ອົງການອາຫານ ແລະ ການກະເສດ(FAO)

ຂອງອົງການສະຫະປະຊາຊາດ ທີ່ໄດ້ຊ່ວຍອຳນວຍຄວາມສະດວກ ໃນການດຳເນີນງານ ໂດຍການຮ່ວມມືກັບ ບັນດາຄູ່ຮ່ວມງານ ຈາກຫຼາຍພາກສ່ວນ ນັບຈາກ ບັນດາຫ້ອງການລັດຖະບານແຫ່ງຊາດ, ບັນດາສະຖາບັນຄົ້ນຄວ້າ ແລະ ການສຶກສາ ຂັ້ນສາກົນ, ພາກພື້ນ ແລະ ແຫ່ງຊາດ, ບັນດາອົງການຈັດຕັ້ງ ທີ່ບໍ່ສັງກັດລັດ, ແລະ ບັນດາກຸ່ມການຈັດຕັ້ງສັງຄົມ. ພວກເຮົາຍັງຂໍສະແດງຄວາມຂອບໃຈ ສຳລັບ ການນຳພາ, ການໃຫ້ທິດທາງ ແລະການຮ່ວມມື ຂອງຄະນະວິຊາການ ປ່າໄມ້ສັງຄົມ ອາຊຽນ ແລະ ການຊ່ວຍເຫຼືອດ້ານວິຊາການ ຈາກ ແຜນງານຮ່ວມມື ອາຊຽນ-ສະວິດ ກ່ຽວກັບ ປ່າໄມ້ສັງຄົມ ແລະ ການປ່ຽນແປງສະພາບອາກາດ ເຊິ່ງໄດ້ຮັບການສະໜັບສະໜູນຈາກ ລັດຖະບານ ປະເທດສະວິດ. ພວກເຮົາຍັງຂໍຂອບໃຈມາຍັງ ຄະນະຊ່ຽວຊານ ແມ່ນ້ຳຂອງ ດ້ານ ກະສິກຳປ່າໄມ້ ສຳລັບ ຄວາມໝັ້ນຄົງດ້ານ ສະບຽງອາຫານ ແລະ ໂພຊະນາການ, ກະສິກຳຍືນຍົງ ແລະ ຟື້ນຟູດິນ ເຊິ່ງເປັນສ່ວນໜຶ່ງຂອງ ແຜນງານສ້າງຕາໜ່າງກະສິກຳສາກົນ ຂອງປະເທດສະວິດ ທີ່ໄດ້ໃຫ້ການສະໜັບສະໜູນ ຢ່າງຕໍ່ເນື່ອງ ແລະ ໄດ້ສະໜອງປັດໃຈ ເຂົ້າໃນການດຳເນີນວຽກງານນີ້. ທ້າຍສຸດນີ້, ພວກເຮົາຂໍສະແດງຄວາມຮັບຮູ້ວ່າ ຖ້າຫາກບໍ່ມີ ຄວາມມຸ້ງຫວັງ ແລະ ການນຳພາ ຂອງບັນດາລັດຖະມົນຕີ ປະເທດສະມາຊິກອາຊຽນ, ຄຳແນະນຳສະບັບນີ້ ຈະບໍ່ສາມາດເກີດດອກອອກຜົນໄດ້.

ຍ້ອນມີ ຜູ້ປະກອບສ່ວນ ແລະ ຜູ້ສະໜັບສະໜູນ ຈາກຫຼາກຫຼາຍກຸ່ມ ທັງໃນພາກລັດ, ພາກບໍ່ສັງກັດລັດ ແລະ ພາກການຈັດຕັ້ງສັງຄົມ, ຂ້າພະເຈົ້າ ມີຄວາມໝັ້ນໃຈວ່າ ຄຳແນະນຳສະບັບນີ້ ຈະຊ່ວຍເລັ່ງລັດ ໃຫ້ມີການຮັບຮອງເອົາ ວຽກງານກະສິກຳປ່າໄມ້ ໃນທົ່ວອາຊຽນ ແລະ ສ້າງຜົນປະໂຫຍດ ໃນເວລາຕໍ່ມາ.

*ພະນັກງານປ່າໄມ້ ປະຈຳພາກພື້ນອາຊຽນ (ASOF)*

# ບົດສະແດງຄວາມຂອບໃຈ


ອາຊຽນ ຂໍສະແດງຄວາມຂອບໃຈມາຍັງການອຸທິດຕົນ ແລະ ການເຮັດວຽກໜັກຂອງບັນດາຜູ້ປະພັນ, ຜູ້ປະກອບສ່ວນ, ຜູ້ທົບທວນ ແລະ ທີ່ປຶກສາໃຫ້ ຄຳແນະນຳສະບັບນີ້ ເຊິ່ງຊື່ ແລະ ສະຖາບັນຂອງພວກເຂົາໄດ້ຂຽນໄວ້ຂ້າງລຸ່ມນີ້, ແລະ ຫຼາຍພາກສ່ວນກ່ຽວຂ້ອງ ທີ່ໄດ້ເຂົ້າຮ່ວມໃນຂັ້ນຕອນປຶກສາຫາລື ໃນພາກພື້ນນີ້.

ໂດຍສະເພາະແລ້ວ, ພວກເຮົາຂໍສະແດງຄວາມຂອບໃຈ ມາຍັງການກຳພາຂອງ ຄະນະສະເພາະກິດຂອງຄະນະວິຊາການອາຊຽນ ດ້ານປ່າໄມ້ສັງຄົມ ເຊິ່ງເປັນແຮງຂັບເຄື່ອນ ເຮັດໃຫ້ຄຳແນະນຳສະບັບນີ້ ປາກົດຜົນເປັນຈິງ.

ກອງເລຂາຂອງ ແຜນງານຮ່ວມມືອາຊຽນ-ສະວິດ ກ່ຽວກັບ ປ່າໄມ້ສັງຄົມ ແລະ ການປ່ຽນແປງສະພາບອາກາດ ກໍ່ສົມຄວນໄດ້ຮັບ ຄຳຂອບໃຈຈາກພວກເຮົາ ທີ່ໄດ້ປະສານງານໃຫ້ ບັນດາຄູ່ຮ່ວມງານປະກອບສ່ວນໃຫ້ ຄຳແນະນຳສະບັບນີ້.

ພວກເຮົາຍັງ ຂໍສະແດງຄວາມຂອບໃຈມາຍັງ ຫຼາຍກວ່າ 100 ຄົນ ຈາກບັນດາປະເທດສະມາຊິກອາຊຽນ ເຊິ່ງຮວມທັງ ບັນດາຜູ້ສ້າງນະໂຍບາຍ, ກຸ່ມກະສິກອນ ແລະ ສະຫະກອນ, ກຸ່ມຄຸ້ມຄອງປ່າໄມ້ຊຸມຊົນ, ຜູ້ປະຕິບັດງານ, ຊ່ຽວຊານດ້ານວິຊາການ ແລະ ນັກຄົ້ນຄວ້າ ທີ່ໄດ້ເຂົ້າຮ່ວມໃນ ການປຶກສາຫາລືເບື້ອງຕົ້ນ ເຊິ່ງໄດ້ຈັດຂຶ້ນໃນ ກອງປະຊຸມສຳມະນາ ຄັ້ງທີ 7 ຂອງ ຄະນະວິຊາການ ປ່າໄມ້ສັງຄົມ ອາຊຽນ ທີ່ແຂວງຊຽງໃໝ່ ປະເທດໄທ ລະຫວ່າງວັນທີ 12-14 ມິຖຸນາ 2017. ການປຶກສາຫາລືນັ້ນ ໄດ້ເນັ້ນໜັກໃສ່ ຈຸດປະສົງ ແລະ ເນື້ອໃນທົ່ວໄປ ຂອງຄຳແນະນຳສະບັບນີ້ ແລະ ການກຳນົດ ພື້ນຖານ ສຳລັບ ການພັດທະນາໃນເວລາຕໍ່ມາ. ທ້າຍສຸດນີ້, ພວກເຮົາຂໍສະແດງຄວາມຂອບໃຈຢ່າງອົບອຸ່ນ ມາຍັງ ສູນກະສິກຳປ່າໄມ້ໂລກ (ICRAF) ທີ່ໄດ້ນຳພາ ການກະກຽມ ຄຳແນະນຳສະບັບນີ້ ແລະ ໄດ້ປະສານງານກັບ ບັນດາພາກສ່ວນປະກອບສ່ວນດ້ານວິຊາການ, ຜູ້ທົບທວນເອກະສານ ແລະ ທີ່ປຶກສາ.


## ຜູ້ປະພັນ

### ສູນກະສິກຳປ່າໄມ້ໂລກ (ICRAF)

ບັນດາທ່ານ Delia C. Catacutan, Robert Finlayson, Anja Gassner, Aulia Perdana, Betha Lusiana, Beria Leimona, Elisabeth Simelton, Ingrid Öborn, Gamma Galudra, James M. Roshetko, Philippe Vaast, Rachmat Mulia, Rodel Lasco ແລະ Sonya Dewi

### ອົງການອາຫານ ແລະ ການກະເສດຂອງອົງການສະຫະປະຊາຊາດ (FAO)

ບັນດາທ່ານ Simone Borelli ແລະ Yurdi Yasmi

## ຜູ້ທົບທວນ ແລະ ຜູ້ປະກອບສ່ວນ

### ຊ່ຽວຊານດ້ານສະຖາບັນ

RECOFTC - ສູນເພື່ອປະຊາຊົນ ແລະ ປ່າໄມ້, ສູນເພື່ອການຄົ້ນຄວ້າປ່າໄມ້ສາກົນ, ແຜນງານແລກປ່ຽນຜະລິດຕະພັນເຄື່ອງປ່າຂອງດົງ,

ສູນພາກພື້ນອາຊີຕາເວັນອອກສ່ຽງໃຕ້ເພື່ອການສຶກສາ ແລະ ຄົ້ນຄວ້າ ກະສິກຳ, ຕາໜ່າງ ການສຶກສາ ແລະ ຄົ້ນຄວ້າ ກະສິກຳປ່າໄມ້ ປະເທດຟີລິປິນ.

### ຊ່ຽວຊານແຕ່ລະຄົນ

- ດຣ. Ir. Budiman Achmad
- ດຣ. Sanudin
- ດຣ. Muhamad Siarudin
- ດຣ. Ramon Razal
- ທ່ານ. Eva Fauziyah S.Hut, M.Sc
- ທ່ານ. Eduardo Queblatin
- ທ່ານນາງ. Rowena Cabahug

### ຄະນະສະເພາະກິດ ຂອງ ຄະນະວິຊາການ ປ່າໄມ້ສັງຄົມ ອາຊຽນ

*ປະເທດບຣູໄນ ດາຣູສະລາມ:* ທ່ານນາງ Noralinda Hj Ibrahim, ວ່າການຫົວໜ້າກົມປ່າໄມ້, ກະຊວງຊັບພະຍາກອນຕົ້ນຕໍ ແລະ ການທ່ອງທ່ຽວ

*ປະເທດກຳປູເຈຍ:* ທ່ານ Long Ratanakoma, ຮອງຫົວໜ້າກົມປ່າໄມ້ ແລະ ປ່າໄມ້ຊຸມຊົນ, ຄະນະບໍລິຫານປ່າໄມ້ ຂອງກະຊວງກະສິກຳ ປ່າໄມ້ ແລະ ການປະມົງ

*ປະເທດອິນໂດເນເຊຍ:* ດຣ. Bambang Supriyanto, ຫົວໜ້າກົມ ປ່າໄມ້ສັງຄົມ ແລະ ຮ່ວມມືດ້ານສິ່ງແວດລ້ອມ, ກະຊວງສິ່ງແວດລ້ອມ ແລະ ປ່າໄມ້

*ສປປ ລາວ:* ດຣ. ອຸປະກອນ ອາລຸນສະຫວັດ, ຫົວໜ້າພະແນກ ຄຸ້ມຄອງປ່າໄມ້ຊາວບ້ານ ແລະ ຜະລິດຕະພັນເຄື່ອງປ່າຂອງດົງ, ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້

*ປະເທດມາເລເຊຍ:* ດຣ. Megat Sany Megat Ahmad Supian, ພະແນກຄຸ້ມຄອງ ຊີວະນາໆພັນ ແລະ ປ່າໄມ້, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

*ປະເທດມຽນມາ:* ດຣ. Ei Ei Swe Hlaing, ຜູ້ຊ່ວຍຫົວໜ້າ ສະຖານບັນຄົ້ນຄວ້າປ່າໄມ້, ກົມປ່າໄມ້, ກະຊວງອະນຸລັກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ

*ປະເທດຟີລິບປິນ:* ທ່ານ Nonito M. Tamayo, ຫົວໜ້າຫ້ອງການຄຸ້ມຄອງປ່າໄມ້, ກົມສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ

*ປະເທດສິງກະໂປ:* ທ່ານ Hassan Ibrahim, ຫົວໜ້າ, ຊີວະນາໆພັນ (ເທິງບົກ), ພະແນກສູນຊີວະນາໆພັນແຫ່ງຊາດ, ສະພາສວນອຸທິຍານແຫ່ງຊາດ, ສວນພຶກສາຊາດ ສິງກະໂປ

*ປະເທດໄທ:* ດຣ. Komsan Rueangritsarakul, ພະນັກງານວິຊາການປ່າໄມ້, ລະດັບວິຊາຊີບ, ຫ້ອງການຄຸ້ມຄອງປ່າໄມ້ຊຸມຊົນ, ກົມປ່າໄມ້ແຫ່ງຊາດ

*ປະເທດຫວຽດນາມ:* ທ່ານ Dinh Van Tuyen, ພະນັກງານ ປະຈຳ ພະແນກປົກປ້ອງ ແລະ ຄຸ້ມຄອງປ່າໄມ້, ກົມປົກປ້ອງປ່າໄມ້, ຄະນະບໍລິຫານປ່າໄມ້ ປະເທດຫວຽດນາມ, ກະຊວງກະສິກຳ ແລະ ພັດທະນາຊຸມຊົນ

### ຄະນະຊ່ຽວຊານແມ່ນ້ຳຂອງ ດ້ານ ກະສິກຳປ່າໄມ້ ສຳລັບ ຄວາມໝັ້ນຄົງດ້ານ ສະບຽງອາຫານ ແລະ ໂພຊະນາການ, ກະສິກຳຍືນຍົງ ແລະ ຟື້ນຟູດິນ

ບັນດາທ່ານ Andrew Noble, Anja Gassner, Bao Huy, David Gritten, Delia C. Catacutan, Dian Sukmajaya, Doris Capistrano, Ei Ei Swe Hliang, Elisabeth Simelton, Göran Bergkvist, Horst Weyerhaeuser, Ingrid Öborn, Kim Soben, Long Ratanakoma, Mai Van Trinh, Maria Estrella A. Penunia, Niall O'Connor, Ngo The An, Nguyen Van Bo, Robert Finlayson,

Ronnakorn Triraganon, Sararin Phaengam, Sigrun Dahlin, Stepha McMullin, Srichai Saengcharnchai, Tran Minh Tien, Yurdi Yasmi

## ທີ່ປຶກສາ

ທ່ານ Dian Sukmajaya, ພະນັກງານຂັ້ນນຳຂອງ ພະແນກ ອາຫານ ກະສິກຳ ແລະ ປ່າໄມ້, ກົມພັດທະນາຂະແໜງການ, ກົມປະຊາຄົມເສດຖະກິດອາຊຽນ, ກອງເລຂາອາຊຽນ

ທ່ານ Doris Capistrano, ທີ່ປຶກສາອາວຸດໂສ, ແຜນງານຮ່ວມມື ອາຊຽນ-ສະວິດ ກ່ຽວກັບ ປ່າໄມ້ສັງຄົມ ແລະ ການປ່ຽນແປງສະພາບອາກາດ

# ສາລະບານ


1. ປະຫວັດຄວາມເປັນມາ ແລະ ຂອບເຂດຂອງ ຄຳແນະນຳ ........ 1
2. ຈຸດປະສົງ ຂອງ ຄຳແນະນຳ ........ 3
3. ຜູ້ນຳໃຊ້ເປົ້າໝາຍ ........ 4
4. ຫຼັກການຊີ້ນຳ ........ 6

4.1. ຫຼັກການດ້ານການປົກຄອງ ........ 6

ຫຼັກການທີ 1: ສ້າງແວດລ້ອມສົ່ງເສີມ ........ 6

ຫຼັກການທີ 2: ຮັບປະກັນປະສິດທິພາບ ດ້ານຄວາມສາມາດໃນການຈັດຕັ້ງ ........ 7

ຫຼັກການທີ 3: ສະໜັບສະໜູນ ການຮ່ວມມືຢ່າງມີປະສິດທິພາບ ແລະ ການຕັດສິນໃຈແບບມີສ່ວນຮ່ວມ ........ 8

4.2. ຫຼັກການດ້ານເສດຖະກິດ ........ 9

ຫຼັກການທີ 4: ຮັບຮູ້ເຖິງຄຸນຄ່າ ຂອງສິນຄ້າ ແລະ ຜົນປະໂຫຍດຈາກລະບົບນິເວດວິທະຍາ ........ 9

ຫຼັກການທີ 5: ສົ່ງເສີມສິ່ງແວດລ້ອມ ສຳລັບ ການລົງທຶນດ້ານກະສິກຳປ່າໄມ້ ແລະ ການຕະຫຼາດ ........ 10

4.3. ຫຼັກການດ້ານສິ່ງແວດລ້ອມ ........ 11

ຫຼັກການທີ 6: ຮັກສາ ແລະ ສົ່ງເສີມ ຜົນປະໂຫຍດຈາກລະບົບນິເວດ ຢູ່ໃນ ຟາມ ແລະ ພື້ນທີ່ທຳມະຊາດ ........ 11

ຫຼັກການທີ 7: ສ້າງຄວາມເຂົ້າໃຈ ແລະ ຄຸ້ມຄອງ ການຊົດເຊີຍ ........ 12

4.4. ຫຼັກການດ້ານສັງຄົມ-ວັດທະນາທຳ ........ 13

ຫຼັກການທີ 8: ຮັບຮູ້ ແລະ ເຄົາລົບນັບຖື ຄວາມຮູ້, ຮີດຄອງ ແລະ ທາງເລືອກ ໃນທ້ອງຖິ່ນ ........ 13

ຫຼັກການທີ 9: ສະໜັບສະໜູນ ຄວາມສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມໃນສັງຄົມ ........ 13

ຫຼັກການທີ 10: ຮັບປະກັນ ການປົກປ້ອງສິດທິຄອບຄອງ ........ 14

4.5. ຫຼັກການດ້ານ ການອອກແບບວິຊາການ ........ 15

ຫຼັກການທີ 11: ອອກແບບ ທາງເລືອກດ້ານ ກະສິກຳປ່າໄມ້ ໂດຍອີງຕາມສະພາບ ........ 15

ຫຼັກການທີ 12: ຄັດເລືອກເອົາ ອົງປະກອບທາງດ້ານກະສິກຳປ່າໄມ້ ແບບມີສ່ວນຮ່ວມ ........ 17

4.6. ຫຼັກການດ້ານ ການສື່ສານ ແລະ ການຂະຫຍາຍ ........................................18
ຫຼັກການທີ 13: ສື່ສານຄວາມຮູ້ກ່ຽວກັບ ກະສິກຳປ່າໄມ້ ໃຫ້ໄດ້ຢ່າງມີປະສິດທິພາບ 18
ຫຼັກການທີ 14: ວາງແຜນການ ເພື່ອການຂະຫຍາຍ ຢ່າງມີປະສິດທິພາບ ແລະ ເພື່ອຄວາມຍືນຍົງ ........................................19
5. ຂໍ້ພິຈາລະນາ ໃນການຈັດຕັ້ງປະຕິບັດ ........................................20
5.1. ພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງຝ່າຍປົກຄອງ ........................................20
5.2. ການວາງແຜນ ແລະ ການເງິນ ........................................21
5.3. ການຄົ້ນຄວ້າ ແລະ ການຮຽນຮູ້ຕໍ່ເນື່ອງ ........................................22
5.4. ການຕິດຕາມ ແລະ ປະເມີນຜົນ ........................................23
5.5. ການຄຸ້ມຄອງຄວາມຮູ້ ........................................24
ເອກະສານຊ້ອນທ້າຍ 1. ການສ້າງ ຄຳແນະນຳ ສະບັບນີ້ ........................................25
ເອກະສານຊ້ອນທ້າຍ 2. ກະດາດຂາວ: ........................................27
ເອກະສານຊ້ອນທ້າຍ 3. ສະພາບການຂອງ ຄຳແນະນຳ ໃນລະດັບສາກົນ ........................................29
ເອກະສານຊ້ອນທ້າຍ 4. ເອກະສານ ແນະນຳໃຫ້ ອ່ານ ເພີ່ມຕື່ມ ........................................32

## ພາກທີ 1

# ປະຫວັດຄວາມເປັນມາ ແລະ ຂອບເຂດຂອງ ຄຳແນະນຳ

ວິໄສທັດ ແລະ ແຜນຍຸດທະສາດ ສຳລັບ ການຮ່ວມມືອາຊຽນ ໃນທາງດ້ານ ອາຫານ, ກະສິກຳ ແລະ ປ່າໄມ້ ປີ 2016– 2025 ດັ່ງທີ່ໄດ້ຮັບອະນຸມັດໃນກອງປະຊຸມ ກະສິກຳ ແລະ ປ່າໄມ້ ຄັ້ງທີ 38 ຂອງບັນດາ ລັດຖະມົນຕີອາຊຽນ ໃນປີ 2016 ແມ່ນມີເປົ້າໝາຍເພື່ອຮັບປະກັນວ່າ "ແຫຼ່ງຊັບພະຍາກອນປ່າໄມ້ ໄດ້ຮັບການຄຸ້ມຄອງຢ່າງຍືນຍົງ ໃນລະດັບທ້ອງຖິ່ນ ເພື່ອຕອບສະໜອງຕາມຄວາມຕ້ອງການຂອງສັງຄົມ ໃນທາງດ້ານ ເສດຖະກິດສັງຄົມ ແລະ ວັດທະນາທຳ ຂອງຮຸ່ນຄົນປະຈຸບັນ ແລະ ຮຸ່ນຄົນຕໍ່ໄປ, ແລະ ປະກອບສ່ວນດ້ານບວກ ໃຫ້ການພັດທະນາຢ່າງຍືນຍົງ".

ໂດຍຮັບຮູ້ເຖິງ ການປະກອບສ່ວນຂອງ ວຽກງານກະສິກຳປ່າໄມ້ ໃຫ້ການບັນລຸ ຄວາມໝັ້ນຄົງດ້ານສະບຽງອາຫານ, ການສົ່ງເສີມ ໃຫ້ມີການປັບຕົວ ແລະ ຫຼຸດຜ່ອນ ການປ່ຽນແປງສະພາບອາກາດ, ແລະ ການຫຼຸດຜ່ອນ ດິນເຊື່ອມໂຊມ; ສຳລັບ ຫຼາຍເປົ້າໝາຍຂອງການພັດທະນາຢ່າງຍືນຍົງ; ແລະ ໃນຄວາມພະຍາຍາມ ເພື່ອສ້າງຄວາມເຂັ້ມແຂງໃຫ້ການເຊື່ອມຕໍ່ລະຫວ່າງ ປ່າໄມ້ ແລະ ການຜະລິດອາຫານ ໂດຍນຳໃຊ້ ວິທີການແບບເຊື່ອມສານ ເພື່ອຄຸ້ມຄອງດິນ ພ້ອມທັງ ການສົ່ງເສີມ ການຄຸ້ມຄອງປ່າໄມ້ຢ່າງຍືນຍົງນັ້ນ,ກອງປະຊຸມ ຄັ້ງທີ 20 ຂອງ ບັນດາພະນັກງານປ່າໄມ້ ປະຈຳພາກພື້ນອາຊຽນ ຈຶ່ງໄດ້ຕົກລົງເຫັນດີ ສ້າງຄຳແນະນຳກ່ຽວກັບ ກະສິກຳປ່າໄມ້ ໃນພາກພື້ນອາຊຽນ. ກອງປະຊຸມຄັ້ງທີ 39 ຂອງບັນດາລັດຖະມົນຕີ ກະສິກຳ ແລະ ປ່າໄມ້ ອາຊຽນ ໄດ້ຮັບຮອງເອົາຄຳຄິດເຫັນ ເພື່ອສ້າງຄຳແນະນຳ ໃຫ້ເປັນຜົນໄດ້ຮັບຕົ້ນຕໍໜຶ່ງ ຂອງການຮ່ວມມືອາຊຽນ ໃນທາງດ້ານປ່າໄມ້ ໃນປີ 2018.

ສູນກະສິກຳປ່າໄມ້ໂລກ[1] ໄດ້ຮັບການສະເໜີຈາກ ຄະນະວິຊາການ ປ່າໄມ້ສັງຄົມ ອາຊຽນ ໂດຍຮ່ວມກັບ ອົງການອາຫານ ແລະ ການສະເສດ ຂອງອົງການສະຫະປະຊາຊາດ ແລະ ບັນດາຄູ່ຮ່ວມງານ[2] ຂອງໂຄງການຮ່ວມມືອາຊຽນ-ສະວິດ ກ່ຽວກັບ ປ່າໄມ້ສັງຄົມ ແລະ ການປ່ຽນແປງສະພາບອາກາດ ໃຫ້ກະກຽມ ຫຼັກການຊີ້ນຳ ເພື່ອສະໜັບສະໜູນການພັດທະນາ ກະສິກຳປ່າໄມ້ ໃນບັນດາປະເທດສະມາຊິກອາຊຽນ. ຄຳແນະນຳສະບັບນີ້ ຖືວ່າ ມີຄວາມຈຳເປັນ ເພື່ອບັນລຸ ວິໄສທັດ ແລະ ແຜນຍຸດທະສາດ ຂອງຂະແໜງການ ອາຫານ, ກະສິກຳ ແລະ ປ່າໄມ້ ອາຊຽນ ໂດຍສະເພາະແມ່ນ ເສົາຫຼັກຍຸດທະສາດທີ 4: "ເພີ່ມການປັບຕົວເຂົ້າກັບ

1 ສູນກະສິກຳປ່າໄມ້ໂລກ ເປັນສະມາຊິກຂອງ CGIAR, ເປັນການຮ່ວມມືໃນທົ່ວໂລກ ເພື່ອການຄ້ຳປະກັນ ສະບຽງອາຫານ ໃນອະນາຄົດ ແລະ ເປັນຄູ່ຮ່ວມງານຂອງ ໂຄງການຮ່ວມມືອາຊຽນ-ສະວິດ ກ່ຽວກັບ ປ່າໄມ້ສັງຄົມ ແລະ ການປ່ຽນແປງສະພາບອາກາດ.

2 ສູນຄົ້ນຄວ້າປ່າໄມ້ສາກົນ, RECOFTC: ສູນເພື່ອປະຊາຊົນ ແລະ ປ່າໄມ້, ແຜນງານແລກປ່ຽນ ຜະລິດຕະພັນເຄື່ອງປ່າຂອງດົງ, ແລະ ສູນພາກພື້ນອາຊີຕາເວັນອອກສຽງໃຕ້ ເພື່ອການສຶກສາແລະຄົ້ນຄວ້າ ກະສິກຳ.

ການປ່ຽນແປງສະພາບອາກາດ, ໄພພິບັດທາງທຳມະຊາດ ແລະ ໄພອັນຕະລາຍອື່ນໆ", ແລະ ແຜນປະຕິບັດງານທີ 5 ກ່ຽວກັບ "ການຂະຫຍາຍ ລະບົບກະສິກຳປ່າໄມ້ ທີ່ສາມາດປັບຕົວໄດ້ ໃນບ່ອນທີ່ເໝາະສົມ ທາງດ້ານນິເວດວິທະຍາ ແລະ ທາງດ້ານເສດຖະກິດ".

ການປຶກສາຫາລືກັບ ຫຼາຍພາກສ່ວນກ່ຽວຂ້ອງ ເຊິ່ງຮວມທັງ ບັນດານັກຄົ້ນຄວ້າ, ຄູອາຈານ, ຜູ້ປະຕິບັດງານ, ຊ່ຽວຊານວິຊາການ, ຜູ້ຕາງໜ້າ ຂະແໜງການ ປ່າໄມ້-ກະສິກຳ-ສິ່ງແວດລ້ອມ ຈາກລັດຖະບານກາງ ແລະ ສະມາຄົມກະສິກອນ ແມ່ນໄດ້ຈັດຂຶ້ນ ຕັ້ງແຕ່ເດືອນມິຖຸນາ 2017. ຜູ້ປະພັນ ແລະ ຜູ້ປະກອບສ່ວນ ຂໍເນັ້ນໜັກໃຫ້ຮູ້ວ່າ ຄຳແນະນຳສະບັບນີ້ ໄດ້ຖືກອອກແບບມາເພື່ອຮັບປະກັນວ່າ ການພັດທະນາກະສິກຳປ່າໄມ້ ແມ່ນຕ້ອງອີງຕາມ ສະພາບການສະເພາະເຈາະຈົງ ຂອງບັນດາປະເທດສະມາຊິກອາຊຽນ. ເງື່ອນໄຂທາງ ເສດຖະກິດ-ສັງຄົມ, ນະໂຍບາຍ ແລະ ສິ່ງແວດລ້ອມ ຂອງແຕ່ລະປະເທດສະມາຊິກນັ້ນ ແມ່ນຈະຕ້ອງໄດ້ຮັບການພິຈາລະນາ ເທົ່າທຽມກັນ ໃນການອອກແບບ ການຊ່ວຍເຫຼືອໃດໜຶ່ງ ໃຫ້ວຽກງານກະສິກຳປ່າໄມ້.

ຄຳແນະນຳສະບັບນີ້ ມີເປົ້າໝາຍໃຫ້ນຳໃຊ້ໄດ້ກັບ ດິນ ແລະ ລະບົບນິເວດ ທຸກປະເພດ ທີ່ເປັນເປົ້າໝາຍຂອງ ການໃຫ້ຄວາມຊ່ວຍເຫຼືອ ດ້ານວຽກງານກະສິກຳປ່າໄມ້ ພາຍໃນ ບັນດາປະເທດສະມາຊິກອາຊຽນ ບໍ່ວ່າຈະເປັນ ປ່າໄມ້, ດິນປູກຝັງ, ເຂດສັນປັນນ້ຳ, ດິນເນີນສູງ, ທົ່ງພຽງ, ແຄມຝັ່ງ, ດິນທາມ ຫຼື ດິນດຳ. ມັນບໍ່ແມ່ນຄຳແນະນຳດ້ານວິຊາການ ເພື່ອສ້າງຕັ້ງວຽກງານກະສິກຳປ່າໄມ້ ແຕ່ມັນແມ່ນ ຂອບວຽກໃດໜຶ່ງ ເພື່ອຊ່ວຍອຳນວຍຄວາມສະດວກ ໃຫ້ການສົນທະນາ ໃນເວລາອອກແບບ ນະໂຍບາຍ, ແຜນງານ, ໂຄງການ ແລະ ການຊ່ວຍເຫຼືອ ດ້ານກະສິກຳປ່າໄມ້ ລະຫວ່າງ ແລະພາຍໃນບັນດາປະເທດສະມາຊິກອາຊຽນ. ການຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ແມ່ນເອົາຕາມຄວາມສະໝັກໃຈ ແລະ ບໍ່ໄດ້ເພີ່ມ ຫຼື ປ່ຽນແທນ ສັນຍາພາກພື້ນ ຫຼື ສິນທິສັນຍາທາງການ, ກົດໝາຍ ແລະ ນະໂຍບາຍແຫ່ງຊາດ ທີ່ມີຢູ່ແລ້ວນັ້ນ ແຕ່ມັນສອດຄ່ອງກັບ ຂອບວຽກຫຼາຍຂະແໜງການ ຂອງອາຊຽນ ກ່ຽວກັບ ການປ່ຽນແປງສະພາບອາກາດ: ກະສິກຳ ແລະ ປ່າໄມ້ ເພື່ອຄວາມໝັ້ນຄົງດ້ານສະບຽງອາຫານ[3], ແລະ ຄຳແນະນຳຂະແໜງການອື່ນໆ ຂອງອາຊຽນ ທີ່ກ່ຽວຂ້ອງກັບ ກະສິກຳປ່າໄມ້[4].

ເຖິງແມ່ນວ່າ ຫຼັກການ ແລະ ຄຳແນະນຳ ທີ່ໄດ້ອະທິບາຍໄວ້ໃນ ເອກະສານສະບັບນີ້ ມີເປົ້າໝາຍສຳລັບ ບັນດາປະເທດສະມາຊິກອາຊຽນ ກໍ່ຕາມ ແຕ່ວ່າ ມັນປະກອບດ້ວຍ ຫຼັກປັດຊະຍາກວມລວມ ທີ່ສາມາດຜັນຂະຫຍາຍໄດ້ ໃນປະເທດນອກອາຊຽນ.

1) ເພື່ອສົ່ງເສີມພາລະບົດບາດຂອງ ວຽກງານກະສິກຳປ່າໄມ້ ໃນການບັນລຸຜົ

---

3 ຂອບວຽກຫຼາຍຂະແໜງການ ຂອງອາຊຽນ ກ່ຽວກັບ ການປ່ຽນແປງສະພາບອາກາດ ໄດ້ຖືກສ້າງຂຶ້ນມາ ຈາກກອງປະຊຸມຂອງ ພະນັກງານ ພະນັກງານອາຊຽນ ກ່ຽວກັບ ກະສິກຳ ແລະ ປ່າໄມ້ ເພື່ອໃຫ້ເປັນກົນໄກສຳລັບ ການປະຕິບັດງານທີ່ມີການປະສານງານກັນ ເພື່ອແກ້ໄຂ ໄພອັນຕະລາຍຕໍ່ກັບ ຄວາມໝັ້ນຄົງດ້ານສະບຽງອາຫານ ຈາກການປ່ຽນແປງສະພາບອາກາດ. ມັນເນັ້ນໜັກໃສ່ ຂະແໜງການ ກະສິກຳ, ການປະມົງ ແລະ ປ່າໄມ້ ເພື່ອສ້າງວິທີການຫຼາຍຂະແໜງການ ສຳລັບ ການສ້າງແລະຈັດຕັ້ງປະຕິບັດ ນະໂຍບາຍ ໃຫ້ມີປະສິດທິພາບ.

4 ຄຳແນະນຳ ພາກພື້ນອາຊຽນ ສຳລັບ ການສົ່ງເສີມ ວິທີປະຕິບັດດ້ານກະສິກຳ ທີ່ສາມາດປັບຕົວເຂົ້າກັບ ສະພາບອາກາດ; ຄຳແນະນຳອາຊຽນ ກ່ຽວກັບ ບົດບາດຍິງ-ຊາຍໃນ ຄຳແນະນຳອາຊຽນ ກ່ຽວກັບ ການລົງທຶນຢ່າງມີຄວາມຮັບຜິດຊອບ.

## ພາກທີ 2

# ຈຸດປະສົງ ຂອງ ຄຳແນະນຳ

ນໄດ້ຮັບດ້ານເສດຖະກິດ, ສິ່ງແວດລ້ອມ ແລະ ສັງຄົມ ໄປພ້ອມໆກັນ ໃນລະດັບພື້ນທີ່ປູກຝັງລ້ຽງສັດ, ຄົວເຮືອນ ແລະ ພູມມີປະເທດ.

2) ເພື່ອຊີ້ນຳ ການສ້າງ ນະໂຍບາຍ, ຍຸດທະສາດ ແລະ ແຜນງານ ດ້ານກະສິກຳປ່າໄມ້ ໃນບັນດາປະເທດສະມາຊິກອາຊຽນ ແລະ ໃນການລົງທຶນ ຂອງຂະແໜງການເອກະຊົນ, ແລະ ໃນຫຼັກສູດກະສິກຳປ່າໄມ້ ຂອງການສຶກສາຊັ້ນສູງ.

3) ເພື່ອຊ່ວຍ ບັນດາປະເທດສະມາຊິກ ອາຊຽນ ບັນລຸເປົ້າໝາຍຂອງພວກເຂົາ ທີ່ກ່ຽວຂ້ອງກັບ ການຄ້ຳປະກັນສະບຽງອາຫານ, ການຂະຫຍາຍຕົວ "ສີຂຽວ" ຫຼື ຍືນຍົງ, ການຫຼຸດຜ່ອນ ການປ່ອຍອາຍແກັດເຮືອນແກ້ວ, ການຟື້ນຟູດິນ, ການປົກປ້ອງເຂດສັນປັນນ້ຳ, ຄວາມສະເໝີພາບຍິງ-ຊາຍ, ປ່າໄມ້ສັງຄົມ/ຊຸມຊົນ, ການປັບຕົວ ແລະ ການຫຼຸດຜ່ອນ ການປ່ຽນແປງສະພາບອາກາດ ແລະ ເປົ້າໝາຍພັດທະນາຢ່າງຍືນຍົງ.

4) ເພື່ອສ້າງຄວາມເຂັ້ມແຂງ ໃຫ້ການຮ່ວມມື ລະຫວ່າງ ບັນດາປະເທດສະມາຊິກອາຊຽນ ໂດຍການປະຕິບັດວຽກຮ່ວມກັນ ເພື່ອການພັດທະນາ ວຽກງານກະສິກຳປ່າໄມ້.

ຜູ້ນຳໃຊ້ເປົ້າໝາຍ ສຳລັບ ຄຳແນະນຳສະບັບນີ້ ຕົ້ນຕໍ ແມ່ນບັນດາ ຜູ້ສ້າງນະໂຍບາຍ

## ພາກທີ 3

# ຜູ້ນຳໃຊ້ເປົ້າໝາຍ

ຂອງບັນດາປະເທດສະມາຊິກ ແລະ ຕໍ່ມາ ແມ່ນບັນດາຜູ້ວາງແຜນງານ ແລະ/ຫຼື ໂຄງການ ໃນຂັ້ນສູນກາງ ແລະ ຂັ້ນລຸ່ມສູນກາງ, ນັກລົງທຶນພາຍໃນປະເທດ ແລະ ຕ່າງປະເທດ, ສະຖາບັນການສຶກສາຊັ້ນສູງ, ອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບ ວຽກງານກະສິກຳປ່າໄມ້ ແລະ ການພັດທະນາ. ບັນດາກຸ່ມຈັດຕັ້ງສັງຄົມ ສາມາດນຳໃຊ້ ຄຳແນະນຳສະບັບນີ້ ເພື່ອຈຸດປະສົງ ໃນການສົ່ງເສີມວຽກງານນີ້.

ບັນດາຫຼັກການຊີ້ນຳ ແມ່ນເຊື່ອມຕໍ່ເຊິ່ງກັນແລະກັນ, ເປັນຕົວແທນໃຫ້

**ກະສິກຳປ່າໄມ້** ແມ່ນເປັນການພົວພັນກັນຂອງ ກະສິກຳ ແລະ ຕົ້ນໄມ້ ເຊິ່ງຮວມທັງການນຳໃຊ້ຕົ້ນໄມ້ ໃນທາງດ້ານກະສິກຳ. ສິ່ງດັ່ງກ່າວນີ້ ກວມເອົາ ຕົ້ນໄມ້ປູກ ແລະ ພື້ນທີ່ກະສິກຳ, ການເຮັດກະສິກຳໃນປ່າ ແລະ ແຄມປ່າ, ແລະ ການປູກຕົ້ນໄມ້-ພືດ. ການພົບພັນກັນລະຫ່າງ ຕົ້ນໄມ້ ແລະ ອົງປະກອບອື່ນໆ ຂອງວຽກງານກະສິກຊາ ເຊັ່ນວ່າ ການລ້ຽງສັດ, ປາ ແລະ ສັດນໍ້າ ແມ່ນມີຄວາມສຳຄັນ ໃນລະດັບໃດໜຶ່ງ ຄື: ທົ່ງ (ບ່ອນປູກຕົ້ນໄມ້ ແລະ ພືດ ຮ່ວມກັນ), ຟາມ (ບ່ອນທີ່ຕົ້ນໄມ້ ເປັນອາຫານສັດ, ເປັນເຊື້ອໄຟ, ອາຫານ, ບ່ອນຢູ່ ຫຼື ເປັນລາຍຮັບ ຈາກຜະລິດຕະພັນ ເຊິ່ງຮວມທັງໄມ້) ແລະ ທິວທັດທຳມະຊາດ (ບ່ອນທີ່ ການນຳໃຊ້ດິນກະສິກຳ ແລະ ດິນປ່າໄມ້ ປະກອບເຂົ້າກັນ ເພື່ອກຳນົດ ຜົນປະໂຫຍດຈາກລະບົບນິເວດ). ໃນລະດັບປະເທດ ແລະ ລະດັບໂລກ, ປ່າໄມ້ ແລະ ກະສິກຳ ພົວພັນກັນ ທາງດ້ານນິເວດວິທະຍາ ແລະ ພົວພັນກັນທາງດ້ານ ນະໂຍບາຍ ທີ່ກ່ຽວຂ້ອງກັບ ການນຳໃຊ້ດິນ ແລະ ການຄ້າຂາຍ ແລະ ມີຄວາມສຳຄັນ ໃນທາງດ້ານ ການປ່ຽນແປງສະພາບອາກາດ ແລະ ບັນຫາສິ່ງແວດລ້ອມອື່ນໆ. ກະສິກຳປ່າໄມ້ ນຳໃຊ້ວິທີການ ກະສິກຳນິເວດວິທະຍາ ເຊິ່ງເນັ້ນໜັກໃສ່ ຫຼາຍໜ້າທີ່ ແລະ ການຄຸ້ມຄອງ ລະບົບທີ່ຊັບຊ້ອນ ແລະ ການປູກພືດຫຼາຍຊະນິດ ບໍ່ແມ່ນ ເນັ້ນໜັກໃສ່ ພຽງແຕ່ ການປູກພືດຊະນິດດຽວ. ຄຳສັບ "ຕົ້ນໄມ້" ແມ່ນໝາຍເຖິງ ຕົ້ນໄມ້ ຫຼື ພຸ່ມໄມ້, ພືດລົ້ມລູກທີ່ເປັນໄມ້, ຕົ້ນປາມ ແລະ ໄມ້ໄຜ່. ໃນລັກສະນະດຽວກັນນັ້ນ, ຄຳສັບ "ກະສິກຳ" ແມ່ນໝາຍເຖິງ ກິດຈະກຳຂອງມະນຸດທີ່ດຳເນີນຂຶ້ນ ເພື່ອຜະລິດອາຫານ, ເສັ້ນໄຍ ແລະ ເຊື້ອໄຟ ເປັນຫຼັກ ໂດຍການນຳໃຊ້ພືດ, ສັດ ແລະ ສັດນໍ້າ ຢ່າງລະມັດລະວັງ ແລະ ມີການຄວບຄຸມ. ກະສິກຳປ່າໄມ້ ໄດ້ຮັບການພິສູດແລ້ວວ່າ ມີຜົນປະໂຫຍດ ໃນທາງດ້ານ ການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການໃນຄອບຄົວ, ການສະໜອງພະລັງງານ ຈາກໄມ້ທີ່ເປັນເຊື້ອໄຟ, ການປົບຕົວ ແລະ ການຫຼຸດຜ່ອນ ການປ່ຽນແປງສະພາອາກາດ, ການຄວບຄຸມເຂດສັນປັນນໍ້າ, ການຟື້ນຟູດິນ ແລະ ການປັບປຸງ ກະສິກຳ-ຊີວະນາໆພັນ ແລະອື່ນໆ.

ກະສິກໍາປ່າໄມ້ ຍັງຊ່ວຍກະສິກອນ ຫຼຸດຜ່ອນຄວາມສ່ຽງ ດ້ານເສດຖະກິດ ແລະ ສິ່ງແວດລ້ອມ, ແລະ ເປັນແຫຼ່ງລາຍຮັບອັນສໍາຄັນ ສໍາລັບ ຄອບຄົວຊົນນະບົດ ໂດຍສະເພາະແມ່ນ ຄວາມສ່ຽງທີ່ເກີດຈາກ ການປ່ຽນແປງສະພາບອາກາດ. ກະສິກອນ ໃນອາຊີຕາເວັນອອກສ່ຽງໃຕ້ ໄດ້ເຮັດ ກະສິກໍາປ່າໄມ້ ເປັນເວລາດົນນານມາແລ້ວ ແລະ ປະເພດຂອງ ວຽກກະສິກໍາປ່າໄມ້ ສາມາດຈໍາແນກໄດ້ຈາກ ຕົ້ນກໍາເນີດຂອງມັນ ໃນພາກພື້ນນີ້ (ເອກະສານຊ້ອນທ້າຍ 2).

ຄວາມສໍາຄັນຂອງປາໄມ້ ສໍາລັບ ຄວາມອຸດົມສົມບູນຂອງໂລກນີ້ ແມ່ນເປັນທີ່ຮັບຮູ້ກັນ ເປັນຢ່າງດີ ແຕ່ວ່າ ຕົ້ນໄມ້ທີ່ຢູ່ນອກປ່າ ກໍ່ມີບົດບາດສໍາຄັນເຊັ່ນກັນ ໃນການຟື້ນຟູທິວທັດທໍາມະຊາດ ແລະ ໃນການບັນລຸເປົ້າໝາຍ ສາກົນແລະແຫ່ງຊາດ ໃນຂົງເຂດເຮັດກະສິກໍາ. ມີຫຼາຍວິທີທາງ ເພື່ອຟື້ນຟູ ພື້ນທີ່ປ່າເຊື່ອມໂຊມ ແຕ່ວ່າ ມີພຽງແຕ່ສອງສາມວິທີ ທີ່ສາມາດຟື້ນຟູ ຊີວະນາໆພັນ ແລະ ລະບົບນິເວດ ພ້ອມທັງ ຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ, ສ້າງລາຍຮັບ ແລະ ສ້າງຜົນປະໂຫຍດອື່ນໆ ຈາກລະບົບນິເວດ ໂດຍການມີສວນຮ່ວມ ແລະ ການສົ່ງເສີມຊຸມຊົນທ້ອງຖິ່ນ ໃນລັກສະນະທີ່ ວິທີ ກະສິກໍາປ່າໄມ້ ສາມາດເຮັດໄດ້. ໃນເວລາທີ່ໃຊ້ມັນເປັນເຄື່ອງມືໜຶ່ງ ສໍາລັບ **ການຟື້ນຟູປ່າ ແລະ ທັດສະນີຍະພາບ**, ວິທີກະສິກໍາປ່າໄມ້ ສາມາດສົ່ງເສີມ ຄຸນລັກສະນະຂອງດິນ ໃນທາງດ້ານ ກາຍຍະພາບ, ເຄມີ ແລະ ຊີວະວິທະຍາ ເຊິ່ງເປັນການເພີ້ມ ວັດຖຸຊີວະພາບ ແລະ ຄວາມອຸດົມສົມບູນໃນດິນ, ສົ່ງເສີມຮອບວຽນສານອາຫານ, ຄວບຄຸມການກັດເຊາະດິນ ແລະ ຄວບຄຸມນໍ້າ. ການຟື້ນຟູ ພື້ນທີ່ເຊື່ອມໂຊມ ດ້ວຍວິທີກະສິກໍາປ່າໄມ້ ສາມາດເພີ້ມ ຄວາມສາມາດ ໃນການປັບຕົວ ຂອງຊຸມຊົນ ຕໍ່ກັບ ໄພອັນຕະລາຍ ເຊິ່ງຮວມທັງ ໄພແຫ້ງແລ້ງ ແລະ ການຂາດເຂີນອາຫານ, ແລະ ຊ່ວຍໃນການຮັບຮອງ ແລະ ຫຼຸດຜ່ອນ ການປ່ຽນແປງສະພາບອາກາດ (FAO 2017).

ໃນປະຈຸບັນນີ້, ກະສິກໍາປ່າໄມ້ ໄດ້ຖືກເປັນທີ່ຮັບຮູ້ ເພີ້ມຂຶ້ນເລື້ອຍໆ ວ່າເປັນເຄື່ອງມືໜຶ່ງ ເພື່ອບັນລຸ ສົນທິສັນຍາສາກົນ ຫຼາຍສະບັບ, ພ້ອມທັງ ຂອບວຽກ ແລະ ເປົ້າໝາຍ ທີ່ບັນດາປະເທດສະມາຊິກອາຊຽນ ມີພັນທະຜູກມັດ (ເອກະສານຊ້ອນທ້າຍ 3). ໃນຈໍານວນນີ້, ສັນຍາປາຣີ ທີ່ມີຜົນບັງຄັບໃຊ້ ໃນວັນທີ 4 ພະຈິກ 2016 ໄດ້ກໍານົດຂອບວຽກສາກົນ ເພື່ອສົ່ງເສີມ ກະສິກໍາປ່າໄມ້ ຍ້ອນວ່າ ຕົ້ນໄມ້ໃນປ່າ ແລະ ໃນພື້ນທີ່ປູກຕົ້ນໄມ້ນັ້ນ ແມ່ນເປັນໃຈກາງຂອງ ການຫຼຸດຜ່ອນ ແລະ ການປັບຕົວກັບ ການປ່ຽນແປງສະພາບອາກາດ. ຍ້ອນວ່າ ຄວາມສາມາດຂອງຕົ້ນໄມ້ ໃນການດູດຊຶມ ອາຍກັກບອນ, ສະນັ້ນ ກະສິກໍາປ່າໄມ້ ຈຶ່ງສາມາດປະກອບສ່ວນໃຫ້ ການບັນລຸ “ການປະກອບສ່ວນທີ່ໄດ້ກໍານົດໄວ້ໃນທົ່ວປະເທດ” ຂອງບັນດາປະເທດສະມາຊິກອາຊຽນ. ກະສິກໍາປ່າໄມ້ ຍັງສາມາດເປັນເຄື່ອງມືໜຶ່ງ ໃນການບັນລຸ ເປົ້າໝາຍພັດທະນາຢ່າງຍືນຍົງ, ຊ່ວຍລຶບລ້າງໄພອຶດຫິວ, ຫຼຸດຜ່ອນຄວາມທຸກຍາກ, ສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ການມີສວນຮ່ວມໃນສັງຄົມ, ສະໜອງພະລັງງານ ບໍ່ແພງແລະສະອາດ, ປົກປ້ອງຊີວິດເທິງບົກ, ຟື້ນຟູດິນເຊື່ອມໂຊມ ແລະ ຕອບໂຕ້ກັບ ການປ່ຽນແປງສະພາບອາກາດ (ເອກະສານຊ້ອນທ້າຍ 2).

## ພາກທີ 4

# ຫຼັກການຊີ້ນຳ

ຫຼັກປັດສະຍາລວມ ທີ່ຊີ້ນຳ ການພັດທະນາ ການຊ່ວຍເຫຼືອດ້ານ ກະສິກຳປ່າໄມ້ (ຕົວຢ່າງ: ນະໂຍບາຍ, ແຜນງານ, ໂຄງການ ແລະ ການລົງທຶນທາງທຸລະກິດ) ໃນບັນດາປະເທດສະມາຊິກອາຊຽນ ໃນທຸກໆສະພາບການ ໂດຍບໍ່ຈຳແນກຕາມ ການປ່ຽນແປງ ເປົ້າໝາຍ ແລະ ຍຸດທະສາດຂອງພວກເຂົາ. ພາກນີ້ ກຳນົດ ຄຳແນະນຳຕົ້ນຕໍ ສຳລັບ ແຕ່ລະຫຼັກການ.

## 4.1. ຫຼັກການດ້ານການປົກຄອງ

### ຫຼັກການທີ 1: ສ້າງແວດລ້ອມສົ່ງເສີມ

ເມື່ອພິຈາລະນາເຖິງ ການຂາດເຂີນ ແວດລ້ອມດ້ານການປົກຄອງ ທີ່ຈະແຈ້ງ ສຳລັບ ວຽກງານກະສິກຳປ່າໄມ້ ໃນຫຼາຍປະເທດ ໃນອາຊີຕາເວັນອອກສ່ຽງໃຕ້, ສະນັ້ນ ມັນສຳຄັນທີ່ຕ້ອງສ້າງ ແວດລ້ອມດ້ານການປົກຄອງ ແລະ ນະໂຍບາຍ ທີ່ເປັນການສົ່ງເສີມ ການພັດທະນາ ນະໂຍບາຍ, ແຜນງານ ແລະ ການລົງທຶນໃນດ້ານ ກະສິກຳປ່າໄມ້. ໃນທຸກໆສະພາບການ, ຫຼັກການຂອງ ການປົກຄອງທີ່ດີ ທີ່ໄດ້ຖືກຮັບຮອງເອົາ ໃນຂະແໜງການຕ່າງໆນັ້ນ ເຊິ່ງຮວມທັງ ຫຼັກການຂອງ ອົງການອາຫານ ແລະ ການກະເສດ ກ່ຽວກັບ ການປົກຄອງ ການຄອບຄອງທີ່ດິນ, ການປະມົງ ແລະ ປ່າໄມ້ ຢ່າງມີຄວາມຮັບຜິດຊອບນັ້ນ (ມີຄວາມໂປ່ງໃສ, ເທົ່າທຽມກັນ, ມີຄວາມຮັບຜິດຊອບ ແລະ ທົ່ວເຖິງ)[5] ແມ່ນຕ້ອງໄດ້ປະຕິບັດຕາມ ໃນທຸກໆລະດັບຂອງ ການວາງແຜນ, ການຕັດສິນໃຈ ແລະ ການຈັດຕັ້ງປະຕິບັດ ການຊ່ວຍເຫຼືອດ້ານວຽກງານ ກະສິກຳປ່າໄມ້. ຄຳແນະນຳສະບັບນີ້ ປະກອບດ້ວຍ (ແຕ່ບໍ່ໄດ້ຈຳກັດຢູ່ພຽງແຕ່ເທົ່ານັ້ນ):

**ຄຳແນະນຳ 1.1.** ປະຕິບັດຕາມ ສົນທິສັນຍາ, ຂອບວຽກ, ສັນຍາ, ຍຸດທະສາດ ແລະ ແຜນງານ ສາກົນ ແລະ ພາກພື້ນທີ່ມີຢູ່ແລ້ວ ໃນເວລາສ້າງ ແຜນງານ, ໂຄງການ ຫຼື ນະໂຍບາຍ ກ່ຽວກັບ ວຽກງານກະສິກຳປ່າໄມ້.

**ຄຳແນະນຳ 1.2.** ສຶກສາ ກົດໝາຍ, ລະບຽບການ, ຍຸດທະສາດ ແລະ ແຜນງານ ພາຍໃນປະເທດ ທີ່ກ່ຽວຂ້ອງກັບ ກະສິກຳປ່າໄມ້ ແລະ ສ້າງນະໂຍບາຍໃໝ່ ຫຼື ດັດແກ້ ນະໂຍບາຍ ທີ່ມີຢູ່ແລ້ວ ເພື່ອຮັບປະກັນວ່າ ການພັດທະນາວຽກງານ ກະສິກຳປ່າໄມ້ ມີນະໂຍບາຍ ແລະ ການສະໜັບສະໜູນດ້ານກົດໝາຍ ທີ່ຈະແຈ້ງ.

**ຄຳແນະນຳ 1.3.** ສ້າງຕັ້ງ ແວດລ້ອມຂັ້ນສະຖາບັນ ສຳລັບວຽກງານ ກະສິກຳປ່າໄມ້. ປະເມີນ ໂຄງສ້າງສະຖາບັນ ທີ່ມີຢູ່ແລ້ວ ແລະ ແຕ່ງຕັ້ງສະຖາບັນທີ່ເໝາະສົມ ຫຼື ສ້າງ ສະຖາບັນໃໝ່ ທີ່ກວມເອົາ ບັນດາກະຊວງທີ່ກ່ຽວຂ້ອງ ໃນປະເທດສະມາຊິກອາຊຽນ ເພື່ອຮັບຜິດຊອບໃນການພັດທະນາ ວຽກງານກະສິກຳປ່າໄມ້ ໂດຍໃຫ້ກຳນົດ ໜ້າທີ່, ພາລະບົດບາດ ແລະ ຄວາມຮັບຜິດຊອບ ຢ່າງຈະແຈ້ງ.

---

5 ຄຳແນະນຳ ແບບສະໝັກໃຈ ກ່ຽວກັບ ການປົກຄອງ ການຄອບຄອງທີ່ດິນ, ການປະມົງ ແລະ ປ່າໄມ້ ຢ່າງມີຄວາມຮັບຜິດຊອບ ໃນສະພາບການຂອງ ການຄ້ຳປະກັນສະບຽງອາຫານແຫ່ງຊາດ. http://www.fao.org/docrep/016/i2801e/i2801e.pdf

**ຄຳແນະນຳ 1.4.** ສ້າງ ແຜນງານ, ຍຸດທະສາດ ຫຼື ແຜນການ ກະສິກຳປ່າໄມ້ແຫ່ງຊາດ ແລະ ສະໜັບສະໜູນ ການພັດທະນາ ໃນຂັ້ນລຸ່ມສູນກາງ ແລະ ຂັ້ນທ້ອງຖິ່ນ.

**ຄຳແນະນຳ 1.5.** ກຳນົດເງື່ອນໄຂ ແລະ ຂັ້ນຕອນທີ່ສົ່ງເສີມ ແລະ ສະໜັບສະໜູນ ການຮັບຮອງເອົາ ວຽກງານ ກະສິກຳປ່າໄມ້ ເຊັ່ນວ່າ ຄວາມໝັ້ນຄົງໃນການຄອບຄອງທີ່ດິນ, ການສົ່ງເສີມການເຂົ້າເຖິງຕະຫຼາດ ແລະ ປັບປຸງໂຄງລ່າງພື້ນຖານ.

**ຄຳແນະນຳ 1.6.** ສຶກສາວິທີການຕ່າງໆ ເພື່ອສະໜອງທຶນ ທີ່ເໝາະສົມ ແລະ ຕໍ່ເນື່ອງ ເພື່ອສະໜັບສະໜູນ ການພັດທະນາວຽກງານ ກະສິກຳປ່າໄມ້.

## ຫຼັກການທີ 2: ຮັບປະກັນປະສິດທິພາບ ດ້ານຄວາມສາມາດໃນການຈັດຕັ້ງ

ໂດຍອີງຕາມຫຼັກການທີ 1, ການພັດທະນາຄວາມສາມາດ ຂອງສະຖາບັນ ຫຼື ຫ້ອງການ ທີ່ຖືກແຕ່ງຕັ້ງ ຫຼື ສ້າງຂຶ້ນມາໃໝ່ ຫຼື ກົມ ພາຍໃນກະຊວງທີ່ກ່ຽວຂ້ອງ ແລະ ຄູ່ຮ່ວມງານຕົ້ນຕໍຂອງພວກເຂົາ ແມ່ນມີຄວາມສຳຄັນ ເພື່ອແລກປ່ຽນຄວາມຮູ້, ຖ່າຍທອດ ເທັກໂນໂລຢີ, ດຳເນີນການຄົ້ນຄວ້າ, ໃຫ້ການຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກໃຫ້ການວາງແຜນການ ໄດ້ຢ່າງມີປະສິດທິພາບ. ຄຳແນະນຳ ສະບັບນີ້ ປະກອບດ້ວຍ (ແຕ່ບໍ່ໄດ້ຈຳກັດຢູ່ພຽງແຕ່ເທົ່ານັ້ນ):

**ຄຳແນະນຳ 2.1.** ສ້າງຄວາມເຂັ້ມແຂງ ດ້ານ ຄວາມສາມາດ ຂອງສະຖາບັນ ທີ່ຮັບຜິດຊອບ ວຽກງານກະສິກຳປ່າໄມ້ ແລະ ບັນດາຄູ່ຮ່ວມງານ ຂອງສະຖາບັນນັ້ນ ໃນຂັ້ນສູນກາງ ແລະ ຂັ້ນລຸ່ມສູນກາງ ເພື່ອເຜີຍແຜ່ຄວາມຮູ້ ແລະ ທັກສະ ໄດ້ຢ່າງມີປະສິດທິພາບ, ໃຫ້ຄຳແນະນຳດ້ານວິຊາການ, ອຳນວຍຄວາມສະດວກໃຫ້ ການວາງແຜນ ແລະ ການຕັດສິນໃຈ ໃນຂັ້ນຕ່າງໆ, ແລະ ຕິດຕາມ ຜົນໄດ້ຮັບ ແລະ ຜົນກະທົບ.

**ຄຳແນະນຳ 2.2.** ລະບຸຕົວ ແລະ ປຸກລະດົມ ບັນດາຊ່ຽວຊານ ລາຍບຸກຄົນ ແລະ ຂັ້ນສະຖາບັນ ເພື່ອສົ່ງເສີມ ຄວາມສາມາດດ້ານວິຊາການ ສຳລັບ ການພັດທະນາ ວຽກງານກະສິກຳປ່າໄມ້ ໃນຂັ້ນຕ່າງໆ.

**ຄຳແນະນຳ 2.3.** ສົ່ງເສີມ ຄວາມສາມາດດ້ານການຄົ້ນຄວ້າ ໃນຂັ້ນສູນກາງ ເພື່ອດຳເນີນ ການຄົ້ນຄວ້າກ່ຽວກັບ ກະສິກຳປ່າໄມ້ ແບບມີສ່ວນຮ່ວມ ແລະ ເຊື່ອມຕໍ່ ຄວາມຮູ້ ເຂົ້າກັບ ນະໂຍບາຍ ໂດຍຜ່ານທາງ ການມີສ່ວນຮ່ວມໂດຍກົງ ໃນຂັ້ນຕອນວາງນະໂຍບາຍ ແລະ ວາງແຜນການ.

**ຄຳແນະນຳ 2.4.** ສົ່ງເສີມ ຄວາມສາມາດດ້ານກະສິກຳ ໃນ ຂັ້ນ ສູນ ກາງ ເພື່ອຊ່ວຍໃນການຖ່າຍທອດ ຄວາມຮູ້ ແລະ ທັກສະ ລະຫວ່າງ ແລະ ໃນກຸ່ມຂອງ ພາກສ່ວນກ່ຽວຂ້ອງຕ່າງໆ, ສະໜັບສະໜູນ ການເຈລະຈາ, ວາງແຜນງານ ແລະ ໂຄງການ ກ່ຽວກັບ ວຽກງານກະສິກຳ, ແລະ ສ້າງທາງເລືອກສຳລັບ ວຽກງານກະສິກຳປ່າໄມ້ ໃນສະພາບການທີ່ແຕກຕ່າງກັນ.

**ຄຳແນະນຳ 2.5.** ສ້າງຄວາມເຂັ້ມແຂງໃຫ້ ການຮ່ວມມື ສຳລັບ ການຄົ້ນຄວ້າ ແລະ ການເຂົ້າເຖິງຊຸມຊົນ ລະຫວ່າງ ລະບົບຄົ້ນຄວ້າແຫ່ງຊາດ ແລະ ລະບົບສົ່ງເສີມກະສິກຳ ແລະ ບັນດາອົງການຄົ້ນຄວ້າແລະພັດທະນາ ສາກົນ ເຊິ່ງຮວມທັງ ບັນດາສະຖາບັນການສຶກສາ.

**ຄຳແນະນຳ 2.6.** ສົ່ງເສີມ ການສຶກສາກ່ຽວກັບ ກະສິກຳປ່າໄມ້ ໂດຍການໃຫ້ການສະໜັບສະໜູນ ບັນດາວິທະຍາໄລ ແລະ

ມະຫາວິທະຍາໄລ ໃນການພັດທະນາຫຼັກສູດກະສິກຳປ່າໄມ້ ຜ່ານທາງຕາໜ່າງການສຶກສາຂັ້ນສູງ ທີ່ມີຢູ່ແລ້ວ ໃນພາກພື້ນນີ້.

**ຄຳແນະນຳ 2.7.** ລະບຸເຖິງຄວາມຕ້ອງການສະເພາະເຈາະຈົງ ຂອງພາກສ່ວນກ່ຽວຂ້ອງຕ່າງໆ ແລະ ໃຫ້ການຊ່ວຍເຫຼືອສະເພາະດ້ານ ສຳລັບ ຄວາມຕ້ອງການຕ່າງໆ ຂອງຜູ້ຄອບຄອງດິນຂະໜາດໃຫຍ່ (ຜູ້ສຳປະທານດິນ, ຟາມຂອງບໍລິສັດ) ແລະ ຜູ້ຄອບຄອງດິນຂະໜາດນ້ອຍ[6].

## ຫຼັກການທີ 3: ສະໜັບສະໜູນການຮ່ວມມືຢ່າງມີປະສິດທິພາບ ແລະ ການຕັດສິນໃຈແບບມີສ່ວນຮ່ວມ

ໂດຍພິຈາລະນາເຖິງ ລັກສະນະຂອງວຽກງານກະສິກຳປ່າໄມ້ ທີ່ມີຫຼາຍດ້ານ, ແນວທາງຂອງມັນທີ່ກຳລັງວິວັດທະນາການ ແລະ ການພົວພັນຂອງມັນ ກັບກະສິກຳ, ປ່າໄມ້ ແລະ ການນຳໃຊ້ດິນ; ການພົວພັນ ແລະ ການເຊື່ອມຕໍ່ຂອງມັນ ໃນລະດັບພື້ນທີ່ປູກຝັງ ກັບຂະແໜງການອື່ນໆ (ເຊັ່ນວ່າ: ລ້ຽງສັດ, ພະລັງງານ, ການລ້ຽງສັດນ້ຳ, ນ້ຳ, ການປ່ຽນແປງສະພາບອາກາດ, ແລະ ການດຳລົງຊີວິດ ໃນເຂດຊົນນະບົດ), ສະນັ້ນ ວິທີການໃດໜຶ່ງ ເພື່ອວາງແຜນການຊ່ວຍເຫຼືອດ້ານກະສິກຳປ່າໄມ້ ແລະ ການຮ່ວມມືຫຼາຍຂະແໜງການ ແລະ ການຕັດສິນໃຈແບບເຊື່ອມສານ ດັ່ງທີ່ໄດ້ອະທິບາຍໄວ້ໃນ ຂອບວຽກຫຼາຍຂະແໜງການ ຂອງອາຊຽນ ກ່ຽວກັບ ການປ່ຽນແປງສະພາບອາກາດ: ກະສິກຳ ແລະ ປ່າໄມ້ ເພື່ອຄວາມໝັ້ນຄົງດ້ານສະບຽງອາຫານ, ແມ່ນມີຄວາມຈຳເປັນ ສຳລັບ ການພັດທະນາກະສິກຳປ່າໄມ້ ຢ່າງມີປະສິດທິພາບ. ຄຳແນະນຳ ສະບັບນີ້ ປະກອບດ້ວຍ (ແຕ່ບໍ່ໄດ້ຈຳກັດຢູ່ພຽງແຕ່ເທົ່ານັ້ນ):

**ຄຳແນະນຳ 3.1.** ສົ່ງເສີມວິທີການແບບມີສ່ວນຮ່ວມ ແລະ ການມີສ່ວນຮ່ວມຂອງພາກສ່ວນກ່ຽວຂ້ອງທັງໝົດ ໃນລະດັບທີ່ເໝາະສົມ ສຳລັບ ການວາງແຜນ ແລະ ການຕັດສິນໃຈ ສຳລັບ ການວາງແຜນການແບບມີສ່ວນຮ່ວມ, ການກຳນົດເປົ້າໝາຍ ແລະ ການຈັດຕັ້ງປະຕິບັດການຊ່ວຍເຫຼືອດ້ານກະສິກຳປ່າໄມ້ ໂດຍສະເພາະແມ່ນ ໃນລະດັບຂອງຜູ້ດຳເນີນກິດຈະການຂະໜາດນ້ອຍ. ພາກສ່ວນກ່ຽວຂ້ອງຕ່າງໆນັ້ນ ອາດກວມເອົາ ບັນດາຜູ້ສ້າງນະໂຍບາຍ ແລະ ຜູ້ວາງແຜນການ ຈາກຂະແໜງການທີ່ກ່ຽວຂ້ອງ ຄື: ອຸດສາຫະກຳເອກະຊົນ, ນັກລົງທຶນ, ແລະ ຜູ້ສຳປະທານດິນ; ນັກຄົ້ນຄວ້າ; ອົງການຈັດຕັ້ງທີ່ບໍ່ສັງກັດລັດ; ຜູ້ໃຫ້ທຶນ ແລະ ຄູ່ຮ່ວມງານສາກົນ; ອົງການຈັດຕັ້ງກະສິກອນ ແລະ ສະຫະກອນ; ປະຊາຊົນບັນດາເຜົ່າ ຫຼື ກຸ່ມຊົນເຜົ່າສ່ວນນ້ອຍ; ແລະ ກຸ່ມແມ່ຍິງ ແລະ ກຸ່ມຜູ້ຜະລິດ (ຕິດພັນກັບຫຼັກການທີ 8).

**ຄຳແນະນຳ 3.2.** ຮັບປະກັນວ່າ ການຊ່ວຍເຫຼືອດ້ານກະສິກຳປ່າໄມ້ ແລະ ຜະລິດຕະພັນ ແລະ ການບໍລິການ ຂອງມັນ ໄດ້ຮັບເຂົ້າໃຈທີ່ດີຂຶ້ນ ແລະ ກວມຢູ່ໃນບັນດາຍຸດທະສາດຂະແໜງການ.

**ຄຳແນະນຳ 3.3.** ອອກແບບການຊ່ວຍເຫຼືອດ້ານ ກະສິກຳປ່າໄມ້ ໃນສະພາບການຂອງພື້ນທີ່ປ່າທັງໝົດ ແລະ ກ່ຽວຂ້ອງກັບ ການປ່ຽນແປງສະພາບອາກາດ ໃນອະນາຄົດ ພ້ອມທັງ

6 ການສະໜັບສະໜູນ ອາດກວມເອົາ ການຝຶກອົບຮົມ ໃນທາງດ້ານວິຊາການ ກ່ຽວກັບ ວຽກງານ ກະສິກຳປ່າໄມ້, ເຕັກນິກຫຼັງການເກັບກ່ຽວ, ການຕະຫຼາດ, ສິນເຊື່ອ ແລະ ການເງິນ.

ການປ່ຽນແປງດ້ານເສດຖະກິດ ແລະ ນະໂຍບາຍ ເພື່ອຮັບປະກັນວ່າ ຜົນກະທົບສະເພາະຈຸດ, ຜົນກະທົບນອກພື້ນທີ່, ຜົນກະທົບໄລຍະສັ້ນ ແລະ ຜົນກະທົບໄລຍະຍາວ ໄດ້ຮັບການພິຈາລະນາ, ຄຸ້ມຄອງ ແລະ ຕິດຕາມ ໃຫ້ສອດຄອງກັບ ມາດຕະຖານດ້ານ ສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ ທີ່ບັນດາປະເທດສະມາຊິກອາຊຽນ ໄດ້ຮັບຮອງເອົາ (ຕິດພັນກັບ ຫຼັກການທີ 11).

**ຄຳແນະນຳ 3.4.** ກວມເອົາ ແລະ ປຽບທຽບ ເປົ້າໝາຍ, ຜົນປະໂຫຍດ ແລະ ຄວາມຮັບຜິດຊອບ ທີ່ແຕກຕ່າງກັນ ຂອງພາກສ່ວນກ່ຽວຂ້ອງຕ່າງໆ ໃນພື້ນທີ່ປ່າເປົ້າໝາຍ ສຳລັບ ວຽກງານກະສິກຳປ່າໄມ້ ເຊິ່ງພວກທັງ ຜູ້ດຳເນີນກິດຈະການຂະໜາດນ້ອຍ, ກຸ່ມຜູ້ຜະລິດ ລາຍນ້ອຍ ແລະ ລາຍໃຫຍ່, ກຸ່ມປ່າໄມ້ຊຸມຊົນ, ການສຳປະທານຂະໜາດໃຫຍ່, ແລະ ລັດວິສາຫະກິດ (ຕິດພັນກັບ ຫຼັກການທີ 8, 9, 11).

**ຄຳແນະນຳ 3.5.** ນຳໃຊ້ເຄື່ອງມືກາງຫາວ ເພື່ອກຳນົດພື້ນທີ່ ທີ່ເໝາະສົມທີ່ສຸດ ສຳລັບ ວຽກງານກະສິກຳປ່າໄມ້ ໃນເຂດພື້ນທີ່ໃດໜຶ່ງ ໂດຍອີງຕາມ ຄວາມເໝາະສົມ ທາງດ້ານສິ່ງແວດລ້ອມ, ສັງຄົມ ແລະ ເສດຖະກິດ ເພື່ອຮັບປະກັນ ຜົນກະທົບຂະໜາດໃຫຍ່ ແລະ ເພື່ອຮັບປະກັນໃຫ້ເກີດຜົນປະໂຫຍດ (ຕິດພັນກັບ ຫຼັກການທີ 11)[7].

**ຄຳແນະນຳ 3.6.** ເຄົາລົບນັບຖື, ນຳໃຊ້ ແລະ/ຫຼື ສັງລວມ ລະບົບຄວາມຮູ້ດັ້ງເດີມ ໃນການຄົ້ນຄວ້າວິທະຍາສາດ, ການວາງແຜນ ແລະ ການຕັດສິນໃຈ (ຕິດພັນກັບ ຫຼັກການທີ 8).

**ຄຳແນະນຳ 3.7.** ຮັບປະກັນດ້ານ ການປະກອບສ່ວນຂອງ ວຽກງານກະສິກຳປ່າໄມ້ ໃຫ້ເປົ້າໝາຍທ້ອງຖິ່ນ ແລະ ສອດຄ່ອງກັບ ເປົ້າໝາຍແຫ່ງຊາດ, ຂອບວຽກອາຊຽນ, ຍຸດທະສາດ ແລະ ແຜນປະຕິບັດງານ ພ້ອມທັງ ສົນທິສັນຍາສາກົນ, ສົນທິສັນຍາລະຫວ່າງປະເທດ, ຂໍ້ຕົກລົງ, ເປົ້າໝາຍ ແລະ ຍຸດທະສາດຕ່າງໆ.

## 4.2. ຫຼັກການດ້ານເສດຖະກິດ

### ຫຼັກການທີ 4: ຮັບຮູ້ເຖິງຄຸນຄ່າ ຂອງສິນຄ້າ ແລະ ຜົນປະໂຫຍດຈາກລະບົບນິເວດວິທະຍາ

ວຽກງານກະສິກຳປ່າໄມ້ ໃຫ້ຜົນປະໂຫຍດຫຼາຍຢ່າງ ໃນທາງດ້ານ ສິນຄ້າ ແລະ ຜົນປະໂຫຍດຈາກລະບົບນິເວດ ສຳລັບ ຕະຫຼາດ, ຄົວເຮືອນ ແລະ ສິ່ງແວດລ້ອມ. ວຽກງານກະສິກຳປ່າໄມ້ ມັກຈະເປັນ ການປະຕິບັດດັ້ງເດີມ ເຊິ່ງໃນນັ້ນ ກະສິກອນ ເປັນເຈົ້າຂອງດິນ ເຊິ່ງໃນນັ້ນ ພວກເຮົາໄດ້ຖືກຮັບຮູ້, ໄດ້ຮັບຜົນປະໂຫຍດ ຫຼື ການຊົດເຊີຍ ສຳລັບ ການລົງທຶນໄລຍະຍາວຂອງພວກເຂົາ ເຊັ່ນວ່າ ລາຍຮັບໂດຍກົງຈາກ ຜະລິດຕະພັນກະສິກຳປ່າໄມ້ ແລະ/ຫຼື ຜົນປະໂຫຍດຈາກລະບົບນິເວດ. ຄຳແນະນຳ ສະບັບນີ້ ປະກອບດ້ວຍ (ແຕ່ບໍ່ໄດ້ຈຳກັດຢູ່ພຽງແຕ່ເທົ່ານັ້ນ):

7 ຕົວຢ່າງ: ເຄື່ອງມືຄຸ້ມຄອງປ່າໄມ້ຢ່າງຍືນຍົງ ຂອງອົງການອາຫານ ແລະ ການກະເສດ http://www.fao.org/sustainable-forest-management/ toolbox/tools/en/) ແລະ ຊຸດເຄື່ອງມືຂອງ ສູນກະສິກຳປ່າໄມ້ໂລກ (http://www.worldagroforestry.org/output?field_type_tid=756) ແລະ ການວາງແຜນນຳໃຊ້ທີ່ດິນ ແລະ ຜົນປະໂຫຍດຫຼາຍດ້ານຈາກສິ່ງແວດລ້ອມ (LUMENS: http://www.worldagroforestry.org/region/sea/ publications/detail?pubID=3447)

**ຄຳແນະນຳ 4.1.** ສົ່ງເສີມ ສິນຄ້າກະສິກຳປ່າໄມ້ ທຸກປະເພດ (ເຊັ່ນວ່າ: ເຄື່ອງໃຊ້ ແລະ ຜະລິດຕະພັນດິບ ສຳລັບ ການບໍລິໂພກ ແລະ ການຂາຍ) ທີ່ເປັນເອກະລັກ ແລະ/ຫຼື ການຢັ້ງຢືນສະເພາະ ເຊັ່ນວ່າ ການຄ້າຂາຍຢ່າງຍຸຕິທຳ ຫຼື ສິນຄ້າ "ສີຂຽວ", ແລະ ສ້າງຄວາມເຂັ້ມແຂງ ໃຫ້ການຊ່ວຍເຫຼືອ ຜູ້ດຳເນີນກິດຈະການຂະໜາດນ້ອຍ ເພື່ອສ້າງ ແລະ ບັນລຸ ເສດຖະກິດ ໃນລະດັບໃດໜຶ່ງ ເພື່ອໃຫ້ເກີດຜົນປະໂຫຍດ ຫຼາຍກວ່າ ຕ ອງໂສ້ມູນຄ່າກະສິກຳປ່າໄມ້ເທົ່ານັ້ນ.

**ຄຳແນະນຳ 4.2.** ເຄົາລົບນັບຖື ຄວາມຮູ້ທ້ອງຖິ່ນ ໃນການນຳໃຊ້ ຜະລິດຕະພັນກະສິກຳປ່າໄມ້ ເພື່ອຈຸດປະສົງຫຼາຍດ້ານ ເຊິ່ງຮວມທັງ ຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ, ທາງດ້ານຊີວະວິທະຍາ ແລະ ການຄ້າ, ແລະ ຮັບປະກັນໃຫ້ໄດ້ຮັບຜົນປະໂຫຍດ ເທົ່າທຽມກັນ ລະຫວ່າງ ພາກສ່ວນກ່ຽວຂ້ອງຕ່າງໆ (ຕິດພັນກັບຫຼັກການທີ່ 8, 9).

**ຄຳແນະນຳ 4.3.** ສະໜອງສິ່ງຈູງໃຈ ໄລຍະຍາວ, ການຈ່າຍເງິນ ຫຼື ລາງວັນ ສຳລັບ ຜົນປະໂຫຍດຈາກລະບົບນິເວດ ທີ່ໄດ້ມາຈາກ ວຽກງານກະສິກຳປ່າໄມ້ ເຊິ່ງມີຄວາມສຳຄັນ ສຳລັບ ເຂດສັນປັນນ້ຳ, ການຟື້ນຟູດິນ, ການດູດຊຶມອາຍກັກບ່ອນ ແລະ ການສົ່ງເສີມ ຊີວະນາໆພັນ ເຊິ່ງສ່ວນຫຼາຍແລວ ເປັນສິນຄ້າສາທາລະນະ (ຕິດພັນກັບ ຫຼັກການທີ 6).

**ຄຳແນະນຳ 4.5.** ເຊື່ອມສານ ຂໍ້ມູນກະສິກຳປ່າໄມ້ ເຂົ້າກັບ ຖານຂໍ້ມູນທົ່ວໂລກ, ພາກພື້ນ ແລະ ແຫ່ງຊາດ ເຊັ່ນວ່າ: ຕົ້ນໄມ້ໃນຟາມ, ປະເພດຂອງກະສິກຳປ່າໄມ້ ແລະ ອາຍກັກບ່ອນ, ທ່າແຮງໃນການ ຫຼຸດຜ່ອນຄວາມສ່ຽງຕໍ່ໄພພິບັດ, ການແຈກຢາຍທາງດ້ານພູມສາດ, ການຜະລິດ, ຜົນກຳໄລ ແລະ ລັກສະນະຂອງການຮັບຮອງເອົາ.

## ຫຼັກການທີ 5: ສ້າງເສີມສິ່ງແວດລ້ອມ ສຳລັບ ການລົງທຶນດ້ານກະສິກຳປ່າໄມ້ ແລະ ການຕະຫຼາດ

ການສ້າງແວດລ້ອມ ໃນບັນດາປະເທດສະມາຊິກອາຊຽນ ທີ່ເປັນການສົ່ງເສີມ ສິ່ງຈູງໃຈທາງກົງ ແລະ ທາງອ້ອມນັ້ນ ຈະຊຸກຍູ້ໃຫ້ ບັນດາບໍລິສັດ ແລະ ຜູ້ດຳເນີນກິດຈະການຂະໜາດນ້ອຍ ໃຫ້ລົງທຶນໄລຍະຍາວ ໃນວຽກງານກະສິກຳປ່າໄມ້. ການລົງທຶນດັ່ງກ່າວນັ້ນ ສາມາດຫັນໄປສູ່ຕະຫຼາດໄດ້ ຍົກເວັ້ນແຕ່ ໃນກໍລະນີຂອງ ການຜະລິດເປັນອາຫານ ໃນຂົງເຂດພື້ນທີ່ ທີ່ການເຂົ້າເຖິງຕະຫຼາດ ແລະ ປັດໃຈອື່ນໆ ເປັນອຸປະສັກ. ກົນໄກຕະຫຼາດໃໝ່ໆ ອາດມີຄວາມຈຳເປັນ ແຕ່ວ່າ ມັນອາດມີຜົນກະທົບກົງກັນຂ້າມ ໃນທາງດ້ານສັງຄົມ ແລະ ເສດຖະກິດ, ສະນັ້ນ ການສ້າງແວດລ້ອມສົ່ງເສີມການລົງທຶນ ວຽກງານກະສິກຳປ່າໄມ້ນັ້ນ ຕ້ອງສອດຄ່ອງກັບ ຄຳແນະນຳຂອງອາຊຽນ ກ່ຽວກັບ ການລົງທຶນ ດ້ວຍຄວາມຮັບຜິດຊອບ. ຄຳແນະນຳ ສະບັບນີ້ ປະກອບດ້ວຍ (ແຕ່ບໍ່ໄດ້ຈຳກັດຢູ່ພຽງແຕ່ເທົ່ານັ້ນ):

**ຄຳແນະນຳ 5.1.** ລະບຸ ແລະ ພັດທະນາ ແຜນການເງິນ ເຊິ່ງຮວມທັງ ສິນເຊື່ອສຳລັບຄືນທຸກຍາກ (ຕົວຢ່າງ: ໄລຍະຈ່າຍເງິນຄືນ ດົນກວ່າ ແລະ ອັດຕາດອກເບ້ຍຕ່ຳກວ່າ) ເພື່ອສະໜັບສະໜູນ ຕົວແບບທຸລະກິດກະສິກຳປ່າໄມ້ ສຳລັບ ຜູ້ດຳເນີນກິດຈະການຂະໜາດນ້ອຍ ແລະ ສຳລັບ ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ.

**ຄຳແນະນຳ 5.2.** ສ້າງ ນະໂຍບາຍ ທີ່ ສະໜັບສະໜູນ ການລົງທຶນໄລຍະຍາວ

ແຕ່ສາມາດປັບປຸ່ງໄດ້ ແລະ ການວາງແຜນນໍາໃຊ້ດິນ ໃນຂັ້ນສູນກາງ ແລະ ຂັ້ນລຸ່ມສູນກາງ ເພື່ອສ້າງຄວາມໝັ້ນໃຈໃຫ້ ຜູ້ໃຫ້ທຶນ ສໍາລັບ ການລົງທຶນໃນທຸລະກິດກະສິກໍາປ່າໄມ້.

**ຄໍາແນະນໍາ 5.3.** ໃຫ້ ການຊ່ວຍເຫຼືອ ດ້ານວິຊາການ ແລະ ສົ່ງເສີມການຄ້າຂາຍ ເພື່ອພັດທະນາ ຕ່ອງໂສ້ມູນຄ່າ ກະສິກໍາປ່າໄມ້ ແລະ ສ້າງຈຸດເຊື່ອມຕໍ່ກັບຕະຫຼາດ (ຕິດພັນກັບ ຫຼັກການທີ 4).

**ຄໍາແນະນໍາ 5.4.** ກໍານົດຂັ້ນຕອນ ທີ່ໂປ່ງໃສ ແລະ ງ່າຍ ສໍາລັບ ການແປຮູບ ແລະ ການຂາຍ ຜະລິດຕະພັນກະສິກໍາປ່າໄມ້ ເພື່ອກະຕຸ້ນ ການລົງທຶນຂະໜາດນ້ອຍ ແລະ ຂະໜາດໃຫຍ່.

**ຄໍາແນະນໍາ 5.5.** ຈັດການກັບ ຄວາມບໍ່ແນ່ນອນ ທາງເສດຖະກິດ ທີ່ເກີດຈາກ ຂະແໜງການ ອື່ນ ເຊິ່ງເປັນການຫຼຸດມູນຄ່າຂອງ ຜະລິດຕະພັນກະສິກໍາປ່າໄມ້ ຫຼື ຈໍາກັດໂອກາດ ສໍາລັບ ນັກລົງທຶນດ້ານກະສິກໍາປ່າໄມ້ ໂດຍສະເພາະແມ່ນ ຜູ້ດໍາເນີນກິດຈະການຂະໜາດນ້ອຍ.

**ຄໍາແນະນໍາ 5.6.** ໃຫ້ສິ່ງຈູງໃຈ ທາງກົງ ແລະ ທາງອ້ອມ ສໍາລັບການລົງທຶນດ້ານ ກະສິກໍາປ່າໄມ້ ທີ່ເກີດຜົນປະໂຫຍດກັບສັງຄົມ (ຕິດພັນກັບ ຫຼັກການທີ 4).

## 4.3. ຫຼັກການດ້ານສິ່ງແວດລ້ອມ

### ຫຼັກການທີ 6: ຮັກສາ ແລະ ສົ້ງເສີມ ຜົນປະໂຫຍດຈາກລະບົບນິເວດ ຢູ່ໃນ ຟາມ ແລະ ພື້ນທີ່ທໍາມະຊາດ

ຟາມກະສິກໍາປ່າໄມ້ ມັກຈະຕັ້ງຢູ່ໃນພື້ນທີ່ທໍາມະຊາດ ເຊິ່ງເຮັດໜ້າທີ່ຫຼາຍຢ່າງ ໃນເວລາດຽວກັນ. ໃນຫຼາຍກໍລະນີນັ້ນ, ພວກມັນແມ່ນຕັ້ງຢູ່ໃນ ເຂດເນີນສູງ ແລະ ເຂດສັນປັນນໍ້າ. ສະນັ້ນ, ນອກຈາກການຜະລິດອາຫານແລ້ວ, ການເຮັດກະສິກໍາປ່າໄມ້ ຍັງຈະມີຜົນຕໍ່ກັບ ລະບົບນິເວດຫຼາຍຢ່າງ. ສະນັ້ນ, ການພັດທະນາກະສິກໍາປ່າໄມ້ ຄວນຮັບປະກັນວ່າ ຜົນປະໂຫຍດຂອງລະບົບນິເວດ ທີ່ເກີດຈາກພື້ນທີ່ທໍາມະຊາດເລົ່ານີ້ ໄດ້ຮັບການອະນຸລັກ, ຟື້ນຟູ ຫຼື ປັບປຸງ. ການວາງແຜນດ້ວຍຄວາມເອົາໃຈໃສ່ ແລະ ການຄຸ້ມຄອງ ວຽກງານກະສິກໍາປ່າໄມ້ ຢ່າງຖືກຕ້ອງນັ້ນ ຄວນໄດ້ຮັບການສົ່ງເສີມ ເພື່ອໃຫ້ເກີດຜົນປະໂຫຍດດ້ານຊີວະວິທະຍາ ໂດຍບໍ່ໃຫ້ກະທົບກັບ ຜົນປະໂຫຍດທາງເສດຖະກິດ ແລະ ຜົນປະໂຫຍດອື່ນໆ. ຄໍາແນະນໍາ ສະບັບນີ້ ປະກອບດ້ວຍ (ແຕ່ບໍ່ໄດ້ຈໍາກັດຢູ່ພຽງແຕ່ເທົ່ານັ້ນ):

**ຄໍາແນະນໍາ 6.1.** ຮັບປະກັນວ່າ ການຊ່ວຍເຫຼືອວຽກງານ ກະສິກໍາປ່າໄມ້ ໄດ້ຖືກວາງແຜນ ເພື່ອຈຸດປະສົງ ໃນການບັນລຸ ຜົນປະໂຫຍດຫຼາຍດ້ານ ໃນເວລາດຽວກັນ ກໍ່ຄື ທາງດ້ານ ເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ໃນຫຼາຍລະດັບ ຈາກ ຟາມ ເຖິງ ພື້ນທີ່ປ່າທໍາມະຊາດ (ຕິດພັນກັບ ຫຼັກການທີ 3, 11).

**ຄໍາແນະນໍາ 6.2.** ຮັບຮູ້ ແລະ ປະເມີນ ຜົນປະໂຫຍດຂອງ ວຽກງານກະສິກໍາປ່າໄມ້ ໃນການຮັກສາ ແລະ ສົ່ງເສີມ ລະບົບນິເວດ ເຊິ່ງຮວມທັງ ການຟື້ນຟູປ່າ ແລະ ຄວາມສົມບູນຂອງປ່າ, ການຟື້ນຟູດິນເຊື່ອມໂຊມ, ການຕ້ານດິນເຈື່ອນ, ຫຼຸດຜ່ອນ ການປ່ຽນແປງ ສະພາບອາກາດ, ແລະ ບໍ່ໃຫ້ເກີດໄພແຫ້ງແລ້ງ (ຕິດພັນກັບ ຫຼັກການທີ 4, 11).

**ຄໍາແນະນໍາ 6.3.** ດໍາເນີນການປະເມີນຜົນກະທົບດ້ານສິ່ງແວ

ດລ້ອມ ກ່ອນຈັດຕັ້ງປະຕິບັດ ການຊ່ວຍເຫຼືອດ້ານ ກະສິກຳປ່າໄມ້ ຂະໜາດໃຫຍ່ ເຊິ່ງຮວມທັງ ການສ້າງຖານຂໍ້ມູນເບື້ອງຕົ້ນ ເພື່ອຕິດຕາມຜົນໄດ້ຮັບຈາກ ລະບົບນິເວດ.

**ຄຳແນະນຳ 6.4.** ສົ່ງເສີມ ທ່າຮັບ ດ້ານ ຊີວະນາໆພັນ ເພື່ອຊົດເຊີຍກັບ ການສູນເສຍ ຫຼື ຄວາມເສຍຫາຍ ທີ່ຫຼີກເວັ້ນບໍ່ໄດ້ ເຊິ່ງເກີດຈາກ ການພັດທະນາ ກະສິກຳປ່າໄມ້ ຫຼັງຈາກໄດ້ນຳໃຊ້ ມາດຕະຖານຫຼຸດຜ່ອນແລ້ວ.

**ຄຳແນະນຳ 6.5.** ພັດທະນາ ແລະ ຈັດຕັ້ງປະຕິບັດ ວິທີປະຕິບັດງານມາດຕະຖານ ໃນພາກສະໜາມ ໃນການສ້າງຕັ້ງ ແລະ ຄຸ້ມຄອງ ການຊ່ວຍເຫຼືອດ້ານກະສິກຳປ່າໄມ້ ເພື່ອຮັບປະກັນດ້ານ ການປະກອບສ່ວນຂອງພວກມັນ ໃຫ້ລະບົບນິເວດ (ຕິດພັນກັບ ຫຼັກການທີ 11, 12).

## ຫຼັກການທີ 7: ສ້າງຄວາມເຂົ້າໃຈ ແລະ ຄຸ້ມຄອງ ການຊົດເຊີຍ

ການຊົດເຊີຍ ແມ່ນການສ້າງຄວາມສົມດູນ ຂອງຜົນປະໂຫຍດ ທີ່ບໍ່ໄດ້ຮັບ ໃນເວລານັ້ນ. ການສ້າງຄວາມເຂົ້າໃຈ ແລະ ການຄຸ້ມຄອງ ການຊົດເຊີຍນັ້ນ ແມ່ນມີຄວາມສຳຄັນເປັນພິເສດ ໃນເວລາດໍາເນີນວຽກງານກະສິກຳປ່າໄມ້ ໃນກໍລະນີທີ່ ຕົ້ນໄມ້, ພືດລົ້ມລຸກ, ປາ ແລະ ສັດລ້ຽງ ເຊື່ອມໂຍງກັນ ໃນຕອນດິນດຽວກັນ. ການຊົດເຊີຍ ເກີດຂຶ້ນເປັນແຕ່ລະໄລຍະ ສຳລັບ ອົງປະກອບທີ່ແຕກຕ່າງກັນ ໃນວຽກງານກະສິກຳປ່າໄມ້ ແລະ ເກີດຂຶ້ນຊົ່ວຄາວ ສຳລັບ ການເຊື່ອມໂຍງ ຕົ້ນໄມ້ ໃຫ້ເປັນສ່ວນໜຶ່ງຂອງ ລະບົບກະສິກຳ ເຊິ່ງອາດເຮັດໃຫ້ ໄລຍະເວລາ ລະຫວ່າງ ການລົງທຶນ ແລະ ຜົນຕອບແທນ ດົນກວ່າ. ເພື່ອໃຫ້ເຂົ້າໃຈ ແລະ ຄຸ້ມຄອງ ການຊົດເຊີຍ ໄດ້ດີຂຶ້ນ, ຄຳແນະນຳ ສະບັບນີ້ ປະກອບດ້ວຍ (ແຕ່ບໍ່ໄດ້ຈຳກັດຢູ່ພຽງແຕ່ເທົ່ານັ້ນ):

**ຄຳແນະນຳ 7.1.** ນຳໃຊ້ ວິທີການ ແບບມີສ່ວນຮ່ວມ ເພື່ອເຂົ້າໃຈ ກ່ຽວກັບ ການຕັດສິນໃຈຂອງ ຜູ້ດຳເນີນກິດຈະການຂະໜາດນ້ອຍ, ສະຫະກອນຂະໜາດກາງ ແລະ ສະຫະກອນຂະໜາດໃຫຍ່ ໃນທາງດ້ານ ການຜະລິດໄລຍະສັ້ນ ແລະ ການຜະລິດໄລຍະຍາວ ທີ່ຍືນຍົງ ໂດຍພິຈາລະນາເຖິງ ຄວາມຕ້ອງການຂອງ ສະມາຊິກຄົວເຮືອນທີ່ແຕກຕ່າງກັນ (ໂດຍສະເພາະແມ່ນ ແມ່ຍິງ ແລະ ໄວໜຸ່ມສາວ), ອຸດສາຫະກຳ ແລະ ຕະຫຼາດ (ຕິດພັນກັບ ຫຼັກການທີ 3, 11, 12).

**ຄຳແນະນຳ 7.2.** ຄາດຄະເນ ລະດັບ ຂອງການ ຊົດເຊີຍ ທີ່ອາດເປັນໄປໄດ້ ແລະ ສະໜັບສະໜູນ ການຕັດສິນ ໂດຍການວັດແທກປະລິມານ ມູນຄ່າ ແລະ ຜົນປະໂຫຍດ ດ້ານເສດຖະກິດ ແລະ ດ້ານສິ່ງແວດລ້ອມ ທີ່ເກີດຈາກ ການຊ່ວຍເຫຼືອດ້ານກະສິກຳປ່າໄມ້. ມູນຄ່ານັ້ນ ແມ່ນເປັນປັດໄຈນຳເຂົ້າ ເຊັ່ນວ່າ ດິນ, ແຮງງານ ແລະ ການລົງທຶນດ້ານການເງິນ, ສ່ວນ ຜົນປະໂຫຍດນັ້ນ ແມ່ນຜົນໄດ້ຮັບ ເຊັ່ນວ່າ ຕົ້ນໄມ້, ພືດ, ປາ ແລະ ຜະລິດຕະພັນສັດລ້ຽງ ແລະ/ຫຼື ຜົນປະໂຫຍດຈາກລະບົບນິເວດ (ຕິດພັນກັບ ຫຼັກການທີ 4, 6).

**ຄຳແນະນຳ 7.3.** ພະຈາລະນາເຖິງ ລາຍຮັບຄາດຄະເນ ຂອງກະສິກອນ ແລະ ນັກລົງທຶນ ໂດຍສະເພາະແມ່ນ ໃນໄລຍະ ຊຸມປີທຳອິດຂອງການສ້າງຕັ້ງ ກະສິກຳປ່າໄມ້, ແລະ ຊອກຫາວິທີທາງ ແລະ ເຄື່ອງມື ເພື່ອຫຼຸດຜ່ອນ ແລະ ຄຸ້ມຄອງ ການຊົດເຊີຍ ເຊັ່ນວ່າ ສິນເຊື່ອໄລຍະຍາວ, ອັດຕາດອກເບ້ຍຕ່ຳ, ພັກເກັບພາສີອາກອນ,

ເບັຍປະກັນໄພ, ແລະ ສິ່ງຈູງໃຈ ສຳລັບ ການສ້າງຜົນປະໂຫຍດຈາກ ລະບົບນິເວດ (ຕິດພັນກັບ ຫຼັກການທີ 4, 5, 6).

## 4.4. ຫຼັກການດ້ານສັງຄົມ-ວັດທະນາທຳ

### ຫຼັກການທີ 8: ຮັບຮູ້ ແລະ ເຄົາລົບນັບຖື ຄວາມຮູ້, ຮີດຄອງ ແລະ ທາງເລືອກ ໃນທ້ອງຖິ່ນ

ມາດຖານ ທາງສັງຄົມ, ລະບົບ ຄຸນຄ່າ ທາງ ວັດທະນາທຳ, ແລະ ລະບົບຄວາມຮູ້ ທ້ອງຖິ່ນ/ດັ້ງເດີມ ຄວນນຳມາພິຈາລະນາ ໃນການວາງແຜນ ແລະ ຈັດຕັ້ງປະຕິບັດ ການຊ່ວຍເຫຼືອດ້ານກະສິກຳປ່າໄມ້. ຄຳແນະນຳ ສະບັບນີ້ ປະກອບດ້ວຍ (ແຕ່ບໍ່ໄດ້ຈຳກັດຢູ່ພຽງແຕ່ເທົ່ານັ້ນ):

**ຄຳແນະນຳ 8.1.** ຮັບຮູ້ ແລະ ເຄົາລົບນັບຖື ລະບົບຄຸນຄ່າໃນທ້ອງຖິ່ນ, ດັ້ງເດີມ ຫຼື ຕາມຮີດຄອງ ເຊິ່ງຮວມທັງ ຄວາມຮູ້ແລະການປະຕບັດພື້ນເມືອງ ຂອງຊຸມຊົນທີ່ເປັນເປົ້າໝາຍ ໄດ້ຮັ ບການຊ່ວຍເຫຼືອດ້ານກະສິກຳປ່າໄມ້ (ຕິດພັນກັບ ຫຼັກການທີ 4, 10).

**ຄຳແນະນຳ 8.2.** ຮັບປະກັນໃຫ້ ພາກສ່ວນກ່ຽວຂ້ອງໃນທ້ອງຖິ່ນ ມີຄວາມສົນໃຈໃນການລົງທຶນດ້ານ ກະສິກຳປ່າໄມ້ ໂດຍການໄດ້ຮັບຄວາມເຫັນດີ ລ່ວງໜ້າ ໂດຍບໍ່ມີການບັງຄັບ (ຕິດພັນກັບ ຫຼັກການທີ 10)[8].

**ຄຳແນະນຳ 8.3.** ຮັບປະກັນວ່າ ຄວາມຮູ້ ແລະ ທາງເລືອກທ້ອງຖິ່ນ ກ່ຽວກັບ ທາງເລືອກດ້ານກະສິກຳປ່າໄມ້ (ເຊັ່ນວ່າ: ຊະນິດຕົ້ນໄມ້ແລະພືດ, ພັນແລະປະເພດສັດລ້ຽງ), ຈຸດປະສົງ ແລະ ວິທີປະຕິບັດ ໄດ້ນຳມາພິຈາລະນາ ໃນເວລາດຳເນີນການຄົ້ນຄວ້າ ແລະ ໃນໄລຍະວາງແຜນການ ແລະ ຕັດສິນໃຈ (ຕິດພັນກັບ ຫຼັກການທີ 3, 4, 10, 11, 12).

**ຄຳແນະນຳ 8.4.** ຮັບຮູ້ ແລະ ແກ້ໄຂ ຄວາມຕ້ອງການສະເພາະເຈາະຈົງ ຂອງປະຊາຊົນທ້ອງຖິ່ນ ສຳລັບ ການຝຶກອົບຮົມ, ເທັກໂນໂລຢີ, ສິດທິຄອບຄອງດິນ ແລະ ແຫຼ່ງຊັບພະຍາກອນ, ໂຄງລ່າງພື້ນຖານ ແລະ ຂໍ້ມູນກ່ຽວກັບຕະຫຼາດ ໂດຍສະເພາະແມ່ນສຳລັບ ຄົນພື້ນເມືອງ ແລະ ຊົນເຜົ່າ (ຕິດພັນກັບ ຫຼັກການທີ 3).

**ຄຳແນະນຳ 8.5.** ສ້າງຖານຂໍ້ມູນເບື້ອງຕົ້ນ ທາງດ້ານເສດຖະກິດ-ສັງຄົມ-ວັດທະນາທຳ ເພື່ອຕິດຕາມຄວາມຄືບໜ້າ ແລະ ປະເມີນຜົນກະທົບ ພ້ອມທັງ ການປະຕິບັດຕາມ ກົດໝາຍສະຫວັດດີການສັງຄົມ ແລະ ຄຳແນະນຳດ້ານການລົງທຶນ ທີ່ບັນດາປະເທດສະມາຊິກອາຊຽນ ໄດ້ຮັບຮອງເອົາແລ້ວ ແລະ ບັນດາກົດໝາຍສາກົນທີ່ກ່ຽວຂ້ອງ.

**ຄຳແນະນຳ 8.6.** ປ້ອງກັນ ການ ຍົກຍ້າຍ ອອກຈາກ ຫຼື ການຍົກຍ້າຍເຂົ້າມາໃນ ຊຸມຊົນທ້ອງຖິ່ນ ຍ້ອນການລົງທຶນຂະໜາດໃຫຍ່ ດ້ານກະສິກຳປ່າໄມ້ (ຕິດພັນກັບ ຫຼັກການທີ 3, 8, 9).

### ຫຼັກການທີ 9: ສະໜັບສະໜູນ ຄວາມສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມໃນສັງຄົມ

ການ ມີສ່ວນຮ່ວມ ໃນສັງຄົມ ແລະ ຄວາມສະເໝີພາບຍິງ-ຊາຍ ຄວນໄດ້ຮັບການພິຈາລະນາ

8 ປຶ້ມຄູ່ມືຂອງ ອົງການອາຫານແລະການກະເສດ ກ່ຽວກັບ ການອະນຸຍາດລ່ວງໜ້າ ໂດຍບໍ່ມີການບັງຄັບ: https://www.un.org/development/desa/indigenouspeoples/publications/2016/10/free-prior-andinformed-consent-an-indigenous-peoples-right-and-a-good-practice-for-localcommunities-fao/

ໃນເວລາສ້າງນະໂຍບາຍ ແລະ ໃນເວລາວາງແຜນ ແລະ ຈັດຕັ້ງປະຕິບັດ ການຊ່ວຍເຫຼືອດ້ານກະສິກຳປ່າໄມ້. ສິ່ງເຫຼົ່ານີ້ ຕ້ອງເຮັດໃຫ້ ກຸ່ມສັງຄົມທຸກໆປະເພດ ສາມາດເຂົ້າເຖິງໄດ້ ໂດຍສະເພາະແມ່ນ ກຸ່ມຄົນດ້ອຍໂອກາດ ເຊັ່ນວ່າ ຄົນພື້ນເມືອງ ແລະ ຊົນເຜົ່າ ພ້ອມທັງ ຄົນໄວໜຸ່ມສາວ. ຄວາມແຕກຕ່າງທາງເພດ ຄວນໄດ້ຮັບການພິຈາລະນາ ແລະ ບົດບາດຍິງ-ຊາຍ ໄດ້ຮັບການສົ່ງເສີມ ໃນວຽກງານກະສິກຳປ່າໄມ້. ການຈັດຕັ້ງປະຕິບັດ ຄຳແນະນຳ ສຳລັບ ຫຼັກການນີ້ ຄວນໃຫ້ສອດຄ່ອງກັບ ຄຳແນະນຳຂອງອາຊຽນ ກ່ຽວກັບ ບົດບາດຍິງ-ຊາຍ.

**ຄຳແນະນຳ 9.1.** ຮັບຮູ້ເຖິງຄວາມສຳຄັນຂອງ ຄວາມສະເໝີພາບຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງສັງຄົມ ໃນການຕັດສິນໃຈ, ອອກແບບ ແລະ ຈັດຕັ້ງປະຕິບັດ ການຊ່ວຍເຫຼືອດ້ານກະສິກຳປ່າໄມ້.

**ຄຳແນະນຳ 9.2.** ຮັບປະກັນໃຫ້ ການມີສ່ວນຮ່ວມ ເກີດຜົນປະໂຫຍດ ໃນການຊ່ວຍເຫຼືອດ້ານກະສິກຳປ່າໄມ້ ສຳລັບ ຜູ້ ດຳເນີນ ກິດຈະການ ຂະໜາດນ້ອຍ ແລະ ກຸ່ມຄົນ ດ້ອຍໂອກາດທາງ ສັງຄົມ ເຊັ່ນວ່າ ຄົນພື້ນເມືອງ/ຄົນຮີດເກົ່າຄອງເດີມ/ກຸ່ມຊົນເຜົ່າ ແລະ ຜູ້ຍົກຍ້າຍຖິ່ນຖານ.

**ຄຳແນະນຳ 9.3.** ຮັບປະກັນວ່າ ກຸ່ມຄົນດ້ອຍໂອກາດທາງສັງຄົມນັ້ນ ໄດ້ຮັບຜົນປະໂຫຍດ ຫຼື ບໍ່ໄດ້ຮັບຜົນກະທົບຮຸນແຮງຈາກ ການລົງທຶນຂະໜາດໃຫຍ່ ໃສ່ວຽກງານກະສິກຳປ່າໄມ້ (ຕິດພັນກັບ ຫຼັກການທີ 8, 10).

**ຄຳແນະນຳ 9.4.** ຮັບປະກັນວ່າ ການຊ່ວຍເຫຼືອ ດ້ານກະສິກຳ ປ່າໄມ້ ສົ່ງເສີມຄວາມສະເໝີພາບຍິງ-ຊາຍ ໂດຍການ ສ້າງຄວາມເຂົ້າໃຈເຖິງ ຄວາມແຕກຕ່າງທາງດ້ານ ພາລະໜ້າທີ່ຂອງແຕ່ລະເພດ, ການຕັດສິນໃຈ, ຂໍ້ຈຳກັດ ແລະ ໂອກາດ, ແລະ ພະຍາຍາມສົ່ງເສີມ ໃຫ້ແມ່ຍິງ ເຂົ້າເຖິງໂອກາດໃນການສ້າງ ວຽກງານກະສິກຳປ່າໄມ້ (ຮວມທັງ ການເຂົ້າເຖິງຂໍ້ມູນ, ເທັກໂນໂລຢີ ແລະ ການເງິນ) ແລະ ຜົນປະໂຫຍດອື່ນໆ ທີ່ກ່ຽວຂ້ອງ.

**ຄຳແນະນຳ 9.5.** ຮັບປະກັນວ່າ ທາງເລືອກ ຫຼື ເທັກໂນໂລຢີ ກ່ຽວກັບ ກະສິກຳປ່າໄມ້ ທີ່ສະເໜີມານັ້ນສ ເອົາໃຈໃສ່ດ້ານບົດບາດຍິງ-ຊາຍ ໂດຍສະເພາະແມ່ນ ໃນເວລາ ທີ່ມັນ ພົວພັນ ເຖິງ ແຮງງານຂອງແມ່ຍິງ.

**ຄຳແນະນຳ 9.6.** ສ້າງຄວາມເຂັ້ມແຂງ ດ້ານ ຄວາມສາມາດ ໃຫ້ລະບົບຄົ້ນຄວ້າ ແລະ ສົ່ງເສີມກະສິກຳແຫ່ງຊາດ ແລະ ອົງການຈັດຕັ້ງທີ່ບໍ່ສັງກັດລັດ ໃຫ້ດຳເນີນການຊ່ວຍເຫຼືອ ດ້ານກະສິກຳປ່າໄມ້ ທີ່ເອົາໃຈໃສ່ ດ້ານສັງຄົມ ແລະ ດ້ານບົດບາດຍິງ-ຊາຍ (ຕິດພັນກັບ ຫຼັກການທີ 2).

## ຫຼັກການທີ 10: ຮັບປະກັນ ການປົກປ້ອງສິດທິຄອບຄອງ

ການຊ່ວຍເຫຼືອດ້ານກະສິກຳປ່າໄມ້ ອາດຈະສ້າງແຮງກົດດັນ ລະຫວ່າງພາກສ່ວນກ່ຽວຂ້ອງຕ່າງໆ ໃນຂົງເຂດທີ່ ສິດທິຄອບຄອງດິນ ແລະ ຊັບພະຍາກອນທຳມະຊາດ ບໍ່ຈະແຈ້ງ. ການປົກປ້ອງ ສິດຄອບຄອງນັ້ນ ຈຶ່ງມີຄວາມສຳຄັນ ເພື່ອຮັບປະກັນວ່າ ການຊ່ວຍເຫຼືອດ້ານກະສິກຳປ່າໄມ້ ບໍ່ກະທົບກັບ ສິດທິຂອງຊຸມຊົນ ຫຼື ກະທົບກັບ ຮູບແບບສັງຄົມ ແລະ ການດຳລົງຊີວິດຂອງ ຊຸມຊົນທ້ອງຖິ່ນ. ຄຳແນະນຳ ສະບັບນີ້ ປະກອບດ້ວຍ (ແຕ່ບໍ່ໄດ້ຈຳກັດຢູ່ພຽງແຕ່ເທົ່ານັ້ນ):

**ຄຳແນະນຳ 10.1.** Understand ສ້າງຄວາມເຂົ້າໃຈ ກ່ຽວກັບ ສິດຄອບຄອງ ຂອງພາກສ່ວນກ່ຽວຂ້ອງ ໃນຂົງເຂດພື້ນທີ່ເປົ້າໝາຍ ສຳລັບ ການຊ່ວຍເຫຼືອດ້ານກະສິກຳປ່າໄມ້ ຂະໜາດໃຫຍ່ ໂດຍສະເພາະແມ່ນ ການລົງທຶນຂອງບໍລິສັດ[9].

**ຄຳແນະນຳ 10.2.** ໃຫ້ພາກສ່ວນກ່ຽວຂ້ອງ ເຂົ້າຮ່ວມໃນການເຈລະນາ ໃນເວລາວາງແຜນ ໃຫ້ການຊ່ວຍເຫຼືອດ້ານກະສິກຳປ່າໄມ້ ຂະໜາດໃຫຍ່, ເຄົາລົບນັບຖື ສິ່ງທີ່ພວກເຂົາຕ້ອງການ ແລະ ສິດທິຂອງພວກເຂົາ, ແລະ ຮັບປະກັນວ່າ ຊາວກະສິກອນ ທີ່ເຂົ້າຮ່ວມໃນວຽກງານ ກະສິກຳປ່າໄມ້ນັ້ນ ບໍ່ໄດ້ຮັບອັນຕະລາຍ ຫຼື ຖືກຍົກຍ້າຍໂດຍບໍ່ສະໝັກໃຈ ຍ້ອນການລົງທຶນດ້ານກະສິກຳປ່າໄມ້ ຂະໜາດໃຫຍ່ (ຕິດພັນກັບ ຫຼັກການທີ 3, 7, 8, 9).

**ຄຳແນະນຳ 10.3.** ຮັບປະກັນ ຄວາມປອດໄພຂອງ ສິດຄອບຄອງດິນ ຂອງພາກສ່ວນກ່ຽວຂ້ອງ ກັບ ການຊ່ວຍເຫຼືອດ້ານກະສິກຳປ່າໄມ້ ຫຼື ພວກທີ່ໄດ້ຮັບຜົນກະທົບຈາກ ວຽກງານກະສິກຳປ່າໄມ້ນັ້ນ ເພື່ອຫຼີກເວັ້ນ ຂໍ້ຂັດແຍ່ງ ແລະ ຮັບປະກັນໃຫ້ເກີດ ຜົນໄດ້ຮັບຈາກການລົງທຶນ.

**ຄຳແນະນຳ 10.4.** ຮັບປະກັນວ່າ ຜູ້ຖືສິດນັ້ນ ບໍ່ຂັດຂ້ອງ ໂດຍບໍ່ມີການບັງຄັບ ເຊິ່ງພວກເຂົາ ອາດຈະໄດ້ຮັບຜົນກະທົບຮຸນແຮງ ຈາກການຊ່ວຍເຫຼືອດ້ານກະສິກຳ ຂະໜາດໃຫຍ່ນັ້ນ, ແລະ ໄດ້ຮັບການຊົດເຊີຍທີ່ຖືກຕ້ອງ ສຳລັບ ຄວາມເສຍຫາຍທີ່ບໍ່ສາມາດຫຼີກເວັ້ນໄດ້ (ຕິດພັນກັບ ຫຼັກການທີ 7, 8).

9 ມີເຄື່ອງມື ແລະ ປື້ມຄູ່ມືຈຳນວນຫຼາຍ ສຳລັບການປະເມີນ ສິດຄອບຄອງ. ສາມາດເບິ່ງເອກະສານຂອງ ອົງການອາຫານແລະການກະເສດ ຊື່ວ່າ: ຄຳແນະນຳແບບສະໝັກໃຈ ກ່ຽວກັບ ການປົກປ້ອງ ສິດຄອບຄອງດິນ, ການປະມົງ ແລະ ປ່າໄມ້ ເພື່ອ ຄວາມໝັ້ນຄົງດ້ານສະບຽງອາຫານແຫ່ງຊາດ http://www.fao.org/docrep/016/ i2801e/i2801e.pdf.

## 4.5. ຫຼັກການດ້ານ ການອອກແບບວິຊາການ

### ຫຼັກການທີ 11: ອອກແບບ ທາງເລືອກດ້ານ ກະສິກຳປ່າໄມ້ ໂດຍອີງຕາມສະພາບ

ນັບທີ່ຫຼາຍ ລະບົບ ແລະ ທາງເລືອກ ສຳລັບ ວຽກງານກະສິກຳປ່າໄມ້ ເຊິ່ງຜົນສຳເລັດຂອງພວກມັນນັ້ນ ຂຶ້ນກັບ ການອອກແບບທີ່ດີ ທີ່ອີງຕາມ ສະພາບການທ້ອງຖິ່ນ ຕິດພັນກັບ ສະພາບການໃນລະດັບລຸ່ມສູນກາງ, ລະດັບປະເທດ ແລະ ລະດັບໂລກ. ການບັນລຸຜົນປະໂຫຍດທາງ ເສດຖະກິດ, ສັງຄົມ-ວັດທະນາທຳ ແລະ ສິ່ງແວດລ້ອມ ໃນເວລາດຽວກັນນັ້ນ ແມ່ນເປັນເປົ້າໝາຍຫຼັກຂອງ ວຽກງານກະສິກຳປ່າໄມ້. ມັນມັກຈະເກີດມີ ການຊົດເຊີຍ ແຕ່ວ່າ ວຽກງານກະສິກຳປ່າໄມ້ ທີ່ອອກແບບມາດີນັ້ນ ຈະໃຫ້ຜົນປະໂຫຍດຫຼາຍດ້ານ ໃນເວລາດຽວກັນ ແລະ ຕອບສະໜອງຕາມຄວາມຕ້ອງການ ຂອງຫຼາຍພາກສ່ວນກ່ຽວຂ້ອງ. ເພື່ອບັນລຸຜົນປະໂຫຍດສູງສຸດ ໃນວຽກງານກະສິກຳປ່າໄມ້ນັ້ນ, ຄຳແນະນຳ ສະບັບນີ້ ປະກອບດ້ວຍ (ແຕ່ບໍ່ໄດ້ຈຳກັດຢູ່ພຽງແຕ່ເທົ່ານັ້ນ):

**ຄຳແນະນຳ 11.1.** ຈັດຫາເຄື່ອງມື ທີ່ເປັນມິດກັບຜູ້ໃຊ້ງານ ແລະ ທີ່ສາມາດຊ່ວຍໃນການຕັດສິນໃຈ ໃຫ້ພາກສ່ວນກ່ຽວຂ້ອງ

ເພື່ອປະເມີນຂໍ້ມູນຮ່ວມກັນ, ລະບຸເຖິງໂອກາດ ແລະ ຂໍ້ຈໍາກັດ, ແລະ ເລືອກເອົາທາງເລືອກ ສໍາລັບວຽກງານກະສິກໍາປ່າໄມ້. ເຄື່ອງມືຊ່ວຍເຫຼືອການຕັດສິນໃຈນັ້ນ ປະກອບດ້ວຍຂໍ້ມູນ ແລະ ກຸ່ມຂໍ້ມູນ ກ່ຽວກັບຕົວເລກທາງຊີວະກາຍະພາບ ເຊັ່ນວ່າພື້ນທີ່ພູມສັນຖານ, ການນໍາໃຊ້ດິນ, ດິນ, ອຸນນະພູມ ແລະ ປະລິມານນໍ້າຝົນ, ແລະ ຂໍ້ມູນເສດຖະກິດ-ສັງຄົມເຊິ່ງປະກອບດ້ວຍ ເພດ, ຂໍ້ມູນຕະຫຼາດ, ປະເດັນໂຄງລ່າງພື້ນຖານ ແລະ ນະໂຍບາຍຕ່າງໆທີ່ກ່ຽວຂ້ອງ.

**ຄໍາແນະນໍາ 11.2.** ຮັບປະກັນວ່າທາງເລືອກດ້ານກະສິກໍາປ່າໄມ້ໄດ້ຖືກຄັດເລືອກເອົາຕາມຄວາມຕ້ອງການ, ຄວາມສົນໃຈ ຫຼື ຈຸດປະສົງສະເພາະດ້ານຂອງພາກສ່ວນເອກະຊົນ (ຜູ້ດໍາເນີນກິດຈະການຂະໜາດນ້ອຍ, ຜູ້ດໍາເນີນກິດຈະການຂະໜາດໃຫຍ່, ບໍລິສັດ) ແລະ ຂອງພາກສ່ວນລັດ (ລັດຖະບານ, ອົງການຈັດຕັ້ງທີ່ບໍ່ສັງກັດລັດ), ໂດຍພິຈາລະນາເຖິງການປ່ຽນແປງທີ່ອາດເກີດຂຶ້ນໃນອະນາຄົດ ເຊັ່ນວ່າການປ່ຽນແປງສະພາບອາກາດ, ເງື່ອນໄຂທາງເສດຖະກິດ ແລະ ນະໂຍບາຍຕ່າງໆ (ຕິດພັນກັບຫຼັກການທີ 3, 7, 8, 9).

**ຄໍາແນະນໍາ 11.3.** ອອກແບບທາງເລືອກ ດ້ານກະສິກໍາ ປ່າໄມ້ໂດຍອີງຕາມ ສະພາບການໃນທ້ອງຖິ່ນທີ່ກ່ຽວຂ້ອງກັບ ສະພາບການທາງດ້ານຊີວະກາຍຍະພາບ, ເສດຖະກິດ-ສັງຄົມ (ຮວມທັງ ແຮງງານທີ່ມີຢູ່ ແລະ ຄວາມສາມາດໃນການຈ້າງແຮງງານ), ວັດທະນາທໍາ, ໂຄງລ່າງພື້ນຖານ, ຕະຫຼາດ ແລະ ນະໂຍບາຍ (ຕິດພັນກັບ ຄໍາແນະນໍາ 12.2 ແລະ ຫຼັກການທີ 3, 5, 9, 10), ແລະ ມິຕິຂອງວຽກງານກະສິກໍາປ່າໄມ້ໃນທາງດ້ານ ຮອບວຽນ (ເຊັ່ນວ່າຮອບວຽນຂອງການປູກຕົ້ນໄມ້, ພືດ, ລ້ຽງສັດ, ປາ) ແລະ ໄລຍະເວລາ (ເຊັ່ນວ່າໄລຍະເວລາຂອງອົງປະກອບຕ່າງໆໃນລະບົບ).

**ຄໍາແນະນໍາ 11.4.** ເລັງເປົ້າໝາຍໃສ່ການສ້າງຜົນປະໂຫຍດສູງສຸດໂດຍການຮັບປະກັນວ່າທາງເລືອກດ້ານກະສິກໍາປ່າໄມ້ໄດ້ຖືກອອກແບບມາເພື່ອໃຫ້ຜົນປະໂຫຍດດ້ານເສດຖະກິດໃນເວລາດຽວກັນກັບຜົນປະໂຫຍດທາງດ້ານສັງຄົມ-ວັດທະນາທໍາ ແລະ ສິ່ງແວດລ້ອມ ໂດຍພິຈາລະນາເຖິງສະພາບການທ້ອງຖິ່ນ ເຊິ່ງຮວມທັງເງື່ອນໄຂທາງດ້ານສັງຄົມ-ວັດທະນາທໍາ (ຕິດພັນກັບ ຫຼັກການທີ 2, 9) ແລະ ສະຖານະພາບໃນການຄອບຄອງດິນຂອງພາກສ່ວນກ່ຽວຂ້ອງໂດຍກົງ (ຕິດພັນກັບ ຫຼັກການທີ 10).

**ຄໍາແນະນໍາ 11.5.** ຮັບປະກັນວ່າທາງເລືອກດ້ານກະສິກໍາປ່າໄມ້ທີ່ຖືກເລືອກນັ້ນໄດ້ຮັບການຈັດຕັ້ງປະຕິບັດ ຮ່ວມກັນກັບການອະນຸລັກ ແລະ ເທັກໂນໂລຢີກະສິກໍາທີ່ສາມາດປັບຕົວເຂົ້າກັບສະພາບອາກາດໄດ້[10] ເຊັ່ນວ່າ ການໄຖດິນຕາມເສັ້ນລະດັບ (ໂດຍສະເພາະແມ່ນສໍາລັບ ພື້ນທີ່ດິນທີ່ຊັນຫຼາຍ), ການປູກພືດປົກຄຸມ, ການໃຊ້ພືດແຫ້ງປົກຮາກຕົ້ນໄມ້, ການໄຖເປັນຄັນຄູ ຫຼື ໄຖຮາບພຽງ, ຊະນິດພືດ ທົນແລ້ງ, ແລະ ເທັກໂນໂລຢີປະຢັດນໍ້າ.

10 ໃຫ້ເບິ່ງ ຄໍາແນະນໍາສໍາລັບພາກພື້ນອາຊຽນ ກ່ຽວກັບ ການສົ່ງເສີມ ການປະຕິບັດກະສິກໍາ ເພື່ອເບິ່ງຕົວຢ່າງ ແລະ ຂອບການຮວມມື: http://www.asean.org/wpcontent/uploads/images/2015/October/ASEAN-Regional-Guide-

**ຄຳແນະນຳ 11.6.** ໃຫ້ຄຳແນະນຳດ້ານວິຊາການ ເພື່ອຮັບປະກັນການຄຸ້ມຄອງທີ່ດີ ສຳລັບທາງເລືອກດ້ານກະສິກຳປ່າໄມ້ທີ່ໄດ້ເລືອກເອົານັ້ນ ໂດຍການຈັດຝຶກອົບຮົມ ແລະ ສະໜອງອຸປະກອນກະສິກຳ ເພື່ອສະໜັບສະໜູນ ການສຶກສາຕໍ່ເນື່ອງ ແລະ ການຮຽນຮູ້ຕະຫຼອດຊີວິດ (ຕິດພັນກັບ ຫຼັກການທີ 2, 6).

## ຫຼັກການທີ 12: ຄັດເລືອກເອົາອົງປະກອບທາງດ້ານກະສິກຳປ່າໄມ້ແບບມີສ່ວນຮ່ວມ

ການຄັດເລືອກ ແລະ ການຕັດສິນໃຈກ່ຽວກັບອົງປະກອບ ຕົ້ນໄມ້, ພືດ, ສັດລ້ຽງ ແລະ ປາ/ສັດນ້ຳ ຕາມມິຕິທາງດ້ານ ໄລຍະເວລາ ແລະ ຮອບວຽນ ຂອງການເຮັດກະສິກຳປ່າໄມ້ ແມ່ນມີຄວາມສຳຄັນຕໍ່ຜົນສຳເລັດ. ໂດຍອີງຕາມເປົ້າໝາຍຕ່າງໆ (ໄລຍະສັ້ນ, ກາງ ຫຼື ຍາວ) ຂອງກະສິກອນຂະໜາດນ້ອຍ, ຂະໜາດໃຫຍ່ ແລະ ສະຫະກອນ, ແຫຼ່ງການຜະລິດຂອງພວກເຂົາ (ຂະໜາດຂອງດິນ, ແຮງງານ, ຕົ້ນທຶນ) ແລະ ຂໍ້ພິຈາລະນາອື່ນໆ ເຊັ່ນວ່າ ການຄອບຄອງດິນ ແລະ ຕະຫຼາດນັ້ນ, ການຄັດເລືອກ ອົງປະກອບຕ່າງໆ ໃນວຽກງານກະສິກຳປ່າໄມ້ ຄວນອີງຕາມແນວທາງທີ່ວ່າ: "ຊະນິດຂອງຕົ້ນໄມ້, ພືດ, ສັດລ້ຽງ ແລະ/ຫຼື ປາ ທີ່ເໝາະສົມ ກັບສະຖານທີ່ ທີ່ເໝາະສົມ ເພື່ອຈຸດປະສົງທີ່ເໝາະສົມ". ຄຳແນະນຳ ສະບັບນີ້ ປະກອບດ້ວຍ (ແຕ່ບໍ່ໄດ້ຈຳກັດຢູ່ພຽງແຕ່ເທົ່ານັ້ນ):

**ຄຳແນະນຳ 12.1.** ລະບຸຊະນິດ ແລະ ປະເພດຂອງ ພືດ, ສັດລ້ຽງ ແລະ/ຫຼື ສັດນ້ຳ ທີ່ກົງກັບສະພາບການທາງຊີວະກາຍຍະພາບ (ອຸນນະພູມ, ປະລິມານນ້ຳຝົນ, ລະດັບຄວາມສູງ ແລະ ດິນ) ຂອງພື້ນທີ່ເປົ້າໝາຍສຳລັບການເຮັດກະສິກຳປ່າໄມ້ ໂດຍການສັງເກດເບິ່ງວ່າ ພວກມັນ ມີຢູ່ໃນເຂດພື້ນທີ່ນັ້ນ ຫຼື ຢູ່ໃນພື້ນທີ່ຄ້າຍຄືກັນ (ຕິດພັນກັບ ຫຼັກການທີ 11) [11]. ໃຫ້ພິຈາລະນາເຖິງການປ່ຽນແປງສະພາບອາກາດໃນອະນາຄົດ ໃນເວລາຄັດເລືອກ ຊະນິດ, ປະເພດ ແລະ ພັນຕ່າງໆ ທີ່ປະກອບຢູ່ໃນລະບົບກະສິກຳປ່າໄມ້. ດີແທ້ແມ່ນໃຫ້ດຳເນີນການສຳຫຼວດຕະຫຼາດກ່ຽວກັບ ຊະນິດ ແລະ ປະເພດຕ່າງໆ ເພື່ອຊອກຫາຕະຫຼາດ ແລະ ເພື່ອອອກແບບຍຸດທະສາດການຂາຍຜະລິດຕະພັນ ກະສິກຳປ່າໄມ້ໃຫ້ໄດ້ດີຂຶ້ນກວ່າເກົ່າ (ຕິດພັນກັບ ຫຼັກການທີ 11).

**ຄຳແນະນຳ 12.2.** ດຳເນີນການສຳຫຼວດ ຫຼື ຈັດສຳມະນາກັບພາກສ່ວນກ່ຽວຂ້ອງໃນທ້ອງຖິ່ນ ເພື່ອລະບຸເຖິງ ການນຳໃຊ້ ຕົ້ນໄມ້, ພືດ, ສັດລ້ຽງ, ປາ ແລະ ພືດ/ສັດຊະນິດເຈາະຈົງ (ສິນຄ້າ ແລະ ບໍລິການ) ທີ່ພວກເຂົາຕ້ອງການປູກ ໂດຍຮັບປະກັນວ່າ ຂັ້ນຕອນນີ້ມີສ່ວນຮ່ວມ ແລະ ເທົ່າທຽມກັນ. ຖ້າຈຳເປັນ ກໍ່ໃຫ້ຈັດກຸ່ມສຳຫຼວດແຍກຕ່າງຫາກ ສຳລັບ ຜູ້ຊາຍ, ຜູ້ຍິງ, ໄວໜຸ່ມສາວ ແລະ ກຸ່ມຄົນດ້ອຍໂອກາດ ເພື່ອຮັບປະກັນວ່າ ທຸກໆຄົນ ສາມາດປະກອບສ່ວນໄດ້ (ຕິດພັນກັບ ຫຼັກການທີ 8, 9, 10, 11).

lines-on-Promoting-CSA-Practices/ASEAN%20Regional%20Guidelines%20on%20Promoting%20CSA%20Practices-endorsed%2037th%20 AMAF.pdf

11 ຂໍ້ມູນອອນລາຍ ແລະ ຖານຂໍ້ມູນອື່ນໆ ກ່ຽວກັບ ຊະນິດທີ່ເໝາະສົມກັບສະພາບການທາງຊີວະກາຍຍະພາບ ຂອງທ້ອງຖິ່ນ ແລະ ຄວາມຕ້ອງການຂອງພາກສ່ວນກ່ຽວຂ້ອງ ສາມາດເຂົ້າເບິ່ງໄດ້ ເພື່ອເພີ່ມທາງເລືອກ. ຕົວຢ່າງ: ຖານຂໍ້ມູນກ່ຽວກັບ ໜ້າທີ່ ແລະ ນິເວດວິທະຍາຂອງຕົ້ນໄມ້ (http://www.worldagroforestry. org/output/tree-functional-and-ecologicaldatabases).

**ຄຳແນະນຳ 12.3.** ສຶກສາ ແລະ ນຳໃຊ້ ຄຳແນະນຳດ້ານວິຊາການ ຈາກພາຍນອກ ເຊິ່ງບັນດາປະເທດສະມາຊິກອາຊຽນ ໄດ້ຮັບຮອງເອົາແລ້ວ ກ່ຽວກັບ ການຄັດເລືອກສາຍພັນ, ຄຸນນະພາບ, ແຫຼ່ງຊັບພະຍາກອນ, ການແຈກຢາຍ ແລະ ການຄຸ້ມຄອງ ພ້ອມທັງ ການຄັດເລືອກ ຊະນິດ ແລະ ພັນ ສັດລ້ຽງ ແລະ ສັດນໍ້າ. ຮັບປະກັນວ່າ ຊະນິດ/ພັນ ພືດ, ສັດລ້ຽງ ແລະ ສັດນໍ້າ ປະຈຳທ້ອງຖິ່ນນັ້ນ ບໍ່ໄດ້ຮັບຜົນກະທົບຮຸນແຮງ ຈາກການນຳເຂົ້າ ຊະນິດ/ພັນໃໝ່ ໃນລະບົບກະສິກຳປ່າໄມ້.

**ຄຳແນະນຳ 12.4.** ຮັບປະກັນໃຫ້ ພາກສ່ວນກ່ຽວຂ້ອງຕົ້ນຕໍ ເຂົ້າມີສ່ວນຮ່ວມຢ່າງຈິງຈັງ ໂດຍສະເພາະແມ່ນ ກະສິກອນ, ນັກລົງທຶນ, ຜູ້ເຮັດວຽກກະສິກຳ ແລະ ຫ້ອງການລັດຖະບານ ໃນການຕັດສິນໃຈກ່ຽວກັບ ອົງປະກອບຕ່າງໆ ໃນລະບົບກະສິກຳປ່າໄມ້.

## 4.6. ຫຼັກການດ້ານ ການສື່ສານ ແລະ ການຂະຫຍາຍ

### ຫຼັກການທີ 13: ສື່ສານຄວາມຮູ້ກ່ຽວກັບ ກະສິກຳປ່າໄມ້ ໃຫ້ໄດ້ຢ່າງມີປະສິດທິພາບ

ໂດຍພິຈາລະນາເຖິງ ການຂາດເຂີນ ຄວາມຮູ້ທົ່ວໄປ ກ່ຽວກັບ ການພັດທະນາ ແລະ ຄຸ້ມຄອງ ກະສິກຳປ່າໄມ້ ໃນບັນດາປະເທດສະມາຊິກອາຊຽນ ແລະ ຍ້ອນລັກສະນະ ທີ່ແຕກຕ່າງ ແລະ ຊັບຊ້ອນ ໃນການເຮັດກະສິກຳປ່າໄມ້, ສະນັ້ນ ການຄຸ້ມຄອງຄວາມຮູ້ ແລະ ການສື່ສານຄວາມຮູ້ນັ້ນ ຈຶ່ງມີຄວາມສຳຄັນຫຼາຍ ສຳລັບ ຜູ້ສ້າງນະໂຍບາຍ, ກະສິກອນ, ນັກລົງທຶນ ແລະ ຜູ້ຄ້າຂາຍ. ສະນັ້ນ ເພື່ອສົ່ງເສີມໃຫ້ມີການຮັບຮອງເອົາ ຢ່າງກວ້າງຂວາງ ແລະ ມີການພັດທະນາຢ່າງຕໍ່ເນື່ອງ ວຽກງານກະສິກຳປ່າໄມ້, ຄຳແນະນຳ ສະບັບນີ້ ປະກອບດ້ວຍ (ແຕ່ບໍ່ໄດ້ຈຳກັດຢູ່ພຽງແຕ່ເທົ່ານັ້ນ):

**ຄຳແນະນຳ 13.1.** ລະບຸເຖິງ ຄວາມຈຳເປັນ ແລະ ຊ່ອງຫວ່າງ ດ້ານຄວາມຮູ້ ແລະ ການສື່ສານ ຂອງພາກສ່ວນກ່ຽວຂ້ອງທັງໝົດ ເຊິ່ງຮວມທັງ ກະສິກອນ, ຫ້ອງການສົ່ງເສີມກະສິກຳ ແລະ ໃຫ້ຄຳປຶກສາ, ລັດຖະບານທ້ອງຖິ່ນ ແລະ ສູນກາງ, ຜູ້ຄ້າຂາຍ, ນັກລົງທຶນ ໂດຍນຳໃຊ້ ວິທີການແບບມີສ່ວນຮ່ວມ ເພື່ອໃຫ້ການຊ່ວຍເຫຼືອສະເພາະເຈາະຈົງ ຕາມຄວາມຈຳເປັນ.

**ຄຳແນະນຳ 13.2.** ສື່ສານຢ່າງຈະແຈ້ງ ລະຫວ່າງ ພາກສ່ວນກ່ຽວຂ້ອງທັງໝົດ ໃນພື້ນທີ່ໃດໜຶ່ງ ແລະ/ຫຼື ຕ້ອງໂສ້ມູນຄ່າ ໃຫ້ເປັນພາສາ ແລະ ຮູບແບບ ທີ່ເໝາະສົມ ເຊິ່ງປະກອບດ້ວຍ (ແຕ່ບໍ່ໄດ້ຈຳກັດຢູ່ພຽງແຕ່ເທົ່ານັ້ນ) ສື່ຊຽນ ແລະ ສື່ພາບສຽງ, ກອງປະຊຸມໃຫຍ່ ແລະ ກອງປະຊຸມນ້ອຍ, ສຳມະນາກຳທັກສະ, ຝຶກອົບຮົມພາກສະໜາມ ແລະ ການສາທິດ ເພື່ອໃຫ້ເຂົ້າໃຈດີຂຶ້ນ ກ່ຽວກັບ ປະເດັນຕ່າງໆ ທີ່ຂັດຂວາງ ການເຮັດກະສິກຳປ່າໄມ້.

**ຄຳແນະນຳ 13.3.** ສ້າງຄວາມເຂັ້ມແຂງ ດ້ານ ຄວາມສາມາດ ໃນການຄຸ້ມຄອງແລະສື່ສານຄວາມຮູ້ ຂອງບັນດາສະຖາບັນ ທີ່ຮັບຜິດຊອບ ແລະ ທີ່ມີສ່ວນຮ່ວມໃນ ວຽກງານກະສິກຳປ່າໄມ້ ເຊິ່ງຮວມທັງ ບັນດາຄູ່ຮ່ວມງານຂອງພວກເຂົາ ໃນຂັ້ນສູນກາງ ແລະ ຂັ້ນລຸ່ມສູນກາງ ເພື່ອສ້າງ ແລະ ແລກປ່ຽນ ຄວາມຮູ້ ແລະ ທັກສະ ໃຫ້ມີປະສິດທິພາບຫຼາຍຂຶ້ນ, ໃຫ້ຄຳແນະນຳດ້ານວິຊາການ, ຊ່ວຍວາງແຜນການ ແລະ ຕັດສິນໃຈ

ໃນຂັ້ນຕ່າງໆ, ຕິດຕາມຜົນໄດ້ຮັບ ແລະ ຜົນກະທົບ, ສົ່ງເສີມ ວິທີການຕ່າງໆ, ຜົນໄດ້ຮັບ ແລະ ຜົນສຳເລັດ ໃຫ້ມີລັກສະນະເຈາະຈົງ ແລະ ເປີດກວ້າງ, ແລະ ຊ່ວຍລະດົມທຶນ ສຳລັບ ການຄົ້ນຄວ້າແລະພັດທະນາ ດ້ານກະສິກຳປ່າໄມ້.

**ຄຳແນະນຳ 13.4.** ຈັດການຄຸ້ມຄອງ ແລະ ສື່ສານ ແຫຼ່ງຄວາມຮູ້ ໃຫ້ເໝາະສົມ ເພື່ອຮັບປະກັນວ່າ ພາກສ່ວນກ່ຽວຂ້ອງ ທັງໝົດ ໄດ້ຮັບແຈ້ງ, ສາມາດເຂົ້າຮ່ວມໃນການສົນທະນາ, ສາມາດເພີ່ມ ຄວາມຮູ້ແລະທັກສະຂອງພວກເຂົາ ແລະ ສາມາດປັບປຸງ ແລະ ປັບປຸງໄດ້ຢ່າງຕໍ່ເນື່ອງ.

## ຫຼັກການທີ 14: ວາງແຜນການ ເພື່ອການຂະຫຍາຍ ຢ່າງມີປະສິດທິພາບ ແລະ ເພື່ອຄວາມຍືນຍົງ

ໂດຍ ພິຈາລະນາ ເຖິງ ສະພາບການສະເພາະເຈາະຈົງ ຂອງການຊ່ວຍເຫຼືອດ້ານກະສິກຳປ່າໄມ້, ການຂະຫຍາຍວຽກງານ ກະສິກຳປ່າໄມ້ ຕ້ອງມີການວາງແຜນການ ຢ່າງລະມັດລະວັງ ແລະ ພິຈາລະນາເຖິງ ທັດສະນະລວມ ແລະ ທັດສະນະສະເພາະດ້ານ. ຂໍ້ກຳນົດຕ່າງໆ ສຳລັບ ການຂະຫຍາຍ ວຽກງານກະສິກຳປ່າໄມ້ ເພື່ອ ໃຫ້ເກີດ ປະໂຫຍດ ຍືນຍົງ ນັ້ນ ຕ້ອງໄດ້ກຳນົດຂຶ້ນມາ ຢ່າງລະອຽດ. ຄຳແນະນຳ ສະບັບນີ້ ປະກອບດ້ວຍ (ແຕ່ບໍ່ໄດ້ຈຳກັດຢູ່ພຽງແຕ່ເທົ່ານັ້ນ):

**ຄຳແນະນຳ 14.1.** ສົ່ງເສີມ ພາກສ່ວນກ່ຽວຂ້ອງ ແລະ ຂະແໜງການຕ່າງໆ ເຂົ້າໃນການ ວາງແຜນການ ເພື່ອຂະຫຍາຍ ການຊ່ວຍເຫຼືອດ້ານກະສິກຳປ່າໄມ້ (ຕິດພັນກັບ ຫຼັກການທີ 3).

**ຄຳແນະນຳ 14.2.** ສ້າງ ຄວາມເຂົ້າໃຈກ່ຽວກັບ ທ່າແຮງສູງສຸດ ແລະ ຂອບເຂດຈຳກັດ ຂອງການ ຂະຫຍາຍ ວຽກງານກະສິກຳປ່າໄມ້ ໂດຍ ການສຶກສາ ໂອກາດ ພາຍໃນ ແລະ ພາຍນອກ ເຊິ່ງຮວມທັງ ສະພາບການທາງດ້ານ ຊີວະກາຍຍະພາບ, ສັງຄົມ, ວັດທະນາທຳ, ແຮງງານ ແລະ ຕະຫຼາດ, ພ້ອມທັງ ສຶກສາ ຍຸດທະສາດ ແລະ ແຜນການຕ່າງໆ ຂອງ ຂະແໜງການທີ່ກ່ຽວຂ້ອງ ເຊິ່ງ ອາດມີ ຜົນກະທົບ ກັບ ການຂະຫຍາຍທີ່ສະເໜີມາ.

**ຄຳແນະນຳ 14.3.** ຮັບປະກັນວ່າ ຂໍ້ກຳນົດຕ່າງໆ ສຳລັບ ການຂະຫຍາຍນັ້ນ ພາກສ່ວນກ່ຽວຂ້ອງ ສາມາດເຂົ້າໃຈໄດ້ ແລະ ພິຈາລະນາເຖິງ ທັງໝົດ ຫຼື ບາງສ່ວນ ຂອງສະຖານທີ່ເປົ້າໝາຍ.

**ຄຳແນະນຳ 14.4.** ສ້າງ ຄວາມເຂົ້າໃຈກ່ຽວກັບ ຈຸດສຸມ ຂອງການ ຂະຫຍາຍ ເຊິ່ງອາດເປັນດ້ານວິຊາການ ຫຼື ດ້ານການປົກຄອງ ວຽກງານກະສິກຳປ່າໄມ້ ຫຼື ເປັນທັງສອງດ້ານນັ້ນ. ດ້ານວິຊາການ ປະກອບດ້ວຍ ການຄັດເລືອກ ອົງປະກອບຂອງລະບົບ ຕົ້ນໄມ້, ພືດ, ສັດລ້ຽງ ແລະ/ຫຼື ສັດນ້ຳ, ການອອກແບບ ແລະ ຄຸ້ມຄອງ, ແລະ ຜົນກະທົບທີ່ອາດເກີດໃນ ຟາມ ຫຼື ໃນພື້ນທີ່ທຳມະຊາດ. ດ້ານ ການປົກຄອງ ນັ້ນ ປະກອບດ້ວຍ ການຈັດຕັ້ງ ຜູ້ດຳເນີນກິດຈະການຂະໜາດນ້ອຍ, ການສ້າງສາຍພົວພັນການຮ່ວມມື, ການຝຶກອົບຮົມ ແລະ ກົນໄກສະໜອງທຶນ.

**ຄຳແນະນຳ 14.5.** ຕົກລົງກ່ຽວກັບ ຮູບແບບທີ່ເໝາະສົມ ສຳລັບ ການຂະຫຍາຍ ໃນສະພາບການໃດໜຶ່ງ ເຊິ່ງຮວມທັງ ຜູ້ປະຕິບັດງານຕົ້ນຕໍ ທີ່ກ່ຽວຂ້ອງ ເຊັ່ນວ່າ ລັດຖະບານທ້ອງຖິ່ນ, ບໍລິສັດເອກະຊົນ, ກຸ່ມຜູ້ຜະລິດ, ຫ້ອງການສົ່ງເສີມກະສິກຳ.

ພາກທີ 5

# ຂໍ້ພິຈາລະນາ ໃນການຈັດຕັ້ງປະຕິບັດ

ຫຼັກການ ແລະ ຄຳແນະນຳເລົ່ານີ້ ປະກອບເປັນຂອບວຽກໜຶ່ງ ທີ່ສາມາດຊ່ວຍໃນການສົນທະນາ ກ່ຽວກັບ ການສ້າງ ນະໂຍບາຍ, ຍຸດທະສາດ, ແຜນງານ ແລະ ໂຄງການ ກະສິກຳປ່າໄມ້ ໃນບັນດາປະເທດສະມາຊິກອາຊຽນ. ພວກມັນຍັງໃຫ້ຄຳແນະນຳ ສຳລັບ ການລົງທຶນດ້ານກະສິກຳປ່າໄມ້ ຂອງຂະແໜງການເອກະຊົນ. ເພື່ອຈຸດປະສົງໃນການຈັດຕັ້ງປະຕິບັດ, ຄວນສ້າງ ຄຳແນະນຳດ້ານວິຊາການ ກ່ຽວກັບ ກະສິກຳປ່າໄມ້ ທີ່ແທດເໝາະກັບ ເຂດນິເວດວິທະຍາ ແລະ ສັງຄົມ-ວັດທະນາທຳ ຂອງບັນດາປະເທດສະມາຊິກອາຊຽນ. ຂໍ້ພິຈາລະນາບາງອັນ ສຳລັບ ການຈັດຕັ້ງປະຕິບັດ ໄດ້ນຳມາສົນທະນາ ໃນຂ້າງລຸ່ມນີ້.

## 5.1. ພາລະບົດບາດ ແລະ ຄວາມຮັບຜິດຊອບ ຂອງຝ່າຍປົກຄອງ

ລັດຖະບານ ແລະ ຫ້ອງການໃນຂັ້ນຕ່າງໆຂອງບັນດາປະເທດສະມາຊິກອາຊຽນ, ບັນດາອົງການຈັດຕັ້ງທີ່ບໍ່ສັງກັດລັດ, ສະມາຄົມ ກະສິກອນ ແລະ ສະຫະກອນ, ອົງການຈັດຕັ້ງຂັ້ນຊຸມຊົນ, ຂະແໜງການເອກະຊົນ (ຜູ້ດຳເນີນກິດຈະການຂະໜາດນ້ອຍ ຫຼື ຂະໜາດໃຫຍ່, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ, ບໍລິສັດຕ່າງໆ) ແລະ ພາກສ່ວນອື່ນໆ ມີ ພາລະບົດບາດ ແຕກຕ່າງກັນ. ມັນຈຳເປັນຕ້ອງ ມີຄວາມພ້ອມພຽງກັນ ເພື່ອສ້າງ ແວດລ້ອມ ສິ່ງເສີມ, ສະໜັບສະໜູນ ຄວາມສາມາດອົງກອນ ແລະ ການຮ່ວມມື ແລະ ການຕັດສິນໃຈ ແບບມີສ່ວນຮ່ວມ ຫຼາຍ ຂະແໜງການ (ຫຼັກການທີ 1, 2, 3). ການລະບຸຕົວ ພາກສ່ວນກ່ຽວຂ້ອງຕົ້ນຕໍ ແລະ ການສ້າງຄວາມເຂົ້າໃຈ ກ່ຽວກັບ ພາລະບົດບາດ, ຄວາມຕ້ອງການ ແລະ ຄາດຫວັງຂອງພວກເຂົາ ແມ່ນ ບາດກ້າວທຳອິດ ທີ່ຈຳເປັນ ເພື່ອສ້າງແວດລ້ອມສິ່ງເສີມ ວຽກງານກະສິກຳປ່າໄມ້.

ການຊ່ວຍເຫຼືອ ດ້ານກະສິກຳ ປ່າໄມ້ ທີ່ປະສົບຜົນສຳເລັດນັ້ນ ຕ້ອງການ ການ ສະໜັບສະໜູນ ຈາກລັດຖະບານ ໃນທາງດ້ານ ນະໂຍບາຍ ແລະ ແຜນງານໃຫ້ທຶນ, ແລະ ກຳນົດອັດຕາດອກເບ້ຍ ທີ່ດີ ຈາກການຜະລິດກະສິກຳ ປູກພືດຂະນິດດຽວ ເພື່ອການຄ້າ. ດັ່ງທີ່ໄດ້ອະທິບາຍຢູ່ໃນ ຫຼັກການທີ 1, ບັນດາປະເທດສະມາຊິກອາຊຽນ ຄວນລະບຸຕົວ ສະຖາບັນໃດໜຶ່ງ ທີ່ຮັບຜິດຊອບ ສຳລັບ ການພັດທະນາກະສິກຳປ່າໄມ້ ໃນປະເທດຂອງພວກເຂົາ. ປ່າໄມ້ສັງຄົມ ແມ່ນເປັນໜຶ່ງໃນແຜນງານ ແລະ ກົນໄກແຫ່ງຊາດ ເຊິ່ງໃນນັ້ນ ວຽກງານ ກະສິກຳ ປ່າໄມ້ ສາມາດຈັດຕັ້ງປະຕິບັດໄດ້ ດ້ວຍການສະໜັບສະໜູນ ດ້ານນະໂຍບາຍ ແລະ ທຶນ. ຫຼາຍປະເທດສະມາຊິກອາຊຽນ ມີແຜນງານປ່າໄມ້ສັງຄົມ ເຊິ່ງມີແຜນການ ແລະ ເປົ້າໝາຍ ເພື່ອປັບປຸງ ຊີວິດການເປັນຢູ່ຂອງ ປະຊາຊົນ ທີ່ອາໃສຢູ່ໃນປ່າ ພ້ອມທັງ ປົກປ້ອງ ແລະ ຄຸ້ມຄອງປ່າໄມ້ ຢ່າງຍືນຍົງ; ວຽກງານກະສິກຳປ່າໄມ້ ມີບົດບາດສຳຄັນ ໃນການບັນລຸເປົ້າໝາຍເຫຼົ່ານີ້.

ນັກລົງທຶນ ຂະແໜງການເອກະຊົນ ມີບົດບາດສຳຄັນ ໃນການພັດທະນາ ກະສິກຳປ່າໄມ້ ໂດຍສະເພາະແມ່ນ ບັນດາບໍລິສັດ ອຸດສາຫະກຳກະສິກຳ ທີ່ມີຄວາມສົນໃຈ ໃນການຜະລິດຢ່າງຍືນຍົງ ໂດຍມີເປົ້າໝາຍ ໄດ້ຮັບການຢັ້ງຢືນ ທີ່ຈະຊ່ວຍໃຫ້ ຜະລິດຕະພັນຂອງພວກເຂົາ ເປັນ ຜະລິດຕະພັນ ທີ່ "ເປັນມິດກັບສິ່ງແວດລ້ອມ".

ບັນດາສະຖາບັນຄົ້ນຄວ້າ ແລະ ການສຶກສາແຫ່ງຊາດ ຈຳເປັນຕ້ອງເຂົ້າຮ່ວມໃນການຄົ້ນຄວ້າ, ຝຶກອົບຮົມ ແລະ ການສຶກສາ ກ່ຽວກັບ ກະສິກຳປ່າໄມ້ ເພື່ອ 1) ສ້າງຄວາມຮູ້ ແລະ ຂໍ້ມູນ ຢ່າງຕໍ່ເນື່ອງ ກ່ຽວກັບ ກະສິກຳປ່າໄມ້ ທີ່ຈຳເປັນເພື່ອປັບປຸງ ແລະ/ຫຼື ໃຫ້ຄຳແນະນຳດ້ານ ວິຊາການ ແລະ ດ້ານນະໂຍບາຍ; 2) ພັດທະນາເຄື່ອງມື ແລະ ວິທີການຕ່າງໆ ເພື່ອສ້າງຄວາມຮູ້, ຕິດຕາມ ແລະ ປະເມີນຜົນກະທົບ; ແລະ 3) ສະໜັບສະໜູນ ການຮຽນຮູ້ຕໍ່ເນື່ອງ, ການສຶກສາ ແລະ ເຜີຍແຜ່ຄວາມຮູ້. ການຄົ້ນຄວ້າພື້ນຖານ ແລະ ການຄົ້ນຄວ້າຕົວຈິງ ກ່ຽວກັບ ກະສິກຳປ່າໄມ້ ຄວນດຳເນີນຂຶ້ນ ໃນລັກສະນະມີສ່ວນຮ່ວມ (ຫຼັກການທີ 3, 8, 9).

ການໃຫ້ບໍລິການສົ່ງເສີມດ້ານ ປ່າໄມ້ ແລະ ກະສິກຳ ຫຼື ການບໍລິການ ໃຫ້ຄຳແນະນຳ ໃນເຂດຊົນນະບົດ ໃນ ບັນດາປະເທດສະມາຊິກ ອາຊຽນ ມີບົດບາດສຳຄັນ ໃນການແລກປ່ຽນຄວາມຮູ້ ແລະ ປະສົບການ, ການຝຶກອົບຮົມ ແລະ ການສ້າງ ພະນັກງານສົ່ງເສີມກະສິກຳ ໃຫ້ມີທັກສະທີ່ດີ ເພື່ອຊ່ວຍ ໃນການ ວາງແຜນການ , ການຈັດຕັ້ງປະຕິບັດ, ການຕິດຕາມ ແລະ ປະເມີນຜົນ ວຽກງານກະສິກຳປ່າໄມ້.

ບັນດາສະມາຄົມກະສິກອນ, ສະຫະກອນ ແລະ ບັນດາອົງການຈັດຕັ້ງຂັ້ນຊຸມຊົນ ກໍ່ມີບົດບາດສຳຄັນເຊັ່ນກັນ ໃນການສ້າງຄວາມຮູ້ ດ້ານກະສິກຳປ່າໄມ້, ການແລກປ່ຽນຄວາມຮູ້ ແລະ ປະສົບການ ຈາກກະສິກອນ ສູ່ກະສິກອນ, ການຮັບເອົາ ທາງເລືອກດ້ານ ກະສິກຳປ່າໄມ້ ທີ່ ເໝາະສົມທີ່ສຸດກັບ ສະພາບການຂອງພວກເຂົາ ໃນທາງດ້ານ ຊີວະກາຍຍະພາບ, ສັງຄົມ-ເສດຖະກິດ, ວັດທະນາທຳ, ຕະຫຼາດ ແລະ ນະໂຍບາຍ, ການສັງລວມເອົາ ຄວາມຄາດຫວັງ, ບັນຫາ ແລະ ຜະລິດຕະພັນຂອງ ກະສິກອນ, ແລະ ການສົ່ງເສີມການເຈລະຈາ ໃນກຸ່ມພາກສ່ວນກ່ຽວຂ້ອງ ເຊິ່ງຮວມທັງ ຜູ້ສ້າງນະໂຍບາຍ ແລະ ນັກລົງທຶນ.

ບັນດາສະມາຊິກຂອງ CGIAR ເຊິ່ງເປັນ ແຜນງານຮ່ວມງານສາກົນ ເພື່ອຄ້ຳປະກັນສະບຽງອາຫານ ໃນອະນາຄົດນັ້ນ ຍັງມີບົດບາດສຳຄັນ ໃນການເຮັດໃຫ້ ແຜນງານຄົ້ນຄວ້າຂອງພວກເຂົາ ສອດຄ່ອງກັບ ວາລະດ້ານກະສິກຳປ່າໄມ້ ຂອງບັນດາປະເທດສະມາຊິກອາຊຽນ ແລະ/ຫຼື ໃນການດຳເນີນການຄົ້ນຄວ້າຮ່ວມກັນ ກັບ ບັນດາຄູ່ຮ່ວມງານຂັ້ນພາກພື້ນ ແລະ ຂັ້ນປະເທດ.

ທ້າຍສຸດແລ້ວ, ບັນດາອົງການຈັດຕັ້ງ ຂອງອົງການສະຫະປະຊາຊາດ ໂດຍສະເພາະແມ່ນ ອົງການອາຫານ ແລະ ການກະເສດ ແມ່ນມີບົດບາດສຳຄັນ ໃນ ການໃຫ້ຄວາມຊ່ວຍເຫຼືອດ້ານວິຊາການ , ຄຳແນະນຳດ້ານນະໂຍບາຍ ແລະ ໃຫ້ທຶນ (ຖ້າເປັນໄປໄດ້) ເພື່ອຈັດຕັ້ງປະຕິບັດ ຄຳແນະນຳເລົ່ານີ້.

## 5.2. ການວາງແຜນ ແລະ ການເງິນ

ເນື່ອງຈາກວ່າ ວຽກງານກະສິກຳປ່າໄມ້ ບໍ່ໄດ້ຢູ່ໃນ ວຽກງານກະສິກຳ ຫຼື ວຽກງານປ່າໄມ້ ຢ່າງຂາດໂຕ, ສະນັ້ນ ບັນດາປະເທດສະມາຊິກອາຊຽນ ທີ່ຕ້ອງການ ພັດທະນາແຜນງານ ກະສິກຳປ່າໄມ້ແຫ່ງຊາດນັ້ນ

ກ່ອນອື່ນໝົດ ຄວນພິຈາລະນາເຖິງ ໂຄງຮ່າງການຈັດຕັ້ງ ທີ່ຈຳເປັນເພື່ອເຮັດໃຫ້ ແຜນງານແຫ່ງຊາດນັ້ນ ປະສົບຜົນສຳເລັດ (ຫຼັກການທີ 1). ສະຖາບັນໃດໜຶ່ງ ທີ່ສ້າງຕັ້ງຂຶ້ນ ພາຍໃນກະຊວງທີ່ກ່ຽວຂ້ອງ, ຄະນະກຳມະການພິເສດ ຄວບຫຼາຍຂະແໜງການ ຫຼື ຄະນະສະເພາະກິດ ສາມາດສ້າງຂຶ້ນມາໄດ້ ເພື່ອຊ່ວຍໃນການວາງແຜນ. ວິທີການດັ່ງກ່າວນີ້ ແມ່ນສອດຄ່ອງກັບ ຂອບວຽກຫຼາຍຂະແໜງການຂອງອາຊຽນ ກ່ຽວກັບ ການປ່ຽນແປງສະພາບອາກາດ: ກະສິກຳ, ປະມົງ ແລະ ປ່າໄມ້ ເພື່ອຄ້ຳປະກັນສະບຽງອາຫານ ເຊິ່ງມີກົນໄກໃດໜຶ່ງ ສຳລັບ ການປະຕິບັດງານ ແບບມີການປະສານງານກັນ.

ການວາງແຜນ ສຳລັບ ວິໄສທັດ ແລະ ແຜນການ ກະສິກຳປ່າໄມ້ ໃນບັນດາປະເທດສະມາຊິກອາຊຽນ ແມ່ນສິ່ງໜຶ່ງທີ່ດີ ເພື່ອສະແດງໃຫ້ເຫັນ ຊ່ອງທາງຕໍ່ໄປ. ມັນມີຫຼາຍວິທີທາງ ເພື່ອຂັບເຄື່ອນການພັດທະນາ ກະສິກຳປ່າໄມ້ ໃນຂົງເຂດພາກພື້ນນີ້ ເຊິ່ງຮວມທັງ ການສ້າງແວດລ້ອມທີ່ເອື້ອອຳນວຍໃຫ້ການລົງທຶນ ເຊິ່ງມີນະໂຍບາຍສະໜັບສະໜູນ ເພື່ອກະຕຸ້ນການເປີດຕະຫຼາດຮັບຜະລິດຕະພັນກະສິກຳປ່າໄມ້ ແລະ ໃຫ້ຄວາມສຳຄັນ ວຽກງານກະສິກຳປ່າໄມ້ ໃນຍຸດທະສາດ, ແຜນການ ແລະ ເປົ້າໝາຍຕ່າງໆ ທີ່ມີຢູ່ແລ້ວນັ້ນ ເຊັ່ນວ່າ ແຜນພັດທະນາຍືນຍົງ ຫຼື ປ່ອຍອາຍກັກບອນໜ້ອຍ, ແຜນປະຕິບັດງານແຫ່ງຊາດ REDD+, ແຜນພັດທະນາຊົນນະບົດ, ແຜນງານຟື້ນຟູດິນ, ການວາງແຜນນຳໃຊ້ດິນ, ແລະ ການປະກອບສ່ວນແຫ່ງຊາດ ທີ່ໄດ້ກຳນົດໄວ້ແລ້ວ. ບັນດາຄູ່ຮ່ວມພັດທະນາສາກົນ ແລະ ບັນດາຄູ່ຮ່ວມງານສອງຝ່າຍ ຂອງບັນດາປະເທດສະມາຊິກອາຊຽນ ສາມາດພະຍາຍາມເຮັດໃຫ້ ແຜນງານພັດທະນາຂອງພວກເຂົາ ສອດຄ່ອງກັບ ແຜນງານການສິກຳປ່າໄມ້ ຂອງປະເທດສະມາຊິກ ຫຼື ໃຫ້ທຶນຊ່ວຍເຫຼືອໂດຍກົງ.

ການວາງແຜນງານ ຫຼື ໂຄງການ ກະສິກຳປ່າໄມ້ ໃນຂັ້ນສູນກາງ ແລະ ຂັ້ນລຸ່ມສູນກາງ ຕ້ອງໃຫ້ມີການວິເຄາະ ຂອບເຂດໜ້າວຽກ ແລະ ສະພາບການ ເພື່ອລະບຸເຖິງ ປະເດັນ, ບັນຫາທ້າທາຍ, ຊ່ອງຫວ່າງ ແລະ ໂອກາດຕ່າງໆ. ສັນຍາທາງບວກນັ້ນ ຈະສ້າງຄວາມໝັ້ນໃຈ ໃຫ້ນັກລົງທຶນ (ຜູ້ດຳເນີນກິດຈະການຂະໜາດນ້ອຍ, ຜູ້ດຳເນີນກິດຈະການຂະໜາດໃຫຍ່, ບໍລິສັດຕ່າງໆ) ມາລົງທຶນໃນວຽກງານກະສິກຳປ່າໄມ້. ການສຶກສາຄວາມເປັນໄປໄດ້ທາງການເງິນ, ການວາງແຜນຍຸດທະສາດໄລຍະຍາວ ແລະ ການວາງແຜນຄຸ້ມຄອງ ໄລຍະກາງນັ້ນ ຈຳເປັນຕ້ອງໄດ້ດຳເນີນຂຶ້ນ. ການວາງແຜນ ໃນຂັ້ນຊຸມຊົນທ້ອງຖິ່ນ, ຂັ້ນຟາມ ຫຼື ຂັ້ນສະໜາມ ຄວນໃຫ້ໜ່ວຍງານສົ່ງເສີມກະສິກຳ ທີ່ໄດ້ຜ່ານການຝຶກອົບຮົມດ້ານ ກະສິກຳປ່າໄມ້ ເປັນຜູ້ອຳນວຍຄວາມສະດວກ (ຫຼັກການທີ 2) ແລະ ກວມເອົາ ການຄັດເລືອກ ທາງເລືອກດ້ານກະສິກຳປ່າໄມ້ ຈຳນວນໜຶ່ງ ທີ່ເໝາະສົມທີ່ສຸດ ກັບສະພາບການໃດໜຶ່ງ ໂດຍພິຈາລະນາເຖິງ ເງື່ອນໄຂເຈາະຈົງ ດ້ານ ສິ່ງແວດລ້ອມ, ສັງຄົມ, ວັດທະນາທຳ, ຕະຫຼາດ ແລະ ນະໂຍບາຍ (ຫຼັກການທີ 12).

## 5.3. ການຄົ້ນຄວ້າ ແລະ ການຮຽນຮູ້ຕໍ່ເນື່ອງ

ການຮຽນຮູ້ ແລະ ການຄົ້ນຄວ້າຕໍ່ເນື່ອງ ແມ່ນມີຄວາມຈຳເປັນ ສຳລັບການສ້າງຄວາມຮູ້ດ້ານ ກະສິກຳປ່າໄມ້ ບໍ່ສະເພາະແຕ່ເພື່ອ ສະໜັບສະໜູນ ຄວາມພະຍາຍາມ ໃນການຂະຫຍາຍ ວິທີປະຕິບັດທີ່ດີສຸດ ເທົ່ານັ້ນ ແຕ່ຍັງແມ່ນເພື່ອ ສົ່ງເສີມໃຫ້ສາມາດປັບປຸງ ເທັກໂນໂລຢີ

ແລະ ວິທີປະຕິບັດ ດ້ານກະສິກຳປ່າໄມ້ ທີ່ມີຢູ່ແລ້ວນັ້ນ ເພື່ອແກ້ໄຂ ການປ່ຽນແປງ ໃນສະພາບການທ້ອງຖິ່ນ ເຊິ່ງຮວມທັງ ການປ່ຽນແປງສະພາບອາກາດ ໃນອະນາຄົດ ແລະ ຜົນກະທົບຈາກປັດໄຈພາຍນອກ (ຫຼັກການທີ 3, 12). ການບັນທຶກ ແລະ ການສັງລວມ ຜົນສຳເລັດ ແລະ ຂໍ້ຜິດພາດຈາກ ຕົວແບບກະສິກຳປ່າໄມ້ ໃນຜ່ານມາ ແລະ ໃນປະຈຸບັນນີ້ ແມ່ນເປັນຈຸດເລີ່ມຕົ້ນທີ່ດີ ເພື່ອຈັດບູລິມະສິດຂອງການຄົ້ນຄວ້າ ໃນຫຼາຍໆດ້ານຂອງ ວຽກງານກະສິກຳປ່າໄມ້. ການຄົ້ນຄວ້າ ຄວນທັນທີດທາງໄສ່ ການປະຕິບັດງານ ແລະ ດຳເນີນຂຶ້ນ ໃນຮູບແບບ ຮຽນຮູ້ຮ່ວມກັນ ແລະ ມີສ່ວນຮ່ວມກັບ ພາກສ່ວນກ່ຽວຂ້ອງຕ່າງໆ. ສ່ວນໜຶ່ງຂອງຂັ້ນຕອນວາງແຜນການນັ້ນ ອາດເປັນການລະບຸຕົວ ສະຖາບັນຄົ້ນຄວ້າ ແລະ ສະຖາບັນການສຶກສາ ທີ່ກ່ຽວຂ້ອງກັບ ການຄົ້ນຄວ້າກະສິກຳປ່າໄມ້ ຫຼື ຕ້ອງການເປັນສະຖາບັນ ຄົ້ນຄວ້າກະສິກຳປ່າໄມ້, ແລະ ສັງລວມເອົາ ການຊ່ວຍເຫຼືອຂອງສະຖາບັນເຫຼົ່ານີ້ ເພື່ອດຳເນີນວຽກງານ ຢ່າງມີການປະສານງານກັນ ເພື່ອຮັບປະກັນ ການເສີມສ້າງເຊິ່ງກັນແລະກັນ ບໍ່ແມ່ນການຄົ້ນຄວ້າທັບຊ້ອນກັນ. ການສ້າງຫຼັກສູດກະສິກຳປ່າໄມ້ ຄວນໄດ້ຮັບການສະໜັບສະໜູນ ເພື່ອຮັບປະກັນວ່າ ວຽກງານກະສິກຳປ່າໄມ້ ໄດ້ສອນຢູ່ໃນ ສະຖາບັນການສຶກສາຊັ້ນສູງ ໂດຍສານຕໍ່ວຽກງານຂອງ ຕາໜ່າງອາຊີຕາເວັນອອກສ່ຽງໃຕ້ ສຳລັບ ການສຶກສາດ້ານກະສິກຳປ່າໄມ້ ເຊິ່ງ ສູນກະສິກຳປ່າໄມ້ໂລກ ໄດ້ສ້າງຕັ້ງຂຶ້ນມາແລ້ວ ໃນທ້າຍຊຸມປີ 1990 ດ້ວຍທຶນຈາກ ອົງການພັດທະນາສາກົນ ປະເທດສະວີດ, ພ້ອມທັງ ຕາໜ່າງການສຶກສາຊັ້ນສູງອື່ນໆ ທີ່ມີຢູ່ແລ້ວໃນພາກພື້ນນີ້. ຄວາມພະຍາຍາມດັ່ງກ່າວນັ້ນ ຄວນໃຫ້ສອດຄ່ອງກັບ ເປົ້າໝາຍລວມຂອງ ສູນພາກພື້ນອາຊີຕາເວັນອອກສ່ຽງໃຕ້ ເພື່ອການສຶກສາແລະຄົ້ນຄວ້າ ກະສິກຳ ຂອງບັນດາລັດຖະມົນຕີສຶກສາອາຊີຕາເວັນອອກສ່ຽງໃຕ້.

## 5.4. ການຕິດຕາມ ແລະ ປະເມີນຜົນ

ເນື່ອງຈາກວ່າ ວຽກງານກະສິກຳປ່າໄມ້ ມີທ່າແຮງສູງ ໃນການປະກອບສ່ວນໃຫ້ ເປົ້າໝາຍຂອງການປະກອບສ່ວນແຫ່ງຊາດ ທີ່ໄດ້ກຳນົດໄວ້ແລ້ວ, ເປົ້າໝາຍ ປັບປຸງດິນເຊື່ອມໂຊມສະພາບ, ເປົ້າໝາຍຄ້ຳປະກັນສະບຽງອາຫານ, ແລະ ເປົ້າໝາຍ ແລະ ຍຸດທະສາດອື່ນໆ ທີ່ ວຽກງານກະສິກຳປ່າໄມ້ ມີທ່າແຮງ ສູງທີ່ຈະປະກອບສ່ວນໃຫ້ໄດ້, ສະນັ້ນ ບັນດາປະເທດສະມາຊິກອາຊຽນ ສາມາດກວມເອົາ ວຽກງານກະສິກຳປ່າໄມ້ ເຂົ້າໃນແຜນການ ຕິດຕາມ, ລາຍງານ ແລະ ປະເມີນຜົນ ຂອງພວກເຂົາ.

ຂັ້ນຕອນຕິດຕາມໃດໜຶ່ງ ຄວນຮັບປະກັນວ່າ ຫຼັກການຂ້າງລຸ່ມນີ້ ໄດ້ຮັບພິຈາລະນາ ໃນແຜນງານກະສິກຳປ່າໄມ້:

1) ການຮຽນຮູ້ຕໍ່ເນື່ອງ: ແຜນງານນັ້ນ ຄວນນຳໃຊ້ຂັ້ນຕອນ ຮັບເອົາຄຳຄິດເຫັນ ແລະ ແຈ້ງພາກສ່ວນກ່ຽວຂ້ອງ. ແຜນງານນີ້ ຄວນປັບປ່ຽນໄດ້ ໃນການຮັບເອົາຄຳຄິດເຫັນ ເພື່ອປັບປຸງວຽກງານຂອງມັນ.
2) ການຕິດຕາມແບບມີສ່ວນຮ່ວມ ແລະ ເປັນມິດກັບຜູ້ຊົມໃຊ້: ການພັດທະນາເຄື່ອງມືຕິດຕາມ ທີ່ດີສຸດນັ້ນ ແມ່ນໃຫ້ມີສ່ວນຮ່ວມ ເພື່ອຮັບປະກັນ ຄວາມເປັນມິດກັບຜູ້ຊົມໃຊ້.
3) ສ້າງຄວາມສາມາດຂອງພາກສ່ວນກ່ຽວຂ້ອງ: ການເຂົ້າມີສ່ວນຮ່ວມນັ້ນ ຕ້ອງການໃຫ້ມີ ທັກສະ ແລະ

ຄວາມສາມາດ ດ້ານວິຊາການ, ດ້ານສັງຄົມ ແລະ ດ້ານການເງິນ. ການສ້າງຄວາມສາມາດເລົ່ານີ້ ສາມາດເພີ່ມການມີສ່ວນຮ່ວມ ຂອງພາກສ່ວນກ່ຽວຂ້ອງ ໃນການຕິດຕາມ ໂດຍສະເພາະແມ່ນ ບັນດາອົງກອນກະສິກອນ ແລະ ສະຫະກອນ ແລະ ກຸ່ມຜູ້ຊົມໃຊ້ປ່າໄມ້.

ໃນລະດັບອາຊຽນ, ການຕິດຕາມ ຂອບວຽກນີ້ ໂດຍປະເທດສະມາຊິກນັ້ນ ຄວນໃຫ້ ຂະແໜງການອາຫານ, ກະສິກຳ ແລະ ປ່າໄມ້ ຂອງອາຊຽນ ເປັນພາກສ່ວນປະສານງານ ໂດຍນຳໃຊ ເຄື່ອງມືຕິດຕາມຕ່າງໆ ເຊິ່ງອາຊຽນ ໄດ້ຮັບຮອງເອົາແລ້ວ ເຊັ່ນວ່າ ການຕິດຕາມ ການຄໍ້າປະກັນສະບຽງອາຫານ, ສິ່ງແວດລ້ອມ ແລະ ການປ່ຽນແປງສະພາບອາກາດ ຂອງອາຊຽນ. ປະເທດສະມາຊິກ ສາມາດນຳໃຊ້ ຂອບວຽກຫຼາຍຂະແໜງການ ຂອງອາຊຽນ ກ່ຽວກັບ ການປ່ຽນແປງສະພາບອາກາດ: ກະສິກຳ ແລະ ປ່າໄມ້ ເພື່ອຄວາມໝັ້ນຄົງດ້ານສະບຽງອາຫານ ເພື່ອຕິດຕາມ ແລະ ປະເມີນ ຄຳແນະນຳຕ່າງໆ ໂດຍສະເພາະແມ່ນ ກ່ຽວກັບ ການຮ່ວມມືຫຼາຍຂະແໜງການ ພາຍໃນປະເທດສະມາຊິກ.

ອົງການອາຫານ ແລະ ການກະເສດ ອາດພິຈາລະນາ ຕິດຕາມ ແລະ ປະເມີນຜົນ ຄວາມຄືບໜ້າຂອ ການຈັດຕັ້ງປະຕິບັດ ຄຳແນະນຳສະບັບນີ້ ໂດຍບັນດາປະເທດສະມາຊິກອາຊຽນ ໃນທາງດ້ານ ຖານຂໍ້ມູນໂລກ ກ່ຽວກັບ ປ່າປົກຄຸມ ແລະ ຕົ້ນໄມ້ນອກປ່າ.

## 5.5. ການຄຸ້ມຄອງຄວາມຮູ້

ໜຶ່ງໃນຫຼາຍປະເດັນ ທີ່ໄດ້ຖືກຍົກຂຶ້ນມາ ໃນການພັດທະນາ ກະສິກຳປ່າໄມ້ ກໍ່ແມ່ນການຂາດເຂີນ ແຫຼ່ງຂໍ້ມູນ ແລະ ແຫຼ່ງຄວາມຮູ້ ໃນບັນດາປະເທດສະມາຊິກອາຊຽນ. ສິ່ງດັ່ງກ່າວນີ້ ຕິດພັນກັບ ບໍ່ສະເພາະແຕ່ ການຂາດເຂີນ ການຄົ້ນຄວ້າ ແລະ ການພັດທະນາ ກ່ຽວກັບ ກະສິກຳປ່າໄມ້ ໃນປະເທດສະມາຊິກອາຊຽນ ເທົ່ານັ້ນ ແຕ່ຍັງເປັນຍ້ອນວ່າ ຄວາມຮູ້ກ່ຽວກັບກະສິກຳປ່າໄມ້ ມັກຈະມີຢູ່ພຽງແຕ່ ບົດຄວາມວິທະຍາສາດ ເຊິ່ງບໍ່ມີພ້ອມໃຊ້ ສຳລັບ ບັນດາຜູ້ສ້າງແລະວາງແຜນນະໂຍບາຍ. ສຳລັບ ຫຼັກການທີ 13 ນັ້ນ, ຄວາມຮູ້ກ່ຽວກັບ ກະສິກຳປ່າໄມ້ ຕ້ອງໄດ້ຮັບການຖ່າຍທອດ ຢ່າງມີປະສິດທິພາບ ແຕ່ວ່າ ມັນບໍ່ສາມາດ ຄຸ້ມຄອງ ແລະ ຖ່າຍທອດໄດ້ຢ່າງມີປະສິດທິພາບ ຖ້າຫາກບໍ່ແຕ່ງຕັ້ງຄວາມຮັບຜິດຊອບ ໃຫ້ພາກສ່ວນທີ່ເໝາະສົມ. ສະນັ້ນ, ມັນສຳຄັນທີ່ ບັນດາປະເທດສະມາຊິກອາຊຽນ ຕ້ອງສ້າງສະຖານທີ່ ເພື່ອຄຸ້ມຄອງ ຄວາມຮູ້ກ່ຽວກັບ ກະສິກຳປ່າໄມ້ ໃຫ້ມີປະສິດທິພາບ ແລະ ຮັບປະກັນວ່າ ຜູ້ຊົມໃຊ້ຈາກຫຼາຍພາກສ່ວນ ສາມາດເຂົ້າຊົມໃຊ້ ຄວາມຮູ້ດັ່ງກ່າວນັ້ນ. ໜ້າທີ່ຂອງສະຖານທີ່ດັ່ງກ່າວນີ້ ຈະແມ່ນການເກັບກຳ ແລະ ຈັດປະເພດ ຄວາມຮູ້ກ່ຽວກັບ ກະສິກຳປ່າໄມ້, ສ້າງໂຄງລາງພື້ນຖານ ເທັກໂນໂລຢີຄວາມຮູ້ ເຊັ່ນວ່າ ເວບໄຊ໌ ແລະ ຕິດຕາມການນຳໃຊ້ (ຕິດພັນກັບ ການຕິດຕາມແລະປະເມີນຜົນ ໃນພາກທີ 5.4). ການຄຸ້ມຄອງຄວາມຮູ້ ກ່ຽວກັບ ກະສິກຳປ່າໄມ້ ແມ່ນໜ້າວຽກໜຶ່ງ ທີ່ ສະຖາບັນໃດໜຶ່ງ ທີ່ໄດ້ຮັບມອບໝາຍ ຫຼື ຫາກໍ່ສ້າງຕັ້ງຂຶ້ນມາໃໝ່ ສາມາດປະຕິບັດໄດ ຕາມຫຼັກການທີ 1. ໜ້າວຽກນີ້ ສາມາດແບ່ງປັນໃຫ້ ເຈົ້າຂອງຄວາມຮູ້ ແລະ ຕົວກາງຄວາມຮູ້ ເຊັ່ນວ່າ ສະຖາບນຄົ້ນຄວ້າ ແລະ ການສຶກສາ ແລະ ບັນດາອົງການຈັດຕັ້ ງທີ່ບໍ່ສັງກັດລັດ.

# ເອກະສານຊ້ອນທ້າຍ 1. ການສ້າງ ຄໍາແນະນໍາ ສະບັບນີ້

ແນວຄວາມຄິດ ໃນການພັດທະນາ ຄໍາແນະນໍາ ສໍາລັບ ການພັດທະນາ ກະສິກໍາປ່າໄມ້ ໃນພາກພື້ນອາຊຽນ ໄດ້ເກີດມາຈາກ ການສົນທະນາຫຼາຍຄັ້ງ ນັບແຕ່ປີ 2015 ລະຫວ່າງ ບັນດາຄູ່ຮ່ວມງານ ໃນ ໂຄງການຮ່ວມມື ອາຊຽນ-ສະວິດ ກ່ຽວກັບ ປ່າໄມ້ສັງຄົມ ແລະ ການປ່ຽນແປງສະພາບອາກາດ, ຄະນະວິຊາການ ປ່າໄມ້ສັງຄົມ ອາຊຽນ ແລະ ພະແນກ ອາຫານ, ກະສິກໍາ ແລະ ປ່າໄມ້ ຂອງກອງເລຂາອາຊຽນ ເຊິ່ງເກີດຂຶ້ນພ້ອມກັບ ການຮັບຮອງເອົາ ວິໄສທັດ ແລະ ແຜນຍຸດທະສາດ ສໍາລັບ ການຮ່ວມມືຂອງອາຊຽນ ທາງດ້ານອາຫານ, ກະສິກໍາ ແລະ ປ່າໄມ້ 2016–2025. ໂດຍສະເພາະແລ້ວ, ແຜນການນັ້ນ ໄດ້ລະບຸວ່າ ວຽກງານກະສິກໍາປ່າໄມ້ ເປັນໜຶ່ງໃນ ແຜນປະຕິບັດງານ ເພື່ອບັນລຸ ການຄໍ້າປະກັນສະບຽງອາຫານ ໃນທ່າມກາງ ການປ່ຽນແປງຂອງສະພາບອາກາດ. ເຖິງແມ່ນວ່າ ພາລະບົດບາດ ແລະ ການປະກອບສ່ວນ ຂອງວຽກງານ ກະສິກໍາປ່າໄມ້ ໃນຂົງເຂດເລົ່ານີ້ ເປັນທີ່ຮັບຮູ້ເພີ່ມຂຶ້ນເລື້ອຍໆ ໃນຍຸດທະສາດ ແລະ ແຜນປະຕິບັດງານແຫ່ງຊາດ ທີ່ກ່ຽວຂ້ອງກັບ ການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ, ການປ່ຽນແປງສະພາບອາກາດ, ການຂະຫຍາຍຕົວ "ສີຂຽວ" ແລະ ການພັດທະນາຢ່າງຍືນຍົງ, ແຕ່ວ່າ ການຈັດຕັ້ງປະຕິບັດນັ້ນ ພົບກັບບັນຫາທ້າທາຍ ຍ້ອນວ່າ ວຽກງານກະສິກໍາປ່າໄມ້ ຍັງ ບໍ່ທັນມີໜ່ວຍງານຮັບຜິດຊອບໂດຍກົງ. ການສຶກສາຄົ້ນຄວ້າຫຼາຍຢ່າງ ໄດ້ໃຫ້ຮູ້ວ່າ ນອກຈາກ ການຕັດສິນໃຈຂອງກະສິກອນ ແລະ ບັນຫາທ້າທາຍໃນລະດັບການຜະລິດ ແລ້ວ, ອຸປະສັກຕົ້ນຕໍ ກໍ່ແມ່ນການຂາດ ນະໂຍບາຍຈະແຈ້ງ ແລະ ກົນໄກໃຫ້ບໍລິການ ໃນບັນດາປະເທດສະມາຊິກອາຊຽນ. ເພື່ອແກ້ໄຂ ປະເດັນດັ່ງກ່າວນີ້, ອໍານາດການປົກຄອງໃດໜຶ່ງ ທີ່ໃຫ້ການຊີ້ນໍາໃນລະດັບອາຊຽນ ສໍາລັບ ວຽກງານກະສິກໍາປ່າໄມ້ ແມ່ນຖືວ່າ ຈໍາເປັນຕ້ອງໄດ້ສ້າງຕັ້ງຂຶ້ນມາ ເພື່ອສ້າງຫຼັກການ ແລະ ຄໍາແນະນໍາ ທີ່ອາດສະໜັບສະໜູນ ການສ້າງນະໂຍບາຍ, ແຜນງານ ແລະ ການລົງທຶນ ດ້ານກະສິກໍາປ່າໄມ້ ໃຫ້ໄດ້ໄວຂຶ້ນ.

ໃນກອງປະຊຸມພາກສ່ວນກ່ຽວຂ້ອງ ຄັ້ງທໍາອິດ ເຊິ່ງຈັດຂຶ້ນທີ່ແຂວງຊຽງໃໝ່ ປະເທດໄທ ໃນເດືອນມິຖຸນາ 2016 ນັ້ນ, ໄດ້ຕົກລົງເຫັນດີກັນ ໃຫ້ສ້າງຄໍາແນະນໍາ ໃຫ້ກວມລວມທົ່ວເຖິງຫຼາຍທີ່ສຸດ ເຊິ່ງກວມເອົາ ບັນດານັກຄົ້ນຄວ້າ, ນັກຮຽນຝຶກງານ, ຄູອາຈານ, ຜູ້ວາງແຜນ, ຜູ້ປະຕິບັດ ແລະ ຜູ້ສ້າງນະໂຍບາຍ. ນອກຈາກນັ້ນແລ້ວ, ຍັງໄດ້ຕົກລົງເຫັນດີວ່າ ຄໍາແນະນໍານັ້ນ ຕ້ອງໜ້າເຊື່ອຖື ແລະ ເປັນພາສາແລະຮູບແບບ ທີ່ເຂົ້າໃຈງ່າຍ ໂດຍບໍ່ໃຫ້ມີລາຍລະອຽດຫຼາຍໂພດ ເພື່ອເປີດທາງໃຫ້ ການສ້າງສັນ ແລະ ການສ້າງນະວັດຕະກໍາ ໃນເວລາຈັດຕັ້ງປະຕິບັດ. ນັບແຕ່ເດືອນມິຖຸນາ 2017, ຂັ້ນຕອນກວມລວມຫຼາຍພາກສ່ວນກ່ຽວຂ້ອງ ໄດ້ດໍາເນີນຂຶ້ນ ໂດຍກວມເອົາ ວຽກງານດັ່ງລຸ່ມນີ້:

1) ການປຶກສາຫາລືກັບພາກສ່ວນກ່ຽວຂ້ອງ ໂດຍມີຜູ້ເຂົ້າຮ່ວມ ປະມານ 245 ຄົນ ຈາກບັນດາປະເທດສະມາຊິກອາຊຽນ ເຊິ່ງຮວມທັງ ຜູ້ສ້າງນະໂຍບາຍ, ກຸ່ມກະສິກອນ ແລະ ສະຫະກອນ, ກຸ່ມຄຸ້ມຄອງປ່າໄມ້ຊຸມຊົນ, ຜູ້ປະຕິບັດງານ ແລະ ນັກຄົ້ນຄວ້າ ໃນກອງປະຊຸມສຳມະນາ ຄັ້ງທີ 7 ຂອງ ຄະນະວິຊາການ ປ່າໄມ້ສັງຄົມ ອາຊຽນ ທີ່ແຂວງຊຽງໃໝ່ ປະເທດໄທ ລະຫວ່າງວັນທີ 12-14 ມິຖຸນາ 2017. ການປຶກສາຫາລືນັ້ນ ໄດ້ເນັ້ນໜັກໃສ່ ຈຸດປະສົງ ແລະ ເນື້ອໃນທົ່ວໄປຂອງ ຄຳແນະນຳສະບັບນີ້.

2) ການນຳສະເໜີ ແລະ ການຮັບຮອງເອົາ ເອກະສານແນວທາງ ເພື່ອພັດທະນາ ຄຳແນະນຳ ໃນກອງປະຊຸມປະຈຳປີ ຄັ້ງທີ 11 ຂອງ ຄະນະວິຊາການ ປ່າໄມ້ສັງຄົມ ອາຊຽນ ທີ່ແຂວງຊຽງໃໝ່ ປະເທດໄທ ໃນວັນທີ 15 ມິຖຸນາ 2017.

3) ການສົ່ງແຜນວຽກ ສຳລັບ ການພັດທະນາຄຳແນະນຳ ໃຫ້ກອງເລຂາຂອງ ຄະນະວິຊາການ ປ່າໄມ້ສັງຄົມ ອາຊຽນ ໃນເດືອນມິຖຸນາ 2017.

4) ການກະກຽມ ຮ່າງເອກະສານເບື້ອງຕົ້ນ ສຳລັບ ຄຳແນະນຳ ເຊິ່ງກະກຽມໂດຍ ICRAF ແລະ ອົງການອາຫານ ແລະ ການກະເສດ ແຕ່ເດືອນມິຖຸນາ ເຖິງ ເດືອນສິງຫາ 2017.

5) ການກະກຽມ ຮ່າງເອກະສານສະບັບທຳອິດ ແຕ່ເດືອນສິງຫາ ເຖິງເດືອນທັນວາ 2017.

6) ການທວນຄືນ ຮ່າງເອກະສານສະບັບທຳອິດ ໂດຍບັນດາຄູ່ຮ່ວມງານຂອງ ໂຄງການຮ່ວມມື ອາຊຽນ-ສະວິດ ກ່ຽວກັບ ປ່າໄມ້ສັງຄົມ ແລະ ການປ່ຽນແປງສະພາບອາກາດ ແລະ ອົງການອາຫານ ແລະ ການກະເສດ ແຕ່ເດືອນທັນວາ 2017 ເຖິງເດືອນມັງກອນ 2018.

7) ການທວນຄືນ ຮ່າງເອກະສານສະບັບທຳອິດ ໂດຍບັນດາຊ່ຽວຊານດ້ານ ກະສິກຳປ່າໄມ້ ເຊິ່ງຮວມທັງ ຄະນະຊ່ຽວຊານແມ່ນ້ຳຂອງ ດ້ານ ກະສິກຳປ່າໄມ້ສຳລັບຄວາມໝັ້ນຄົງດ້ານ ສະບຽງອາຫານ ແລະ ໂພຊະນາການ, ກະສິກຳຍືນຍົງ ແລະ ຟື້ນຟູດິນ ແລະ ບັນດາຄະນະສະເພາະກິດ ຂອງຄະນະວິຊາການ ປ່າໄມ້ສັງຄົມ ອາຊຽນ ພາຍໃນ ແລະ ພາຍນອກພາກພື້ນນີ້ ໃນວັນທີ 26 ມັງກອນ 2018.

8) ການກະກຽມຮ່າງເອກະສານ ສະບັບທີສອງ, ເດືອນມັງກອນ-ກຸມພາ 2018.

9) ການທວນຄືນ ຮ່າງເອກະສານສະບັບທີສອງ ໂດຍຄະນະວິຊາການຂະແໜງການ ຂອງອາຊຽນ, ເດືອນກຸມພາ-ມີນາ 2018.

10) ການທວນຄືນ ຮ່າງເອກະສານສະບັບທີສອງ ໂດຍບັນດາຄະນະສະເພາະກິດ ຂອງຄະນະວິຊາການ ປ່າໄມ້ສັງຄົມ ອາຊຽນ ໃນເດືອນກຸມພາ-ເມສາ 2018.

11) ສະຫຼຸບ ຮ່າງເອກະສານສະບັບທີສອງ, ເດືອນເມສາ-ພຶດສະພາ 2018.

12) ສົນທະນາ ແລະ ສະຫຼຸບ ໃນກອງປະຊຸມຄັ້ງທີ 12 ຂອງ ຄະນະວິຊາການ ປ່າໄມ້ສັງຄົມ ອາຊຽນ ຢູ່ທີ່ເມືອງດານັງ, ປະເທດຫວຽດນາມ, ເດືອນມິຖຸນາ 2018.

# ເອກະສານຊ້ອນທ້າຍ 2. ກະດາດຂາວ:

## ກະສິກຳປ່າໄມ້: ປະກອບສ່ວນໃຫ້ ການຄ້ຳປະກັນສະບຽງອາຫານ ແລະ ການປັບຕົວ ແລະ ການຫຼຸດຜ່ອນ ການປ່ຽນແປງສະພາບອາກາດ ໃນອາຊີຕາເວັນອອກສ່ຽງໃຕ້[12]




ອາຊີຕາເວັນອອກສ່ຽງໃຕ້ ກຳລັງຂະຫຍາຍຕົວທາງເສດຖະກິດ ໃນອັດຕາສະເລ່ຍ 5,7% ຂອງ ລວມຍອດຜະລິດ ຕະພັນ ພາຍໃນ ແລະ ໄດ້ບັນລຸ ເປົ້າໝາຍສະຫັດສະວັດດ້ານການພັດທະນາ ໃນການຫຼຸດຜ່ອນ ຈຳນວນປະຊາຊົນອຶດຫິວ ໄດ້ເຖິງເຄິ່ງໜຶ່ງ. ເຖິງແມ່ນວ່າ ມັນເປັນການບັນລຸຜົນ ທີ່ໜ້າສັນລະເສີນ ແຕ່ວ່າ ຍັງມີປະຊາຊົນ 60 ລ້ານຄົນ (>10% ຂອງຈຳນວນປະຊາກອນລວມ) ຍັງບໍ່ສາມາດຄ້ຳປະກັນສະບຽງອາຫານໄດ້. ການຂະຫຍາຍຕົວຢ່າງໄວວາ ປະກອບກັບ ການເຊື່ອມໂຊມຂອງດິນ

12 The Agroforestry white paper highlights the evolving concepts of agroforestry, agroforestry practices adopted in Southeast Asia, contributions to food security, income, water regulation, climate change adaptation and mitigation, issues and challenges, policy challenges, and a call for action by ASEAN Member States.

ແລະ ປ່າໄມ້ ອາດເຮັດໃຫ້ ຫຼາຍປະເທດໃນພາກພື້ນນີ້ ບໍ່ສາມາດສະໜອງອາຫານໃຫ້ປະຊາກອນຂອງຕົນໄດ້ພຽງພໍໃນອະນາຄົດ.

ການປ່ຽນແປງສະພາບອາກາດ ແມ່ນເປັນໄພອັນຕະລາຍເພີ້ມຕື່ມໃຫ້ດ້ານສະໜອງອາຫານ. ໂດຍອີງຕາມບົດລາຍງານປະເມີນຜົນ ຄັ້ງທີ 4 ຂອງຄະນະລະຫວ່າງລັດຖະບານກ່ຽວກັບ ການປ່ຽນແປງສະພາບອາກາດ, ອາຊີຕາເວັນອອກສ່ຽງໃຕ້ຄາດວ່າຈະໄດ້ຮັບຜົນກະທົບຮຸນແຮງຈາກການປ່ຽນແປງຂອງສະພາບອາກາດຍ້ອນວ່າ ເສດຖະກິດສ່ວນຫຼາຍ ອາໃສກະສິກຳ ແລະ ຊັບພະຍາກອນ ທຳມະຊາດ.

ກະສິກຳປ່າໄມ້ ເຊິ່ງເປັນວິທີປະຕິບັດໂດຍການນຳໃຊ້ຕົ້ນໄມ້ປູກ ແລະ ການເຊື່ອມສານລະຫວ່າງປ່າໄມ້ແລະກະສິກຳໃຫ້ເປັນສ່ວນໜຶ່ງຂອງ ພື້ນທີ່ປ່າທີ່ເຮັດໜ້າທີ່ຫຼາຍດ້ານນັ້ນ ສາມາດໃຫ້ຜົນປະໂຫຍດຫຼາຍຢ່າງທາງດ້ານເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ. ໃນເວລາປຽບທຽບທົ່ວໂລກ, ອາຊີຕາເວັນອອກສ່ຽງໃຕ້ ມີພື້ນທີ່ກັບເກັບອາຍກັກກບ່ອນຊີວະພາບ ສູງສຸດ (ຕໍ່ເຮັກຕາ) ຢູ່ໃນພື້ນທີ່ດິນກະສິກຳ ໃນທຸກໆພາກພື້ນເຊິ່ງມີທ່າອ່ຽງເພີ້ມຂຶ້ນ (ອາຍກັກກບ່ອນ 60 ໂຕນຕໍ່ເຮັກຕາ ໃນປີ 2000 ແລະ 65 ໂຕນຕໍ່ເຮັກຕາ ໃນປີ 2010).

ກະສິກອນ ໃນສ່ວນຕ່າງໆຂອງພາກພື້ນນີ້ ໄດ້ປັບຕົວຮັບເອົາ ລະບົບ ແລະ ວິທີດ້ານກະສິກຳປ່າໄມ້ທີ່ຫຼາກຫຼາຍ ເຊິ່ງເປັນການເພີ້ມຜົນຜະລິດຂອງພື້ນທີ່ປູກ ແລະ ຊ່ວຍຮັບປະກັນສະບຽງອາຫານ, ລາຍຮັບ ແລະ ຄວາມຕ້ອງການພື້ນຖານອື່ນໆ. ໃນເວລາດຽວກັນນັ້ນ, ອາຍກັກກບ່ອນຈຳນວນຫຼາຍກໍ່ຖືກຕົ້ນໄມ້ດູດຊຶມເອົາໃນລະບົບກະສິກຳປ່າໄມ້ ເຊິ່ງເປັນການປະກອບສ່ວນຫຼຸດຜ່ອນການປ່ຽນແປງສະພາບອາກາດ, ແລະ ປ່າໄມ້ ແລະ ຕົ້ນໄມ້ ກໍ່ເປັນ “ແອເຢັນ” ໃຫ້ແວດລ້ອມອ້ອມຮັບມັນ ໂດຍການນຳເອົານ້ຳ ກັບຄືນສູ່ຊັ້ນບັນຍາກາດ. ແຕ່ເຖິງຢ່າງໃດກໍ່ຕາມ, ການຮັບເອົາວຽກງານກະສິກຳປ່າໄມ້ ຍັງຄົງມີຈຳກັດຍ້ອນມີຫຼາຍອຸປະສັກ ແລະ ບັນຫາທ້າທາຍ ໂດຍສະເພາະແມ່ນການຂາດ ພາກສ່ວນປົກຄອງ ແລະ ຂາດການສະໜັບສະໜູນ ດ້ານນະໂຍບາຍໃຫ້ວຽກງານກະສິກຳປ່າໄມ້. ເພື່ອເຮັດໃຫ້ທ່າແຮງຂອງວຽກງານ ກະສິກຳປ່າໄມ້ ບັນລຸຜົນເປັນຈິງໃນການຄ້ຳປະກັນສະບຽງອາຫານ ແລະ ການປັບຕົວແລະຫຼຸດຜ່ອນການປ່ຽນແປງສະພາບອາກາດໃນອາຊີຕາເວັນອອກສ່ຽງໃຕ້, ມັນມີຄວາມຈຳເປັນຕ້ອງມີນະໂຍບາຍສະເພາະວຽກງານ ກະສິກຳປ່າໄມ້ ແລະ ກົນໄກປະຕິບັດງານ ທີ່ມີປະສິດທິພາບ.

# ເອກະສານຊ້ອນທ້າຍ 3. ສະພາບການຂອງ ຄຳແນະນຳ ໃນລະດັບສາກົນ

ຄຳແນະນຳ ສະບັບນີ້ ປະຕິບັດຕາມ ສົນທິສັນຍາສາກົນ, ສັນຍາ ແລະ ສົນທິສັນຍາລະຫວ່າງປະເທດ ທັງໝົດ ທີ່ຜູກພັນທາງກົດໝາຍ ແລະ ບໍ່ຜູກພັນທາງກົດໝາຍ, ພ້ອມທັງປະຕິບັດຕາມ ແຜນງານ ແລະ ຂອບວຽກສາກົນ ທີ່ບັນດາປະເທດສະມາຊິກອາຊຽນ ມີພັນທະຜູກມັດ. ສິ່ງເລົ່ານີ້ ປະກອບດ້ວຍ (ແຕ່ບໍ່ໄດ້ຈຳກັດຢູ່ພຽງແຕ່ເທົ່ານັ້ນ):

- 17 ເປົ້າໝາຍພັດທະນາຢ່າງຍືນຍົງ ທີ່ບັນດາຜູ້ນຳໂລກ ໄດ້ຮັບຮອງເອົາ ໃນເດືອນກັນຍາ 2015. ໂດຍສານຕໍ່ຈາກ ຜົນສຳເລັດຂອງ ເປົ້າໝາຍສະຫັດສະວັດດ້ານການພັດທະນາ, ເປົ້າໝາຍເລົ່ານີ້ ກຳລັງລະດົມຄວາມພະຍາຍາມ ເພື່ອກຳຈັດທຸກຮູບແບບຂອງຄວາມທຸກຍາກ, ຕໍ່ສູ້ກັບຄວາມບໍ່ສະເໝີພາບ ແລະ ແກ້ໄຂບັນຫາຂອງການປ່ຽນແປງສະພາບອາກາດ ພ້ອມທັງ ຮັບປະກັນວ່າ "ບໍ່ມີໃຜຖືກປະປ່ອຍໄວ້ເບື້ອງຫຼັງ".
- ຂອບສົນທິສັນຍາຂອງອົງການສະຫະປະຊາຊາດ ວ່າດ້ວຍການປ່ຽນແປງສະພາບອາກາດ (UNFCCC) ມີເປົ້າໝາຍເພື່ອເຮັດໃຫ້ລະດັບຄວາມເຂັ້ມຂຸ້ນຂອງອາຍແກັດເຮືອນແກ້ວ ໃນຊັ້ນບັນຍາກາດມີຄວາມຄົງຕົວ ເພື່ອປ້ອງກັນໄພອັນຕະລາຍຕໍ່ກັບ ລະບົບອາກາດ, ແຕ່ວ່າ ມັນບໍ່ມີຂອບເຂດຜູກມັດ ຫຼື ກົນໄກບັງຄັບໃຊ້ ສຳລັບປະເທດເລົ່ານີ້. ຂອບວຽກນີ້ ໄດ້ກຳນົດວິທີທາງ ເພື່ອການເຈລະຈາ ກ່ຽວກັບ ສົນທິສັນຍາສາກົນສະເພາະດ້ານ (ເອີ້ນວ່າ ອານຸສັນຍາ ຫຼື ຂໍ້ຕົກລົງ) ເພື່ອກຳນົດບາດກ້າວສູ່ຜົນສຳເລັດຕາມຈຸດປະສົງຂອງ UNFCCC.
- ສັນຍາປາຣີ ທີ່ເກີດຈາກ ການເຈລະນາຂອງ UNFCCC ນັ້ນ ແມ່ນມີເປົ້າໝາຍເພື່ອສົ່ງເສີມ ຄວາມພະຍາຍາມໃນທົ່ວໂລກ ເພື່ອຫຼຸດອຸນນະພາບທີ່ກຳລັງເພີ່ມຂຶ້ນນັ້ນ ໃຫ້ໄດ້ 1,5°C ເໜືອລະດັບກ່ອນໄລຍະອຸດສາຫະກຳ, ເພີ່ມຄວາມສາມາດໃນການປັບຕົວ, ສົ່ງເສີມການປັບຕົວກັບສະພາບອາກາດ ແລະ ສົ່ງເສີມການພັດທະນາທີ່ປ່ອຍອາຍພິດໜ້ອຍ ໂດຍບໍ່ໃຫ້ກະທົບກັບ ການຜະລິດອາຫານ ແລະ ສ້າງກະແສການເງິນ ທີ່ສະໜັບສະໜູນ ເປົ້າໝາຍເລົ່ານີ້. ໂດຍນຳໃຊ້ ປັດໄຈປະກອບສ່ວນແຫ່ງຊາດທີ່ໄດ້ກຳນົດໄວ້ແລ້ວ, ປະເທດຕ່າງໆ ໄດ້ສ້າງແຜນງານ ໃຫ້ສອດຄ່ອງກັບ ສະພາບການ,

ຄວາມສາມາດ ແລະ ບູລິມະສິດ ຂອງປະເທດຕົນ.

- ສົນທິສັນຍາວ່າດ້ວຍ ຊີວະນາໆພັນ (CBD) ໄດ້ກຳນົດ ຫຼັກການຕ່າງໆ ທີ່ນຳໃຊ້ໃນການອະນຸລັກ ຊີວະນາໆພັນ, ການນຳໃຊ້ອົງປະກອບຕ່າງໆ ຢ່າງຍືນຍົງ, ການແບ່ງປັນຜົນປະໂຫຍດ ທີ່ຍຸຕິທຳ ແລະ ເທົ່າທຽມກັນ ເຊິ່ງເປັນຜົນປະໂຫຍດທີ່ເກີດຈາກ ການນຳໃຊ້ ແຫຼ່ງເຊື້ອພັນ.
- ສົນທິສັນຍາຂອງ ອົງການສະຫະປະຊາຊາດ ວ່າດ້ວຍ ການຕໍ່ຕ້ານໄພແຫ້ງແລ້ງ (UNCCD) ແມ່ນເປັນຍຸດທະສາດ 10 ປີ (2008–2018) ໂດຍມີເປົ້າໝາຍເພື່ອຫຼຸ່ຼຸດຜ່ອນ ສາຍພົວພັນທົ່ວໂລກ ເພື່ອຟື້ນຟູ ແລະ ປ້ອງກັນ ໄພແຫ້ງແລ້ງ ແລະ ການເຊື່ອມໂຊມຂອງດິນ ແລະ ເພື່ອຫຼຸດຜ່ອນ ຜົນກະທົບຈາກໄພແຫ້ງແລ້ງ ເພື່ອສະໜັບສະໜູນ ການຫຼຸດຜ່ອນຄວາມທຸກ ແລະ ເພື່ອຄວາມຍືນຍົງດ້ານສິ່ງແວດລ້ອມ. ສົນທິສັນຍາ UNCCD ຮ່ວມມືຢ່າງໃກ້ສິດກັບ ສົນທິສັນຍາ CBD ແລະ ສົນທິສັນຍາ UNFCCC ເພື່ອແກ້ໄຂບັນຫາທ້າທາຍທີ່ຊັບຊ້ອນ ໂດຍນຳໃຊ້ ວິທີການແບບເຊື່ອມສານ ແລະ ນຳໃຊ້ຊັບພະຍາກອນທຳມະຊາດ ໃຫ້ໄດ້ດີສຸດ.
- ໂຄງການ Bonn Challenge ແມ່ນເປັນຄວາມພະຍາຍາມໃນທົ່ວໂລກ ເພື່ອຟື້ນຟູ ປ່າເຊື່ອມໂຊມ ແລະ ດິນເຊື່ອມໂຊມ ຈຳນວນ 150 ລ້ານເຮັກຕາ ພາຍໃນປີ 2020 ແລະ 350 ລ້ານເຮັກຕາ ພາຍໃນປີ 2030 ເພື່ອປະຕິບັດ ພັນທະສາກົນຕ່າງໆ ທີ່ມີຢູ່ແລ້ວນັ້ນ ໃຫ້ປາກົດຜົນເປັນຈິງ ເຊິ່ງຮ່ວມທັງ ເປົ້າໝາຍ CBD Aichi Target 15, UNFCCC REDD+, ແລະ ເປົ້າໝາຍຟື້ນຟູດິນເຊື່ອມໂຊມ Rio+20.
- ສົນທິສັນຍາ Ramsar ວ່າດ້ວຍ ເຂດດິນທາມ ແມ່ນເປັນສົນທິສັນຍາລະຫວ່າງລັດຖະບານ ເຊິ່ງກຳນົດຂອບເຂດ ສຳລັບ ການປະຕິບັດງານແຫ່ງຊາດ ແລະ ການຮ່ວມມື ໃນການອະນຸລັກ ແລະ ນຳໃຊ້ ເຂດດິນທາມ ແລະ ຊັບພະຍາກອນຂອງມັນ.
- ຖະແຫຼງການ Rio ວ່າດ້ວຍ ສິ່ງແວດລ້ອມ ແລະ ການພັດທະນາ ໄດ້ກຳນົດລະອຽດ ຫຼັກການຕ່າງໆ ເພື່ອຊີ້ນຳປະເທດຕ່າງໆ ໃນການສ້າງຄວາມສົມດູນ ລະຫວ່າງ ຂໍ້ພິຈາລະນາດ້ານ ສິ່ງແວດລ້ອມ ແລະ ດ້ານການພັດທະນາ ໃນນະໂຍບາຍ ແລະ ການປະຕິບັດງານຕ່າງໆ.
- ຫຼັກຈັນຍາບັນ ວ່າດ້ວຍ ການເກັບ ແລະ ການໂອນຖ່າຍ ສາຍພັນ ແມ່ນເປັນຂອບວຽກສາກົນ ແບບສະໝັກໃຈ ອີກອັນໜຶ່ງ ທີ່ກຳນົດກ່ຽວກັບ ການເກັບ ແລະ ການນຳໃຊ້ ແຫຼ່ງສາຍພັນ ຢ່າງຍືນຍົງ.
- ຄະນະສາກົນ ວ່າດ້ວຍປ່າໄມ້ ໄດ້ສະເໜີ ການປະຕິບັດງານ ເພື່ອການຄຸ້ມຄອງປ່າໄມ້ ຢ່າງຍືນຍົງ.
- ແຜນປະຕິບັດງານສາກົນ ເພື່ອການອະນຸລັກ ແລະ ນຳໃຊ້ ແຫຼ່ງພັນພືດ ຢ່າງຍືນຍົງ ແມ່ນເປັນຂອບວຽກສາກົນ ແບບສະໝັກໃຈ ອີກອັນໜຶ່ງ ທີ່ກຳນົດກ່ຽວກັບ ການອະນຸລັກ ແລະ ນຳໃຊ້ ແຫຼ່ງພັນພືດ ຢ່າງຍືນຍົງ ເພື່ອອາຫານ ແລະ ກະສິກຳ.
- ຖະແຫຼງການສະຫັດສະວັດ ແລະ ເປົ້າໝາຍສະຫັດສະວັດດ້ານການພັດທະນາ ມີເປົ້າໝາຍເພື່ອສົ່ງເສີມ ກຽດສັກສີ ແລະ ຄວາມສະເໝີພາບ

ຂອງມະນຸດ, ລຶບລ້າງຄວາມທຸກຍາກ, ປົກປ້ອງ ສິ່ງແວດລ້ອມ, ສະໜັບສະໜູນ ສິດທິມະນຸດ ແລະ ປະຊາທິປະໄຕ, ສົ່ງເສີມຄວາມສະເໝີພາບຍິງ-ຊາຍ ແລະ ການປົກຄອງທີ່ດີ ແລະ ສ້າງສາຍພົວພັນສາກົນ ເພື່ອການພັດທະນາ.

- ຂອບວຽກ Sendai ເພື່ອການຫຼຸດຜ່ອນ ຄວາມສ່ຽງຕໍ່ໄພພິບັດ (2015–2030) ມີເປົ້າໝາຍເພື່ອບັນລຸ ການຫຼຸດຜ່ອນ ຄວາມສ່ຽງຕໍ່ໄພພິບັດ ແລະ ການສູນເສຍຊີວິດ, ການດຳລົງຊີວິດ ແລະ ສຸຂະພາບ. ຂອບວຽກດັ່ງກ່າວນີ້ ໄດ້ຖືກຮັບຮອງໃນ ກອງປະຊຸມໂລກ ຂອງອົງການສະຫະປະຊາຊາດ ກ່ຽວກັບ ການຫຼຸດຜ່ອນຄວາມສ່ຽງຕໍ່ໄພພິບັດ ໃນເມືອງ Sendai ປະເທດຍີ່ປຸ່ນ ໃນວັນທີ 18 ມີນາ 2015.
- ແຜນຍຸດທະສາດ ປ່າໄມ້ ຂອງ ອົງການສະຫະປະຊາຊາດ (2017-2030) (UNSPF) ແມ່ນເປັນບ່ອນອ້າງອີງໜຶ່ງ ສຳລັບ ວຽກງານທີ່ກ່ຽວຂ້ອງກັບປ່າໄມ້ ຂອງລະບົບອົງການສະຫະປະຊາຊາດ ແລະ ເພື່ອສົ່ງເສີມ ການພົວພັນ, ການຮ່ວມມື ແລະ ການເຊື່ອມສານກັນ ຂອງບັນດາຫ້ອງການຕ່າງໆ ແລະ ຄູ່ຮ່ວມງານຂອງ ອົງການສະຫະປະຊາຊາດ ເພື່ອໃຫ້ປະຕິບັດຕາມ ວິໄສທັດ ແລະ ພາລະກິດ, ພ້ອມທັງ ເປັນຂອບວຽກໜຶ່ງ ເພື່ອສົ່ງເສີມ ການຮ່ວມມື, ຊີ້ນຳ ແລະ ສຸມໃສ່ ວຽກງານຂອງ ສົນທິສັນຍາສາກົນກ່ຽວກັບປ່າໄມ້ (IAF) ແລະ ອົງປະກອບຂອງມັນ.

# ເອກະສານຊ້ອນທ້າຍ 4. ເອກະສານແນະນໍາໃຫ້ ອ່ານ ເພີ່ມຕື່ມ


Burke L, Ranganathan J, Winterbottom R, eds. 2015. *Revaluing ecosystems: pathways for scaling up the inclusion of ecosystem value in decision making*. Washington DC, USA: World Resources Institute.

Catacutan D, McGaw E, Llanza MA, eds. 2014. *In equal measure: a user guide to gender analysis in agroforestry.* Bogor, Indonesia: World Agroforestry Centre (ICRAF) Southeast Asia Regional Program.

Colfer CJP, Achdiawan R, Roshetko JM, Mulyoutami E, Yuliani EL, Mulyana A, Moeliono M, Adnan H, Erni. 2015. The balance of power in household decision-making: encouraging news on gender in Southern Sulawesi. *World Development* 76:147–164.

Coe R, Sinclair F, Barrios E. 2014. Scaling up agroforestry requires research 'in' rather than 'for' development. *Current Opinion in Environmental Sustainability* 6:1877–3435. https://doi.org/10.1016/j.

Delaney M, Roshetko JM. 1999. Field test of carbon monitoring methods for home gardens in Indonesia. In: *Field tests of carbon monitoring methods in forestry projects*. Arlington VA, USA: Winrock International. pp 231–245. http://www.worldagroforestry.org/region/sea/publications/detail?pubID=4214.

[FAO] Food and Agriculture Organization of the United Nations. 2017. *Agroforestry for landscape restoration: Exploring the potential of agroforestry to enhance the sustainability and resilience of degraded landscapes*. Rome, Italy: Food and Agriculture Organization of the United Nations.

[FAO] Food and Agriculture Organization of the United Nations. 2013. *Advancing agroforestry on the policy agenda: a guide for decision-makers*. Agroforestry Working Paper No.1. Rome, Italy: Food and Agriculture Organization of the United Nations.

[FAO] Food and Agriculture Organization of the United Nations. 2011. *Payments for ecosystem services and food security*. Rome, Italy: Food and Agriculture Organization of the United Nations.

Klapwijk CJ, van Wijk MT, Rosenstock TS, van Asten PJA, Thornton PK, Giller KE. 2014. Analysis of trade-offs in agricultural systems: current status and way forward. *Current Opinion in Environmental Sustainability* 6:110–115. https://www.sciencedirect.com/science/article/pii/S1877343513001607.

Kuyah S, Öborn I, Jonsson M, Dahlin AS, Barrios E, Muthuri C, Malmer A, Nyaga J, Magaju C, Namirembe A, Nyberg Y, Sinclair FL. 2016. Trees in

agricultural landscapes enhance provision of ecosystem services in Sub-Saharan Africa. *International Journal of Biodiversity Science, Ecosystem Services & Management* 12:4:255–273. http://www.tandfonline.com/doi/full/10.1080/21513732.2016.1214178.

Martini E, Roshetko JM, Purnomosidhi P, Tarigan J, Idris N, Zulfadhli T. 2013. Fruit germplasm resources and demands for small-scale farmer's post-tsunami and conflicts in Aceh, Indonesia. *Acta Horticultura (ISHS)* 975:657–664. http://www.actahort.org/books/975/975_82.htm.

Manurung GE, Roshetko JM, Budidarsono S, Kurniawan I. 2008. Dudukuhan tree farming systems in West Java: how to mobilize self-strengthening of community-based forest management? In: Snelder DJ, Lasco R, eds. *Smallholder tree growing for rural development and environmental services. Lessons from Asia*. Advances in Agroforestry vol. 5. Dordrecht, Netherlands: Springer.

Mead DJ. 2004. Agroforestry. In: *Forests and forest plants*. Vol. 1. *Encyclopedia of life science systems*. Oxford, UK: EOLSS Publishers. pp 324–55.

Millennium Ecosystem Assessment. 2005. *Ecosystems and human well-being: synthesis*. Washington DC, USA: Island Press.

Minang PA, van Noordwijk M, Freeman OE, Mbow C, de Leeuw J, Catacutan D, eds. *Climate-smart landscapes: multifunctionality in practice*. Nairobi, Kenya: World Agroforestry Centre (ICRAF).

Nair PVR, Garrity DPN. 2012. *Agroforestry: the future of global land use*. Dordrecht, Netherlands: Springer.

Namirembe S, Leimona B, van Noordwijk M, Minang P, eds. 2017. *Co-investment in ecosystem services: global lessons from payment and incentive schemes.* Nairobi, Kenya: World Agroforestry Centre (ICRAF). http://www.worldagroforestry.org/sd/environmental-services/PES).

Neyra-Cabatac NM, Pulhin JM, Cabanilla DB. 2012. Indigenous agroforestry in a changing context: the case of the Erumanen ne Menuvu in Southern Philippines. *Forest Policy & Economics* 22:18–27.

[OECD] Organization for Economic Co-operation and Development. 2011. *Towards green growth: a summary for policy makers*. Paris, France: Organization for Economic Co-operation and Development.

Orwa C, Mutua A, Kindt R, Jamnadass R, Simons A. 2009. *Agroforestree Database: a tree reference and selection guide. Version 4.0.* Nairobi, Kenya: World Agroforestry Centre (ICRAF). http://www.worldagroforestry.org/output/agroforestree-database.

Perdana A, Budidarsono S, Kurniawan I, Roshetko JM. 2013. Rapid Market Appraisal (RMA). In: van Noordwijk M, Lusiana B, Leimona B, Dewi S, Wulandari D, eds. *Negotiation-support toolkit for learning landscapes*. Bogor, Indonesia: World Agroforestry Centre (ICRAF) Southeast Asia Regional Program. pp 52–54. http://www.worldagroforestry.org/downloads/Publications/PDFS/B17645.pdf.

Roshetko JM, Snelder DJ, Lasco RD, van Noordwijk M. 2008. Future challenge: a paradigm shift in the forestry sector. In: Snelder DJ, Lasco R, eds. *Smallholder tree growing for rural development and*

*environmental services. Lessons from Asia.* Advances in Agroforestry vol. 5. Dordrecht, Netherlands: Springer. pp 453–485.

Roshetko JM, Rohadi D, Perdana A, Sabastian G, Nuryartono N, Pramono AA, Widyani N, Manalu P, Fauzi MA, Sumardamto P, Kusumowardhani N. 2013. Teak agroforestry systems for livelihood enhancement, industrial timber production, and environmental rehabilitation. *Forests, Trees, and Livelihoods* 22 (4):241–256. DOI: 10.1080/14728028.2013.855150.

Van der Wolf J, Gram G, Bukomeko H, Mukasa D, Giller O, Kirabo E, Angebault C, Vaast P, Asare R, Jassogne L. 2017. *The shade tree advice tool.* **CCAFS Info Note.** Copenhagen, Denmark: CGIAR Research Program on Climate Change, Agriculture and Food Security. https://ccafs.cgiar.org/publications/shade-tree-advice-tool#.WjjWDjcxXD4. Tool: http://shadetreeadvice.org/.

Van der Wolf J, Jassogne L, Gram G, Vaast P. 2016. Turning local knowledge on agroforestry into an online decision-support tool for tree selection in smallholders' farms. *Experimental Agriculture* 1–17. http://dx.doi.org/10.10107/S001447971600017X.

Van Noordwijk M. 2005. *RUPES typology of environmental service worthy of reward*. Bogor, Indonesia: World Agroforestry Centre (ICRAF) Southeast Asia Regional Program. http://www.worldagroforestry.org/downloads/Publications/PDFS/wp13952.pdf

Van Noordwijk M, Coe R, Sinclair F. 2016. *Central hypotheses for the third agroforestry paradigm within a common definition.* Working paper 233. Bogor, Indonesia: World Agroforestry Centre (ICRAF) Southeast Asia Regional Program. DOI: http://dx.doi.org/10.5716/WP16079.PDF.

Van Noordwijk M, Mbow C, Minang PA. 2015. *Trees as nexus for Sustainable Development Goals (SDG's): agroforestry for integrated options*. Policy Brief 50. Nairobi, Kenya: ASB Partnership for the Tropical Forest Margins.

Van Noordwijk M, Tata HL, Xu J, Dewi S, Minang PA. 2012. Segregate or integrate for multifunctionality and sustained change through rubber-based agroforestry in Indonesia and China. In: Nair PVR, Garrity DPN. *Agroforestry: the future of global land use.* Dordrecht, Netherlands: Springer. pp 69–104.

Visco R. 2011. *National case study on agroforestry policy in the Philippines.* Final report. Rome, Italy: Food and Agriculture Organization of the United Nations.

Wangpakapattanawong P, Finlayson R, Öborn I, Roshetko JM, Sinclair F, Shono K, Borelli S, Hillbrand A, Conigliaro M. 2017. *Agroforestry in rice-production landscapes in Southeast Asia: a practical manual.* Bangkok, Thailand: Food and Agriculture Organization of the United Nations Regional Office for Asia and the Pacific, Bogor, Indonesia: World Agroforestry Centre (ICRAF) Southeast Asia Regional Program.

Zomer RJ, Neufeldt H, Xu J, Ahrends A, Bossio D, Trabucco A, van Noorwijk M, Wang M. 2016. Global tree cover and biomass carbon on agricultural land: the contribution of agroforestry to global and national carbon budgets. *Scientific Reports* 6:1–12.


BHINNEKA TUNGGAL IKA
BERSEKUTU
BERTAMBAH MUTU
REPUBLIKA NG PILIPINAS
MAJULAH SINGAPURA
VIỆT NAM

asean

World Agroforestry

AWG-SF
ASEAN Working Group on Social Forestry

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development
and Cooperation SDC

www.asean.org ASEAN ASEAN @ASEAN ASEAN